## ພາກ C

# ທັກສະ ການອຳນວຍ ຄວາມສະດວກ



# ບົດຮຽນທີ 5: ສາຍພົວພັນກັບໄວໜຸ່ມ

## ຈຸດປະສົງ

ບັນດາຜູ້ເຂົ້າຮ່ວມ ຈະຮຽນຮູ້ວ່າ ຄວາມເຂົ້າໃຈກ່ຽວກັບການພັດທະນາຂອງໄວໜຸ່ມ,ການສ້າງສາຍພົວພັນທີ່ໝັ້ນແກ່ນ ແລະ ຮູ້ກ່ຽວກັບຂໍ້ຈຳກັດຂອງພວກເຂົາ ແມ່ນທັກສະທີ່ສຳຄັນ ສຳລັບຜູ້ອຳນວຍຄວາມສະດວກ SNYC.

## ເວລາ

30 ນາທີ

## ອຸປະກອນ

- ອັດສຳເນົາ ເອກະສານເຄື່ອງມື ສຳລັບຜູ້ເຂົ້າຮ່ວມແຕ່ລະຄົນ
- ອັດສຳເນົາເອກະສານ
  - » IS 5a: ກໍລະນີສຶກສາ, ໃບທີ 1
  - » IS 5b: ກໍລະນີສຶກສາ, ໃບທີ 2 ສຳລັບຜູ້ເຂົ້າຮ່ວມແຕ່ລະຄົນ

## ບັນດາຜູ້ເຂົ້າຮ່ວມ

ຜູ້ໃຫຍ່ ທີ່ເປັນຜູ້ອຳນວຍຄວາມສະດວກ SNYC 2–3 ຄົນ ຈາກແຕ່ລະ SNYC

## ຜູ້ອຳນວຍຄວາມສະດວກ

ພະນັກງານພາຍໃນປະເທດຂອງອົງການສຸພະນິມິດ ທີ່ໄດ້ເຂົ້າຮ່ວມການຝຶກອົບຮົມ ETIP SNYC

## ຄຳແນະນຳ: ການພັດທະນາ, ສາຍພົວພັນ ແລະ ຂໍ້ຈຳກັດ

ອ່ານພາກຕໍ່ໄປນີ້ ໃຫ້ດັງໆ ໃຫ້ກຸ່ມຟັງ. ຊຸກຍູ້ໃຫ້ບັນດາຜູ້ເຂົ້າຮ່ວມຖາມຄຳຖາມ ໃນເວລາທີ່ເຈົ້າດຳເນີນບົດຮຽນ.

### ເຂົ້າໃຈກ່ຽວກັບ ການພັດທະນາຂອງໄວໜຸ່ມ

ອະທິບາຍວ່າ ໄວໜຸ່ມ ຈະຜ່ານການປ່ຽນແປງທີ່ຍິ່ງໃຫຍ່ໃນຊີວິດຂອງພວກເຂົາໃນລະຫວ່າງອາຍຸ 12 ຫາ 17ປີ. ຮ່າງກາຍຂອງພວກເຂົາຈະປ່ຽນແປງ, ແລະ ເມື່ອສິ່ງດັ່ງກ່າວນີ້ເກີດຂຶ້ນ, ພວກເຂົາຈະປະສົບກັບຄວາມຮູ້ສຶກທາງດ້ານຈິດໃຈທີ່ຮຸນແຮງ ຍ້ອນວ່າ

ຮໍໂມນ ເຮັດໃຫ້ເກີດການປ່ຽນແປງດັ່ງກ່າວນີ້. ພວກເຂົາສາມາດມີຄວາມສຸກໃນມື້ນີ້, ມີຄວາມຮູ້ສຶກເສົ້າໃຈທີ່ສຸດໃນມື້ຕໍ່ໄປ ແລະ ມີຄວາມຮັກໃນມື້ຖັດໄປ. ໄວລຸ້ນ ຍັງຈະປະສົບກັບຄວາມຮູ້ສຶກທາງດ້ານຈິດໃຈທີ່ສັບສົນຍ້ອນວ່າພວກເຂົາກະກຽມເພື່ອຮັບຜິດຊອບຕໍ່ຊີວິດຂອງພວກເຂົາເອງ. ພວກເຂົາຕ້ອງການຄວາມເປັນອິດສະຫຼະຢູ່ເລື້ອຍໆ ແຕ່ວ່າພວກເຂົາກໍ່ກັງວົນວ່າພວກເຂົາຈະຊ່ວຍເຫຼືອຕົນເອງແນວໃດຖ້າວ່າພວກເຂົາມີຄວາມຮັກ ຫຼື ຖ້າວ່າພວກເຂົາສ້າງຄອບຄົວຂອງພວກເຂົາເອງ. ການເປັນໄວລຸ້ນຜູ້ໜຶ່ງແມ່ນມີຄວາມສັບສົນ!

ຜູ້ອຳນວຍຄວາມສະດວກ SNYC ທີ່ດີ ຈະເຂົ້າໃຈວ່າ ໄວລຸ້ນມີຄວາມຮູ້ສຶກດ້ານຈິດໃຈທີ່ຮຸນແຮງ ແລະ ຟັງໂດຍປາດສະຈາກການຕັດສິນວິຈານ ຫຼື ຫົວຂວັນໄວລຸ້ນ.

### ສ້າງສາຍພົວພັນ

ບອກໃຫ້ບັນດາຜູ້ເຂົ້າຮ່ວມ ຄິດຄືນຫຼັງຫາຊຸມປີທີ່ຍັງເຂົ້າໂຮງຮຽນ. ໃຫ້ຖາມວ່າ 'ມີຄູສອນຄົນໃດບໍ່ ທີ່ເຈົ້າມັກຫຼາຍກວ່າຄູສອນຄົນອື່ນໆ? ມີຄູສອນຄົນໃດບໍ່ທີ່ເຈົ້າຍັງຄິດຮອດຈົນຮອດປະຈຸບັນນີ້ ເຊິ່ງເປັນຜູ້ທີ່ມີຜົນສະທ້ອນດ້ານດີຕໍ່ການຮຽນຂອງເຈົ້າ?' ບອກໃຫ້ບັນດາຜູ້ເຂົ້າຮ່ວມ ຫຼັບຕາຂອງພວກເຂົາ ໜຶ່ງນາທີ ແລະ ຄິດກ່ຽວກັບຄູສອນຜູ້ດັ່ງກ່າວນັ້ນ.

ບາດນີ້, ຖາມວ່າ ຜູ້ເຂົ້າຮ່ວມ ໄດ້ມີສາຍພົວພັນທີ່ດີກັບຄູສອນຜູ້ນັ້ນບໍ່. ການສອນທີ່ດີ ກ່ຽວພັນຫຼາຍກວ່າ ການຮູ້ຈັກກ່ຽວກັບຫົວຂໍ້ເທົ່ານັ້ນ; ມັນກ່ຽວພັນກັບການສ້າງສາຍພົວພັນ. ຜູ້ອຳນວຍຄວາມສະດວກ SNYC ຄວນພະຍາຍາມຄົ້ນຫາສິ່ງທີ່ສະມາຊິກແຕ່ລະຄົນຂອງ SNYC ມັກ. ຜູ້ອຳນວຍຄວາມສະດວກຄວນພະຍາຍາມຮຽນຮູ້ກ່ຽວກັບຄອບຄົວຂອງໄວໜຸ່ມ ແລະ ຈື່ຊື່ຂອງໝູ່ຄູ່ຂອງພວກເຂົາ.

ອະທິບາຍວ່າ ຜູ້ອຳນວຍຄວາມສະດວກ SNYC ຄວນຢູ່ SNYC ປະມານ 10 ນາທີ ພາຍຫຼັງສິ້ນສຸດບົດຮຽນ; ບອກເຕືອນໄວໜຸ່ມວ່າ ພວກເຂົາສາມາດໃຊ້ເວລາດັ່ງກ່າວນັ້ນ ເພື່ອສົນທະນາບາງສິ່ງບາງຢ່າງກັບຜູ້ອຳນວຍຄວາມສະດວກຖ້າພວກເຂົາຕ້ອງການ. ຖ້າຜູ້ເຂົ້າຮ່ວມ SNYC ຄົນໃດໜຶ່ງໂສກເສົ້າ, ຜູ້ອຳນວຍຄວາມສະດວກ SNYC ຄວນຖາມ ວ່າລາວຕ້ອງການລົມນຳບໍ່. ແຕ່ເຖິງແນວໃດກໍ່ຕາມ ກໍ່ຕ້ອງຈື່ໄວ້ວ່າຍ້ອນລະບຽບປົກປ້ອງເດັກ ຜູ້ອຳນວຍຄວາມສະດວກ SNYC ບໍ່ຄວນຢູ່ພຽງລຳພັງຄົນດຽວໃນຫ້ອງກັບໄວໜຸ່ມ. ຜູ້ອຳນວຍຄວາມສະດວກ SNYC ກໍ່ຍັງສາມາດເວົ້າລົມກັບໄວໜຸ່ມຢູ່ບ່ອນທີ່ບໍ່ມີໃຜສາມາດໄດ້ຍິນ, ແຕ່ວ່າຕ້ອງມີໃຜຜູ້ໜຶ່ງຢູ່ໃນຫ້ອງທີ່ສາມາດເຫັນພວກເຂົາ.

ຖ້າຫາກສະມາຊິກຂອງ SNYC ເຊົາມາສະໂມສອນ, ຜູ້ອຳນວຍຄວາມສະດວກຄວນຖາມ ໝູ່ຄູ່ຂອງລາວວ່າສະມາຊິກຜູ້ດັ່ງກ່າວເປັນຫຍັງບໍ່. ຖ້າເປັນໄປໄດ້, ຜູ້ອຳນວຍຄວາມສະດວກ SNYC ຄວນໄປຢ້ຽມຢາມເຮືອນຂອງໄວໜຸ່ມເພື່ອເບິ່ງວ່າເປັນຫຍັງ ລາວຈຶ່ງເຊົາມາສະໂມສອນ.

### ຮູ້ກ່ຽວກັບຂໍ້ຈຳກັດຂອງເຈົ້າ

ອະທິບາຍວ່າ ຜູ້ອຳນວຍຄວາມສະດວກຂອງ SNYC ຄວນຮູ້ກ່ຽວກັບຂໍ້ຈຳກັດຂອງຕົນ. ສິ່ງດັ່ງກ່າວນີ້ໝາຍຄວາມວ່າ ຜູ້ອຳນວຍຄວາມສະດວກ SNYC ຄວນຮັບຮູ້ກ່ຽວກັບສະຖານະການທີ່ພວກເຂົາບໍ່ສາມາດແກ້ໄຂ. ຜູ້ອຳນວຍຄວາມສະດວກSNYC ສາມາດຊ່ວຍໄວໜຸ່ມໃຫ້ຮຽນຮູ້ກ່ຽວກັບທັກສະ ເພື່ອປັບປຸງຊີວິດຂອງພວກເຂົາ ແລະ ເຄື່ອນຍ້າຍແບບປອດໄພ. ແຕ່ວ່າ ຜູ້ອຳນວຍຄວາມສະດວກ SNYC ບໍ່ສາມາດເຮັດທຸກສິ່ງທຸກຢ່າງໄດ້. ຢູ່ດ້ານລຸ່ມນີ້ແມ່ນຄຳແນະນຳທີ່ມີປະໂຫຍດ:

- ຢ່າພະຍາຍາມເປັນທ່ານໝໍ. ຖ້າຫາກສະມາຊິກຜູ້ໜຶ່ງ ຂອງ SNYC ເປັນໄຂ້, ຜູ້ອຳນວຍຄວາມສະດວກ SNYC ສາມາດສົ່ງບຸກຄົນດັ່ງກ່າວໄປ ຄລີນິກ ແຕ່ວ່າບໍ່ສາມາດໃຫ້ຢາ ຫຼື ຄຳແນະນຳດ້ານການແພດ.
- ຢ່າພະຍາຍາມເປັນພໍ່ແມ່ຂອງພວກເຂົາ. ຖ້າຫາກສະມາຊິກຜູ້ໜຶ່ງ ຂອງ SNYC ບໍ່ມີບ້ານ, ຜູ້ອຳນວຍຄວາມສະດວກ SNYC ສາມາດສົ່ງບຸກຄົນດັ່ງກ່າວໄປ ຫາອົງການ NGO, ແຕ່ວ່າບໍ່ສາມາດອະນຸຍາດໃຫ້ລາວຍ້າຍເຂົ້າໄປຢູ່ບ້ານຂອງ ຜູ້ອຳນວຍຄວາມສະດວກ.

- ຢ່າພະຍາຍາມເປັນຕຳຫຼວດ. ຖ້າຫາກໄວໜຸ່ມຖືກຕີ ຫຼື ກຳລັງຖືກຕີໂດຍພໍ່ແມ່ ຫຼື ບຸກຄົນອື່ນໆ, ໃຫ້ໂທຫາ ຜູ້ດູແລກວດກາຂອງ ອົງການສຸພະນິມິດໃນມື້ນັ້ນ, ແລະ ຫຼັງຈາກນັ້ນໃຫ້ປະຕິບັດຕາມຂັ້ນຕອນຢູ່ໃນ ແຜນ ຕອບໂຕ້ ຢູ່ໃນເຄື່ອງມື. ຜູ້ອຳນວຍຄວາມສະດວກຂອງ SNYC ບໍ່ຄວນໄປຫາຄອບຄົວດັ່ງກ່າວ ພຽງລຳພັງ ຄົນດຽວ.
- ຈົ່ງເປັນມືອາຊີບ. ສ້າງສາຍພົວພັນກັບໄວໜຸ່ມ ແຕ່ວ່າຕ້ອງຮັກສາຄວາມເປັນມືອາຊີບ. ຍົກຕົວຢ່າງ, ຜູ້ ອຳນວຍຄວາມສະດວກຂອງ SNYC ບໍ່ຄວນບອກໄວໜຸ່ມກ່ຽວກັບສາຍພົວພັນດ້ານຄວາມຮັກຂອງ ຕົນ. ມັນເປັນສິ່ງທີ່ດີທີ່ຕ້ອງພົບປະສັງສັນກັບບັນດາຜູ້ເຂົ້າຮ່ວມ SNYC ເປັນກຸ່ມ, ແຕ່ວ່າ ຜູ້ອຳນວຍ ຄວາມສະດວກ SNYC ບໍ່ຄວນໄປຕາມລຳພັງຄົນດຽວກັບສະມາຊິກຂອງ SNYC ທີ່ຍັງເປັນໂສດ. ຈົ່ງຈື່ໄວ້ວ່າ, ຜູ້ອຳນວຍ ຄວາມສະດວກຂອງ SNYC ຄວນເປັນໝູ່ຄູ່ ແລະ ແບບຢ່າງທີ່ດີ.
- ຮັບຮູ້ຂໍ້ຈຳກັດ ຂອງຄວາມຮູ້ຂອງຕົນ. ຄູສອນທີ່ດີເວົ້າຢູ່ເລື້ອຍໆວ່າ 'ຂ້ອຍບໍ່ຮູ້ຄຳຕອບສຳລັງສິ່ງດັ່ງ ກ່າວນີ້, ແຕ່ຂ້ອຍສາມາດຄົ້ນຫາຄຳຕອບໄດ້.' ຖ້າຫາກບັນດາຜູ້ເຂົ້າຮ່ວມຖາມຄຳຖາມທີ່ຜູ້ອຳນວຍ ຄວາມສະດວກບໍ່ສາມາດຕອບໄດ້, ຜູ້ອຳນວຍຄວາມສະດວກຂອງ SNYC ຄວນມີຄວາມຊື່ສັດຈິງໃຈ ແລະ ອະທິບາຍວ່າລາວບໍ່ຮູ້. ຜູ້ອຳນວຍຄວາມສະດວກ ຄວນຕິດຕາມໂດຍການຖາມບຸກຄົນທີ່ຮູ້ ຫຼື ຊອກຫາຄຳຕອບ ຈາກ ອິນເຕີເນັດ. ໂດຍວິທີດັ່ງກ່າວນີ້ ຜູ້ອຳນວຍຄວາມສະດວກຂອງ SNYC ຈະຊ່ວຍໄວໜຸ່ມທີ່ເປັນຜູ້ເຂົ້າຮ່ວມ ໄດ້ຂໍ້ມູນທີ່ແນ່ນອນ ແລະ ເປັນແບບຢ່າງສຳລັບວິທີການຄົ້ນຄວ້າ.

## ກິດຈະກຳ: ທຳຄວາມເຂົ້າໃຈໄວໜຸ່ມ

ແບ່ງບັນດາຜູ້ເຂົ້າຮ່ວມອອກເປັນ ກຸ່ມລະ 6–8 ຄົນ. ຢາຍສຳເນົາເອກະສານ 'IS 5a: ກໍລະນີສຶກສາ, ໃບທີ 1' ໃຫ້ແຕ່ລະກຸ່ມ ແລະ ບອກໃຫ້ສະມາຊິກຂອງກຸ່ມ ອ່ານກໍລະນີສຶກສາ ແລະ ຫຼັງຈາກນັ້ນ ສົນທະນາວ່າ ແຕ່ລະ ບົດເລື່ອງເຮັດໃຫ້ພວກເຂົາຮູ້ສຶກແນວໃດ.

ຫຼັງຈາກປະມານ 10 ນາທີ, ຢາຍສຳເນົາເອກະສານ 'IS 5b: ກໍລະນີສຶກສາ, ໃບທີ 2' ໃຫ້ພວກເຂົາ ແລະ ອະທິບາຍວ່າ ບັນດາບົດເລື່ອງດັ່ງກ່າວນີ້ ເລົ່າກ່ຽວກັບ ຊີວິດທີ່ລີ້ຊ່ອນຂອງໄວໜຸ່ມທີ່ພວກເຂົາຫາກໍ່ໄດ້ອ່ານ ກ່ຽວກັບມັນ. ເມື່ອພວກເຂົາອ່ານສຳເລັດແລ້ວ, ບອກພວກເຂົາໃຫ້ສົນທະນາກ່ຽວກັບບັນດາຄຳຖາມລຸ່ມນີ້:

- ຂ້ອຍຈະສາມາດຊ່ວຍໄວໜຸ່ມແບບດັ່ງກ່າວນີ້ໄດ້ແນວໃດ?
- ຂ້ອຍຈະເຮັດແນວໃດ ເພື່ອເຮັດໃຫ້ມັນງ່າຍຂຶ້ນ ສຳລັບການເຮັດວຽກກັບໄວໜຸ່ມແບບດັ່ງກ່າວນີ້?

## ສະຫຼຸບສັງລວມກ່ຽວກັບບົດ

- ຜູ້ອຳນວຍຄວາມສະດວກຂອງ SNYC ຄວນເຂົ້າໃຈວ່າ ໄວລຸ້ນໄດ້ປະສົບກັບຄວາມຮູ້ສຶກທາງ ດ້ານຈິດໃຈທີ່ຮຸນແຮງ ແລະ ສິ່ງດັ່ງກ່າວນີ້ ແມ່ນພາກສ່ວນໜຶ່ງທີ່ເປັນເລື່ອງທຳມະດາຂອງການ ພັດທະນາ
- ຜູ້ອຳນວຍຄວາມສະດວກຂອງ SNYC ຄວນສ້າງສາຍພົວພັນທີ່ດີກັບໄວໜຸ່ມທີ່ເປັນຜູ້ເຂົ້າ ຮ່ວມເພື່ອສົ່ງເສີມການຮຽນຮູ້ ແລະ ການເຂົ້າຮ່ວມ
- ຜູ້ອຳນວຍຄວາມສະດວກຂອງ SNYC ຄວນຮູ້ຂໍ້ຈຳກັດຂອງຕົນເອງ ແລະ :
  - » ບໍ່ໃຫ້ຄຳແນະນຳດ້ານການແພດ
  - » ບໍ່ໃຫ້ໄວໜຸ່ມຍ້າຍເຂົ້າໄປຢູ່ນຳ
  - » ປະຕິບັດຕາມແຜນຕອບໂຕ້ ຖ້າຫາກໄວໜຸ່ມລາຍງານກ່ຽວກັບການຖືກທາລຸນ
  - » ຈົ່ງເປັນມືອາຊີບ
  - » ຈົ່ງຊື່ສັດຈິງໃຈ ຖ້າພວກເຂົາບໍ່ຮູ້ຄຳຕອບ ສຳລັບຄຳຖາມ

## ກໍລະນີສຶກສາ, ໃບທີ 1

ທ້າວ A ແມ່ນສະມາຊິກຂອງກຸ່ມໄວໜຸ່ມ. ລາວແມ່ນເດັກຊາຍທີ່ສູງ ແລະ ສູງກວ່າຜູ້ອື່ນໆ. ລາວເປັນຄົນທີ່ຟົດສະໜັ່ນ ແລະ ຂົ່ມຂູ່ໄວໜຸ່ມຜູ້ອື່ນໆ ຢູ່ສະເໝີ. ລາວມັກລົບກວນຄັດຈັງຫວະຢູ່ເປັນປະຈຳ ແລະ ອາລົມຮ້າຍຢູ່ເລື້ອຍໆ. ລາວເປັນຄົນທີ່ເຮັດວຽກນຳຍາກ.

ນາງ B ແມ່ນເດັກຍິງໄວລຸ້ນ. ບາງເທື່ອ ລາວກໍ່ມາສະໂມສອນ ແລະ ເຂົ້າຮ່ວມ, ແຕ່ວ່າຫຼາຍຄັ້ງລາວກໍ່ໃຊ້ເວລາທັງໝົດ ເພື່ອແຕ້ມຮູບໃສ່ປຶ້ມບັນທຶກປະຈຳວັນຂອງລາວ. ລາວບໍ່ຕັ້ງໃຈຟັງ ແລະເຈົ້າຮູ້ສຶກວ່າເວລາທີ່ລາວແຕ້ມຮູບ ລາວບໍ່ໃຫ້ຄວາມເຄົາລົບນັບຖືເລີຍ. ບາງຄັ້ງລາວກໍ່ບໍ່ມາສະໂມສອນເລີຍ ແລະ ສິ່ງດັ່ງກ່າວກໍ່ເຮັດໃຫ້ເຈົ້າໃຈຮ້າຍຄືກັນ.

ທ້າວ M ເປັນຄົນຕະຫຼົກອໍ້ແອ້. ລາວບໍ່ຈິງຈັງກັບສິ່ງໃດເລີຍ. ລາວນັ່ງຢູ່ທາງຫຼັງຂອງກຸ່ມ ແລະ ທຳທ່າວ່າລາວເປັນຄົນ "ເທ້ເກີນໄປ' ທີ່ຈະເຂົ້າຮ່ວມກິດຈະກຳ. ລາວຈີບເດັກຍິງທຸກຄົນ. ລາວພະຍາຍາມເຮັດໃຫ້ໄວໜຸ່ມຄົນອື່ນຫົວຂວັນເຈົ້າ. ເວົ້າລາວແລ້ວ, ລາວເຮັດໃຫ້ເຈົ້າເຈັບປະສາດ.

## ກໍລະນີສຶກສາ, ໃບທີ 2

ທ້າວ A ໄດ້ປົກປິດມັນໄວ້, ແຕ່ຄວາມຈິງແລ້ວອ່ານໜັງສືເກືອບບໍ່ໄດ້ເລີຍ. ລາວຂາດໂຮງຮຽນຫຼາຍ ເພື່ອຊ່ວຍຄອບຄົວຂອງລາວ. ລາວຢ້ານວ່າໄວໜຸ່ມຜູ້ອື່ນໆ ຈະຮູ້ວ່າລາວອ່ານບໍ່ໄດ້ ແລະ ພວກເຂົາຈະເຍາະເຍີ້ຍລາວ. ພໍ່ຂອງລາວຕິດເຫຼົ້າ ແລະ ຕີລູກໃນເວລາລາວເມົາ. ທ້າວ A ຮຽນເປັນຄົນທີ່ຮຸນແຮງ ເມື່ອພໍ່ຂອງລາວຕີລາວ, ແລະ ດຽວນີ້ລາວພະຍາຍາມຂົ່ມຂູ່ຄົນອື່ນ ກ່ອນທີ່ພວກເຂົາຈະຂົ່ມຂູ່ລາວ.

ນາງ B ກຳລັງຜ່ານໄວໜຸ່ມສາວ ແລະ ປະເຊີນໜ້າກັບຄວາມຮູ້ສຶກທາງດ້ານຈິດໃຈທີ່ປ່ຽນແປງໄປມາ. ມີເດັກຊາຍຜູ້ໜຶ່ງຢູ່ໃນສະໂມສອນທີ່ລາວມັກ ແຕ່ວ່າເດັກຊາຍຜູ້ນັ້ນເມີນເສີຍຕໍ່ລາວ. ເມື່ອລາວຮູ້ວ່າເດັກຊາຍຜູ້ນັ້ນຮັກໝູ່ຂອງລາວ, ນາງ B ເສຍໃຈຢ່າງແຮງ. ລາວບໍ່ສາມາດເວົ້າກັບຄອບຄົວຂອງລາວ ຫຼື ໝູ່ຜູ້ອື່ນໆ ກ່ຽວກັບສິ່ງດັ່ງກ່າວນີ້. ຄືນໜຶ່ງລາວຍ່າງໄປແຄມນ້ຳ ແລະ ຄິດວ່າຈະໂດດນ້ຳຕາຍ.

ຄອບຄົວຂອງ ທ້າວ M ທຸກຍາກ ແລະ ອ້າຍຂອງລາວທຸກຄົນ ໄດ້ເຄື່ອນຍ້າຍໄປໝົດແລ້ວ. ລາວຢ້ານວ່າພວກເຂົາອາດຈະກຳລັງເຮັດວຽກໃນເຮືອຫາປາຂອງໄທ, ຍ້ອນວ່າລາວບໍ່ໄດ້ຮັບຂ່າວຈາກພວກເຂົາເລີຍ. ລາວຢາກຮັບເອົາຄຳແນະນຳຂອງເຈົ້າ, ແຕ່ວ່າ ລາວຄິດວ່າລາວບໍ່ສາມາດເຮັດໄດ້ ຍ້ອນວ່າຄອບຄົວຂອງລາວທຸກຍາກຫຼາຍ ແລະ ລາວຄວບຄຸມບໍ່ໄດ້. ຍ້ອນແນວນັ້ນ ລາວຈຶ່ງພະຍາຍາມລົບກວນສິ່ງທີ່ເຈົ້າເວົ້າດ້ວຍເລື່ອງຕະຫຼົກ.

# ບົດຮຽນທີ 6: ທັກສະການອໍານວຍຄວາມສະດວກ: ການເຮັດວຽກກັບໄວໜຸ່ມ

## ຈຸດປະສົງ

ບັນດາຜູ້ເຂົ້າຮ່ວມ ຈະຮຽນຮູ້ ແລະ ຝຶກຕົວຈິງ ກ່ຽວກັບທັກສະການອໍານວຍຄວາມສະດວກສໍາລັບເຮັດວຽກກັບໄວໜຸ່ມ.

ບັນດາຜູ້ເຂົ້າຮ່ວມ ຈະສະທ້ອນຄືນວ່າ ພວກເຂົາໄດ້ປ່ຽນແປງບັນດາພຶດຕິກໍາສະເພາະ ໃນຊີວິດຂອງພວກເຂົາແນວໃດ.

## ເວລາ

30 ນາທີ

## ອຸປະກອນ

- ອັດສໍາເນົາ ເອກະສານ 'IS 6a: ທັກສະການນໍາສະເໜີ' ສໍາລັບຜູ້ເຂົ້າຮ່ວມແຕ່ລະຄົນ
- ອັດສໍາເນົາ ເອກະສານເຄື່ອງມື ສໍາລັບຜູ້ເຂົ້າຮ່ວມແຕ່ລະຄົນ

## ຜູ້ເຂົ້າຮ່ວມ

ຜູ້ໃຫຍ່ທີ່ເປັນຜູ້ອໍານວຍຄວາມສະດວກ 2–3 ຄົນ ຈາກແຕ່ລະ SNYC

## ຜູ້ອໍານວຍຄວາມສະດວກ

ພະນັກງານພາຍໃນປະເທດຂອງອົງການສຸພະນິມິດ ທີ່ໄດ້ເຂົ້າຮ່ວມການຝຶກອົບຮົມ ETIP SNYC

## ຄໍາແນະນໍາ

ຊຸກຍູ້ໃຫ້ບັນດາຜູ້ເຂົ້າຮ່ວມ ຖາມຄໍາຖາມ ໃນຂະນະທີ່ເຈົ້າອ່ານຜ່ານບັນດາເອກະສານຕໍ່ໄປນີ້.

**ໄວໜຸ່ມຕ້ອງການຍົກຍ້າຍ**

ອະທິບາຍວ່າ ໄວໜຸ່ມມີກໍາລັງກາຍຫຼາຍ. ມັນຍາກຫຼາຍສໍາລັບໄວໜຸ່ມທີ່ຈະນັ່ງຢູ່ຊື່ໆເປັນເວລາດົນໆ.ຈົນຮອດອາຍຸ 18 ປີ, ສະໝອງຂອງເດັກນ້ອຍຂະຫຍາຍຕົວໄວຫຼາຍ ແລະ ການສຶກສາຄົ້ນຄວ້າໄດ້ສະແດງໃຫ້ເຫັນວ່າເດັກນ້ອຍຕ້ອງໄດ້ເຄື່ອນໄຫວຢູ່ສະເໝີເພື່ອພັດທະນາສະໝອງ.

ໃຫ້ຖາມວ່າ ມີໃຜຈື່ໄດ້ບໍ່ຕອນທີ່ ນັ່ງຢູ່ໃນຫ້ອງຮຽນໃນຂະນະທີ່ ຄູສອນເວົ້າ ແລະ ກໍ່ເວົ້າເປັນເວລາຫຼາຍຊົ່ວໂມງ? ເວົ້າວ່າ 'ເຈົ້າໄດ້ຫຼຽວອອກນອກປ່ອງຢ້ຽມ ແລະ ຖ້າໃຫ້ແຕ່ລະນາທີຜ່ານໄປ ຈົນກະທັ້ງຊົ່ວໂມງຮຽນສິ້ນສຸດລົງບໍ່?' ມັນເປັນສິ່ງສໍາຄັນທີ່ ບໍ່ໃຫ້ໄວໜຸ່ມທີ່ເຂົ້າຮ່ວມ ເບື່ອ ເວລາຢູ່ໃນ SNYC ຫຼື ພຽງແຕ່ຖ້າໃຫ້ເວລາໝົດໄປ.

ເຄື່ອງມືໄດ້ຖືກອອກແບບ ເພື່ອເຮັດໃຫ້ໄວໜຸ່ມບໍ່ໄດ້ຢູ່ລ້າໆ. ແຕ່ລະບົດຮຽນເລີ່ມຕົ້ນດ້ວຍ ເກມ ແລະ ປະກອບດ້ວຍກິດຈະກຳທີ່ເຮັດໃຫ້ໄວໜຸ່ມໄດ້ເຮັດບາງສິ່ງ ດ້ວຍການຫຼິ້ນ ຫຼື ການເຮັດວຽກເປັນກຸ່ມ. ເຄື່ອງມືຍັງປະກອບດ້ວຍພາກທີ່ ຜູ້ອຳນວຍຄວາມສະດວກຂອງ SNYC ອະທິບາຍກ່ຽວກັບຂໍ້ມູນໃຫ້ແກ່ໄວໜຸ່ມ.ໃນເວລາດັ່ງກ່າວນີ້ ຜູ້ອຳນວຍຄວາມສະດວກ SNYC ບໍ່ຄວນເວົ້າດົນເກີນໄປ. ຖ້າຫາກ SNYC ກາຍເປັນສະຖານທີ່ໜ້າເບື່ອ, ບັນດາຜູ້ເຂົ້າຮ່ວມຈະເຊົາມາ.

### ໄວໜຸ່ມຈະຟັງ ຖ້າເຈົ້າເວົ້າແບບມີພະລັງ

ອະທິບາຍວ່າ ເມື່ອຜູ້ອຳນວຍຄວາມສະດວກຂອງ SNYC ເວົ້າກັບໄວໜຸ່ມທີ່ເປັນຜູ້ເຂົ້າຮ່ວມ, ພວກເຂົາຄວນພະຍາຍາມໃຊ້ພະລັງໃນການເວົ້າ. ຜູ້ອຳນວຍຄວາມສະດວກ ຄວນພະຍາຍາມສ້າງຄວາມສົນໃຈ. ບາງວິທີທີ່ຜູ້ອຳນວຍຄວາມສະດວກສາມາດເຮັດໄດ້ ປະກອບດ້ວຍ:

- ຍ່າງໄປທົ່ວຫ້ອງໃນຂະນະທີ່ເວົ້າ
- ເຄື່ອນເໜັງມື ໃນຂະນະທີ່ເວົ້າ
- ເບິ່ງຕາຜູ້ເຂົ້າຮ່ວມ
- ສ້າງເລື່ອງຕະຫຼົກ (ແຕ່ວ່າບໍ່ຫົວຂວັນບັນດາຜູ້ເຂົ້າຮ່ວມ)
- ມີຄວາມມ່ວນຊື່ນ

## ກິດຈະກຳ: ທັກສະການນຳສະເໜີ

ບອກໃຫ້ບັນດາຜູ້ເຂົ້າຮ່ວມຊອກຄູ່. ຢາຍສຳເນົາເອກະສານ 'IS 6a: ທັກສະການນຳສະເໜີ' ໃຫ້ຜູ້ເຂົ້າຮ່ວມແຕ່ລະຄົນ ແລະ ບອກໃຫ້ບັນດາຜູ້ເຂົ້າຮ່ວມອ່ານ. ຫຼັງຈາກນັ້ນບອກຜູ້ເຂົ້າຮ່ວມແຕ່ລະຄົນ ເອົາເອກະສານເຄື່ອງມືຂອງຕົນອອກມາ ແລະ ເປີດໄປບົດຮຽນທີ 13 ທີ່ມີຫົວຂໍ້ວ່າ 'ການສະແດງຄຳເຫັນ (ທັກສະການສື່ສານ)'. ບອກບັນດາຜູ້ເຂົ້າຮ່ວມໃຊ້ເວລາ ໜຶ່ງນາທີ ເພື່ອອ່ານ ຄຳແນະນຳເພື່ອຕົນເອງ. ຫຼັງຈາກນັ້ນບອກໃຫ້ພວກເຂົາພະຍາຍາມອ່ານຄຳແນະນຳໃຫ້ຄູ່ຂອງພວກເຂົາຟັງ, ຈື່ໄວ້ວ່າ ໃຫ້ໃຊ້ 'ທັກສະການນຳສະເໜີ'. ຫຼັງຈາກທີ່ພວກເຂົາໄດ້ພະຍາຍາມແລ້ວ, ບອກພວກເຂົາໃຫ້ເບິ່ງລາຍການ ແລະ ຮ່ວມກັບຄູ່ຂອງພວກເຂົາໃຫ້ຕັດສິນໃຈວ່າ ທັກສະໃດທີ່ພວກເຂົາໄດ້ໃຊ້ ແລະ ທັກສະໃດມີຄວາມຫຍຸ້ງຍາກທ້າທາຍກວ່າ. ຄູ່ຂອງພວກເຂົາ ຄວນສະໜັບສະໜູນ, ບໍ່ຕັດສິນວິຈານ. ຕໍ່ໄປ ບອກໃຫ້ຄູ່ຂອງພວກເຂົາ ປ່ຽນ ບົດບາດ ແລະ ລິ້ມຄືນການຝຶກຫັດ.

ເມື່ອທັງຄູ່ ໄດ້ປ່ຽນກັນແລ້ວ, ບອກໃຫ້ພວກເຂົາລິ້ມຄືນກິດຈະກຳທັງໝົດ.

ຫຼັງຈາກທຸກຄົນໃນກຸ່ມໄດ້ປ່ຽນຜຽນກັນຢ່າງນ້ອຍ ສອງເທື່ອແລ້ວ, ບອກບັນດາຜູ້ເຂົ້າຮ່ວມທັງໝົດຮວມກັນເປັນກຸ່ມໃຫຍ່ ແລະ ຖາມວ່າ:

- ມີຄວາມຮູ້ສຶກແນວໃດໃນການເຮັດກິດຈະກຳດັ່ງກ່າວນີ້?
- ທັກສະໃດທີ່ງ່າຍສຳລັບການນຳໃຊ້?
- ທັກສະໃດຍາກ?
- ເປັນຫຍັງຈຶ່ງຍາກ?
- ເຈົ້າຮູ້ສຶກວ່າເຈົ້າໄດ້ປັບປຸງບໍ່ ເມື່ອໄດ້ຝຶກຊ້ອມຫຼາຍຂຶ້ນ?
- ມີໃຜທີ່ໄດ້ພັດທະນາວິທີການສ່ວນຕົວຂອງຕົນບໍ່ ທີ່ເຮັດໃຫ້ມັນງ່າຍຂຶ້ນ ເຊິ່ງເຈົ້າຢາກຈະແບ່ງປັນແລກປ່ຽນກັບກຸ່ມ?

## ຄຳແນະນຳ: ເວົ້າດັງໆ ສະແດງຄຳຄິດຄຳເຫັນ ທີ່ກ່ຽວຂ້ອງກັບ ຊີວິດຂອງໄວໜຸ່ມ, ຄວາມຮຸນແຮງ ຫຼື ການເສຍກຽດ

### ໄວໜຸ່ມຕ້ອງໄດ້ເວົ້າເພື່ອສະແດງຄຳຄິດເຫັນ

ອ່ານພາກຕໍ່ໄປນີ້ ໃຫ້ຜູ້ເຂົ້າຮ່ວມຟັງ. ຊຸກຍູ້ພວກເຂົາໃຫ້ຖາມຄຳຖາມ.

> ສົນທິສັນຍາສະຫະປະຊາຊາດ ວ່າດ້ວຍສິດທິເດັກ (CRC) ກ່າວວ່າ ໄວໜຸ່ມຄວນມີສິດ ໃນການອອກສຽງ ເພື່ອສະແດງຄວາມຄິດຄວາມເຫັນຂອງຕົນ ກ່ຽວກັບບັນຫາທີ່ມີຜົນກະທົບຕໍ່ພວກເຂົາ. ໄວໜຸ່ມ ໃນອາຊີ, ຮີດຄອງປະເພນີຄາດຫວັງໃຫ້ພວກເຂົາເປັນຄົນມິດງຽບ, ເຮັດໃນສິ່ງທີ່ຜູ້ໃຫຍ່ບອກ, ບໍ່ໃຫ້ຖາມຄຳຖາມ ຫຼື ຖາມຜູ້ມີອຳນາດ. ແຕ່ວ່າ ທຸກມື້ນີ້ ໄວໜຸ່ມຕ້ອງໄດ້ຮຽນຮູ້ ວິທີການອອກຄຳຄິດຄຳເຫັນ ເພື່ອປົກປ້ອງຕົນ ເອງຈາກເລ່ກົນຂອງຜູ້ຄ້າມະນຸດ. ມັນສຳຄັນຫຼາຍ ທີ່ຜູ້ອຳນວຍຄວາມສະດວກ SNYC ຕ້ອງຊຸກຍູ້ໃຫ້ໄວໜຸ່ມ ເວົ້າ ແລະ ແລກປ່ຽນຄຳຄິດຄຳເຫັນຂອງພວກເຂົາ.

### ໄວໜຸ່ມສາມາດສ້າງ ຄຳຄິດຄຳເຫັນຂອງຕົນເອງ

ອະທິບາຍວ່າ ເຄື່ອງມືດັ່ງກ່າວນີ້ ພະຍາຍາມເຮັດໃຫ້ໄວໜຸ່ມ ປ່ຽນແປງພຶດຕິກຳ ເພື່ອວ່າ ພວກເຂົາຈະເຄື່ອນຍ້າຍຊ້າລົງ ແລະ ເຄື່ອນຍ້າຍແບບປອດໄພຫຼາຍຂຶ້ນກວ່າເກົ່າ ເມື່ອພວກເຂົາເຄື່ອນຍ້າຍ. ການສຶກສາຄົ້ນຄວ້າໄດ້ສະແດງໃຫ້ເຫັນວ່າຜູ້ຄົນຈະປ່ຽນແປງພຶດຕິກຳຫຼາຍກວ່າ ຖ້າຫາກພວກເຂົາຮູ້ສຶກວ່າພວກເຂົາມີທາງເລືອກຢ່າງມີອິດສະຫຼະ.

ຜູ້ອຳນວຍຄວາມສະດວກ ຂອງ SNYC ຄວນພະຍາຍາມ ສະໜອງໂອກາດ ສຳລັບໄວໜຸ່ມ ໃນການສ້າງຄຳຄິດຄຳເຫັນຂອງຕົນ. ເຄື່ອງມືດັ່ງກ່າວນີ້ ຈະໃຫ້ຂໍ້ມູນແກ່ຜູ້ອຳນວຍຄວາມສະດວກ. ຜູ້ອຳນວຍຄວາມສະດວກຄວນພະຍາຍາມໃຊ້ເກມ ແລະ ກິດຈະກຳ ເພື່ອເຮັດໃຫ້ໄວໜຸ່ມສາມາດໃຊ້ຂໍ້ມູນດັ່ງກ່າວ ເພື່ອສ້າງແນວຄວາມຄິດຂອງຕົນເອງກ່ຽວກັບບັນຫາດັ່ງ ກ່າວນີ້.

### ການຮຽນຮູ້ຄວນກ່ຽວພັນກັບຊີວິດຂອງໄວໜຸ່ມ

ອະທິບາຍວ່າ ຜູ້ຄົນສາມາດຮຽນຮູ້ໄດ້ດີທີ່ສຸດ ເມື່ອຫົວຂໍ້ທີ່ພວກເຂົາຮຽນມີຄວາມເໝາະສົມກັບຊີວິດຂອງພວກເຂົາ. ບັນດາຜູ້ເຂົ້າຮ່ວມຂອງ SNYC ຕ້ອງການຮຽນຮູ້ວ່າ ການຄ້າມະນຸດແມ່ນສິ່ງທີ່ເປັນອັນຕະລາຍແທ້ໆ ແລະ ມັນເກີດຂຶ້ນກັບໄວໜຸ່ມເຊັ່ນພວກເຂົາ.

ຜູ້ອຳນວຍຄວາມສະດວກ SNYC ທີ່ດີ ຈະພະຍາຍາມຢູ່ຢ່າງຕໍ່ເນື່ອງ ເພື່ອເຊື່ອມຕໍ່ບົດຮຽນ ກັບສະພາບຕົວຈິງ ຢູ່ໃນຊຸມຊົນ ຫຼື ໃນຊີວິດຂອງໄວໜຸ່ມ. ໃນເວລາທີ່ ຜູ້ອຳນວຍຄວາມສະດວກຂອງ SNYC ສອນ, ພວກເຂົາຕ້ອງພິຈາລະນາຢູ່ເລື້ອຍໆ ວ່າ ຈະເຮັດສິ່ງດັ່ງກ່າວນີ້ແນວໃດ. ບັນດາຜູ້ອຳນວຍຄວາມສະດວກຂອງ SNYC ຄວນເຕືອນໄວໜຸ່ມທີ່ເປັນຜູ້ເຂົ້າຮ່ວມວ່າ ເຄື່ອງມືໄດ້ໃຊ້ກໍລະນີສຶກສາ ທີ່ໄດ້ມາຈາກເລື່ອງຈິງ ຂອງໄວໜຸ່ມ ທີ່ດຳລົງຊີວິດຢູ່ໃນຊຸມຊົນ ທີ່ຄ້າຍຄືກັບພວກເຂົາ.

### ຄວາມຮຸນແຮງ ຫຼື ການເສຍກຽດ

ບອກບັນດາຜູ້ເຂົ້າຮ່ວມຫຼັບຕາ ແລະ ໃຫ້ຄິດຄືນໄປຫາເວລາຢູ່ໃນໂຮງຮຽນ ໃນຕອນທີ່ຄູສອນ ຕີພວກເຂົາ ຫຼື ເຮັດໃຫ້ພວກເຂົາເສຍກຽດ. ບອກພວກເຂົາໃຫ້ຄິດຄືນວ່າ ພວກເຂົາຄິດຫຍັງ ຫຼື ຮູ້ສຶກແນວໃດໃນຕອນນັ້ນ. ຖາມວ່າ 'ເຈົ້າກຳລັງຄິດກ່ຽວກັບຫົວຂໍ້ທີ່ຄູກຳລັງສົນທະນາຢູ່ບໍ່ ຫຼືວ່າ ເຈົ້າຖືກທຳລາຍດ້ວຍຄວາມຮູ້ສຶກ ໂສກເສົ້າ ຫຼື ໃຈຮ້າຍ ທີ່ເປັນຜົນມາຈາກວິທີທີ່ຄູ ເຮັດໃຫ້ເຈົ້າເຈັບປວດ?'

ອະທິບາຍວ່າ ຜູ້ໃຫຍ່ບາງຄົນເຊື່ອວ່າ ການຕີ, ການເຮັດໃຫ້ເສຍກຽດ ຫຼື ການຫົວຂວັນ ໄວໜຸ່ມຈະບັງຄັບໃຫ້ພວກເຂົາຮຽນຮູ້. ສິ່ງດັ່ງກ່າວນີ້ບໍ່ແມ່ນຄວາມຈິງ. ການສຶກສາຄົ້ນຄວ້າ ໄດ້ສະແດງໃຫ້ເຫັນວ່າ ຮູບແບບການທຳຮ້າຍດ້ານຮ່າງກາຍ ຫຼື ຈິດໃຈແບບດັ່ງກ່າວນີ້ ມີຜົນກະທົບດ້ານກົງກັນຂ້າມ. ມັນເຮັດໃຫ້ໄວໜຸ່ມຮູ້ສຶກ

ດ້ານຈິດໃຈ ແບບຖືກບັງຄັບໃຫ້ຮຽນ. ອະທິບາຍວ່າ ຜູ້ອຳນວຍຄວາມສະດວກ SNYC ທີ່ດີຈະ:

- ບໍ່ຕີ ຫຼື ທຳຮ້າຍຮ່າງກາຍ ໄວໜຸ່ມ ບໍ່ວ່າດ້ວຍວິທີໃດກໍ່ຕາມ
- ບໍ່ຫົວເຍາະເຍີ້ຍໄວໜຸ່ມ
- ບໍ່ເຮັດໃຫ້ໄວໜຸ່ມເສຍກຽດ ບໍ່ວ່າດ້ວຍວິທີໃດກໍ່ຕາມ (ຕົວຢ່າງເຊັ່ນ: ຜູ້ອຳນວຍຄວາມສະດວກບໍ່ຄວນບອກໄວໜຸ່ມຢືນປິ່ນໜ້າເຂົ້າຝາ ຫຼື ໃຫ້ນັ່ງແຍກຈາກກຸ່ມ ເພື່ອເປັນການລົງໂທດ)
- ບໍ່ປຽບທຽບບັນດາຜູ້ເຂົ້າຮ່ວມແບບເປີດເຜີຍຕໍ່ສາທາລະນາ (ຕົວຢ່າງເຊັ່ນ: ຜູ້ອຳນວຍຄວາມສະດວກບໍ່ຄວນເວົ້າວ່າ ຜູ້ເຂົ້າຮ່ວມຜູ້ນີ້ 'ດີຫຼາຍ' ແລະ ນັກຮຽນຜູ້ນັ້ນ 'ຂີ້ລ້າຍຫຼາຍ'. ຖ້າເຈົ້າເຮັດແບບນັ້ນ ຜູ້ເຂົ້າຮ່ວມທີ່ 'ຂີ້ລ້າຍ' ອາດຈະບໍ່ມາ SNYC ອີກ).

ນອກຈາກນັ້ນ, ອົງການສຸພະນິມິດ ຍັງມີນະໂຍບາຍປົກປ້ອງເດັກທີ່ເຄັ່ງຄັດ, ເຊິ່ງລວມຢູ່ໃນເອກະສານ ຊ້ອນທ້າຍ A ຂອງເຄື່ອງມືນີ້, ເຊິ່ງຫ້າມບໍ່ໃຫ້ຜູ້ໃຫຍ່ຕີ ຫຼື ທຳຮ້າຍໄວໜຸ່ມບໍ່ວ່າໃນຮູບການໃດກໍ່ຕາມ.

## ສະຫຼຸບສັງລວມບົດຮຽນ

ຜູ້ອຳນວຍຄວາມສະດວກ SNYC ຄວນ:

- ຊຸກຍູ້ໄວໜຸ່ມໃຫ້ຫ້າວຫັນ ຢູ່ໃນ SNYC
- ເວົ້າແບບມີພະລັງ
- ຊຸກຍູ້ໃຫ້ໄວໜຸ່ມເວົ້າ ສະແດງ ຄຳຄິດເຫັນ
- ຊຸກຍູ້ໃຫ້ໄວໜຸ່ມສະແດງຄຳຄິດເຫັນທີ່ແທ້ຈິງ
- ສ້າງການກ່ຽວພັນ ບົດຮຽນ ກັບ ຊີວິດຂອງໄວໜຸ່ມ
- ໃຊ້ການລົງໂທດແບບສ້າງສັນ ແລະ ບໍ່ຕີ, ທຳຮ້າຍ ຫຼື ເຮັດໃຫ້ໄວໜຸ່ມເສຍກຽດ.

## IS 6a: ທັກສະການນຳສະເໜີ

ຍ່າງໄປທົ່ວຫ້ອງໃນຂະນະທີ່ເວົ້າ

ຖາມຄຳຖາມ

ໃຊ້ການເຄື່ອນເໜັງມື ເພື່ອເຮັດໃຫ້ຄວາມໝາຍແຈ້ງຂຶ້ນ

ສ້າງການກ່ຽວພັນ ບົດຮຽນ ກັບ ຊີວິດຂອງໄວໜຸ່ມ

ເບິ່ງຕາ ຜູ້ເຂົ້າຮ່ວມ

ສ້າງເລື່ອງຕະຫຼົກ (ແຕ່ວ່າບໍ່ຫົວຂວັນບັນດາຜູ້ເຂົ້າຮ່ວມ)

ມີຄວາມມ່ວນຊື່ນ

# ບົດຮຽນທີ 7: ວິທີການອຳນວຍຄວາມສະດວກ ການສົນທະນາ

## ຈຸດປະສົງ

ບັນດາຜູ້ເຂົ້າຮ່ວມຈະຮຽນຮູ້ກ່ຽວກັບວິທີການ ອຳນວຍຄວາມສະດວກການສົນທະນາ

## ເວລາ

60 ນາທີ

## ອຸປະກອນ

- ສຳເນົາເອກະສານດັ່ງນີ້:

» IS 7a: ການສະແດງບົດບາດສົມມຸດການສົນທະນາ ຕັດອອກເປັນບັດສຳລັບແຕ່ລະບຸກຄົນ

» IS 7b: ການອຳນວຍຄວາມສະດວກການສົນທະນາ ສຳລັບຜູ້ເຂົ້າຮ່ວມແຕ່ລະຄົນ

- ຖົງ

## ຜູ້ເຂົ້າຮ່ວມ

ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກ 2–3 ຄົນ ຈາກແຕ່ລະ SNYC

## ຜູ້ອຳນວຍຄວາມສະດວກ

ພະນັກງານພາຍໃນປະເທດຂອງອົງການສຸພະນິມິດ ທີ່ໄດ້ເຂົ້າຮ່ວມການຝຶກອົບຮົມ ETIP SNYC

## ຄຳແນະນຳ

ອະທິບາຍວ່າ ເຄື່ອງມືດັ່ງກ່າວນີ້ ຊຸກຍູ້ໃຫ້ໄວໜຸ່ມສົນທະນາກ່ຽວກັບບັນຫາທີ່ມີຜົນກະທົບຕໍ່ຊີວິດຂອງພວກເຂົາ. ກຸ່ມສົນທະນາ ໄດ້ຖືກນຳໃຊ້ຕະຫຼອດເຄື່ອງມືນີ້.

ອະທິບາຍວ່າ ບົດຮຽນດັ່ງກ່າວນີ້ ແມ່ນກ່ຽວກັບເຕັກນິກການຮຽນຮູ້ ເພື່ອຊ່ວຍໃນການອຳນວຍຄວາມສະດວກການສົນທະນາ. ອ່ານສິ່ງດັ່ງຕໍ່ໄປນີ້ ໃຫ້ບັນດາຜູ້ເຂົ້າຮ່ວມຟັງ.

## ວິທີການ ອຳນວຍຄວາມສະດວກການສົນທະນາ

- *ລວມເອົາບັນດາຜູ້ເຂົ້າຮ່ວມທີ່ມິດງຽບ.* ສັງເກດເບິ່ງກຸ່ມ. ຖ້າຫາກບາງຄົນບໍ່ເວົ້າ, ຖາມແບບສຸພາບຮຽບຮ້ອຍວ່າ ພວກເຂົາມີຄຳເຫັນແນວໃດຕໍ່ຫົວຂໍ້ດັ່ງກ່າວນີ້. ຫ້າມບໍ່ໃຫ້ບັງຄັບໃຫ້ບັນດາຜູ້ເຂົ້າຮ່ວມເວົ້າ, ແຕ່ວ່າໃຫ້ເຊື້ອເຊີນໃຫ້ພວກເຂົາເວົ້າ ຖ້າພວກເຂົາຕ້ອງການ.
- *ຈຳກັດຜູ້ທີ່ເວົ້າຫຼາຍ.* ຖ້າຫາກຜູ້ເຂົ້າຮ່ວມຜູ້ໃດຜູ້ໜຶ່ງເວົ້າຕະຫຼອດເວລາ, ສະເໜີ ແບບສຸພາບກັບລາວວ່າ ໃຫ້ໂອກາດຜູ້ອື່ນແດ່. ຍົກຕົວຢ່າງເຊັ່ນ: ຖ້າຈົນກວ່າຜູ້ເຂົ້າຮ່ວມຜູ້ດັ່ງກ່າວເວົ້າສຸດປະໂຫຍກ ແລະ ເວົ້າວ່າ, 'ຂອບໃຈ ສຳລັບສິ່ງດັ່ງກ່າວ. ຂໍໂທດທີ່ຕ້ອງຢຸດເຈົ້າໄວ້ສ່ຳນີ້, ແຕ່ວ່າເຮົາມີເວລາຈຳກັດ. ຂ້ອຍຂໍຖາມແດ່ ມີໃຜອີກບໍ່ທີ່ມີຄຳຄິດເຫັນກ່ຽວກັບຫົວຂໍ້ດັ່ງກ່າວນີ້?'
- *ການຈັດລຽງຄຳເວົ້າໃໝ່.* ເຈົ້າສາມາດເຮັດໃຫ້ການສົນທະນາ ສືບເນື່ອງ ດ້ວຍການຈັດລຽງຄຳເວົ້າສິ່ງທີ່ໃຜຜູ້ໜຶ່ງຫາກໍ່ເວົ້າ ຄືນໃໝ່ ແລະ ຖາມວ່າ ມີໃຜເຫັນດີ ຫຼື ບໍ່ເຫັນດີບໍ່. ຕົວຢ່າງເຊັ່ນ: 'ລາວໄດ້ເວົ້າວ່າ ____________. ເຈົ້າເຫັນດີບໍ່?'
- *ຟັງ.* ຖ້າເຈົ້າຕັ້ງໃຈຟັງສິ່ງທີ່ໄວໜຸ່ມເວົ້າແທ້ໆ, ພວກເຂົາຈະຢາກເວົ້າຫຼາຍຂຶ້ນອີກ. ເຈົ້າຍັງສາມາດຄິດຫາຄຳຖາມທີ່ມີຄວາມກ່ຽວຂ້ອງ ທີ່ສາມາດຊ່ວຍການສົນທະນາ.
- *ຖາມຫຼາຍໆຄຳຖາມ.* ຄຳຖາມດັ່ງກ່າວເຫຼົ່ານີ້ ຄວນເປັນຄຳຖາມກ່ຽວກັບສິ່ງທີ່ໄວໜຸ່ມຄິດ ແລະ ເຊື່ອ, ບໍ່ແມ່ນຄຳຖາມທີ່ພຽງເພື່ອທົດສອບຄວາມຮູ້ ກ່ຽວກັບຄວາມຈິງເທົ່ານັ້ນ. ຕົວຢ່າງຂອງບັນດາຄຳຖາມກ່ຽວກັບສິ່ງທີ່ໄວໜຸ່ມຄິດ ແລະ ເຊື່ອ ປະກອບດ້ວຍ:

  » 'ເຈົ້າຄິດວ່າ ເຫດຜົນໃດແດ່ ທີ່ເຮັດໃຫ້ໄວໜຸ່ມອອກໂຮງຮຽນ?'

  » 'ເຈົ້າຄິດວ່າເຈົ້າສາມາດໃຊ້ບັນຊີກວດກາເຫຼົ່ານີ້ ໃນຊີວິດສ່ວນຕົວຂອງເຈົ້າບໍ່? ໃຊ້ຍ້ອນຫຍັງ ຫຼື ບໍ່ໃຊ້ຍ້ອນຫຍັງ?'

  ຄຳຖາມກ່ຽວກັບຄວາມຮູ້ແມ່ນ:

  » 'ບອກຊື່ປະເທດໃດໜຶ່ງທີ່ເປັນປະເທດປາຍທາງຂອງການຄ້າມະນຸດ.' ຢູ່ໃນເຄື່ອງມືການນຳທາງແບບສະຫຼາດ ມີຫຼາຍໆຄຳຖາມກ່ຽວກັບ ຄວາມຄິດ ແລະ ຄວາມເຫັນ.

## ການຕອບໂຕ້ ກັບບັນດາຄຳຖະແຫຼງທີ່ຍາກ

ອະທິບາຍວ່າບາງເທື່ອ ຜູ້ເຂົ້າຮ່ວມສະເໜີຄຳຄິດເຫັນທີ່ ກົງກັນຂ້າມກັບ ຄຸ່ນຄ່າຂອງອົງການສຸພະນິມິດ ຫຼື ເປົ້າໝາຍຂອງເຄື່ອງມື. ຕົວຢ່າງເຊັ່ນ:

> 'ໂຮງຮຽນແມ່ນບໍ່ມີປະໂຫຍດ. ມີວຽກແທ້ເຮັດ ຢູ່ໃນໂຮງງານໃນຕອນອາຍຸ 14 ປີ ມັນດີກວ່າ.'

ໃນຖານະທີ່ເປັນ ຜູ້ອຳນວຍຄວາມສະດວກ ຂອງ SNYC ມັນສຳຄັນທີ່ຕ້ອງເນັ້ນໃສ່ຄຳຄິດເຫັນດັ່ງກ່າວນີ້. ບາດກ້າວທຳອິດ ແມ່ນໃຫ້ຖາມວ່າ ມີໃຜຢູ່ໃນກຸ່ມບໍ່ເຫັນດີບໍ່. ບາດກ້າວຕໍ່ໄປແມ່ນ ໃຫ້ຖາມບັນດາຄຳຖາມ ທີ່ຊຸກຍູ້ບັນດາຜູ້ເຂົ້າຮ່ວມໃຫ້ພິຈາລະນາຄືນ, ຍົກຕົວຢ່າງເຊັ່ນ:

> 'ທັກສະໃດທີ່ຈຳເປັນສຳລັບວຽກທີ່ດີ ຢູ່ໃນໂຮງງານ?'
>
> 'ບຸກຄົນທີ່ມີລະດັບການສຶກສາສູງ ໄດ້ຮັບເງິນເດືອນສູງບໍ່?'

ຫຼັງຈາກນັ້ນ ຜູ້ອຳນວຍຄວາມສະດວກຂອງ SNYC ສາມາດສະເໜີແບບສຸພາບ ກ່ຽວກັບຈຸດຢືນຂອງອົງການສຸພະນິມິດ ແລະ ເຫດຜົນທີ່ຢູ່ເບື້ອງຫຼັງຂອງຈຸດຢືນດັ່ງກ່າວ, ຍົກຕົວຢ່າງເຊັ່ນ:

> 'ພວກເຮົາຄິດວ່າ ໂຮງຮຽນແມ່ນມີຄວາມສຳຄັນ. ມັນເຮັດໃຫ້ເຈົ້າສາມາດ ສ້າງທັກສະ, ສ້າງມິດຕະພາບ ແລະ ປັບປຸງຊີວິດຂອງເຈົ້າ. ມັນເປີດປະຕູສຳລັບໂອກາດມີວຽກເຮັດໃນອະນາຄົດ, ຍ້ອນວ່າວຽກເກືອບທັງໝົດຕ້ອງການ ການສຶກສາ. ມັນໝາຍຄວາມວ່າ ເຈົ້າສາມາດມີວຽກທີ່ມີລາຍໄດ້ທີ່ດີກວ່າ ເມື່ອເຈົ້າອາຍຸຫຼາຍຂຶ້ນ. ມັນຍັງເຮັດໃຫ້ເຈົ້າສາມາດຮຽນຮູ້ ວິທີອ່ານ ແລະ ເຂົ້າໃຈສັນຍາ. ມັນຍັງ

ເປັນສິ່ງທີ່ຜິດກົດໝາຍທີ່ໄວໜຸ່ມ ອາຍຸ 14 ປີ ເຮັດວຽກເປັນກຳມະກອນໂຮງງານເຕັມເວລາ ຢູ່ໃນ ປະເທດຂອງພວກເຮົາ.

## ກິດຈະກຳ: ການອຳນວຍຄວາມສະດວກການສົນທະນາ

ແບ່ງບັນດາຜູ້ເຂົ້າຮ່ວມເປັນກຸ່ມ 8 ຄົນ. ຢາຍບັດ 'IS 7a: ການສະແດງບົດບາດສົມມຸດການສົນທະນາ'. ຫຼັງຈາກນັ້ນ ຢາຍສຳເນົາເອກະສານ 'IS 7b: ການອຳນວຍຄວາມສະດວກການສົນທະນາ' ໃຫ້ແຕ່ລະກຸ່ມ. ອະທິບາຍວ່າ ເຈົ້າຈະໄດ້ສະແດງບົດບາດສົມມຸດ ກ່ຽວກັບການສົນທະນາ ແລະ ຜູ້ເຂົ້າຮ່ວມແຕ່ລະຄົນຄວນ ສະແດງຕາມຄຳແນະນຳຂອງບັດທີ່ພວກເຂົາໄດ້ຮັບ. ອະທິບາຍວ່າ ບາງຄົນ ອາດຈະຖືກແນະນຳໃຫ້ບໍ່ສຸພາບ ແດ່ໜ້ອຍໜຶ່ງ ແລະ ທຸກຄົນຕ້ອງຈື່ໄວ້ວ່າພວກເຂົາພຽງແຕ່ສະແດງເທົ່ານັ້ນ. ຜູ້ທີ່ໄດ້ຮັບບັດ ບົດບາດຜູ້ອຳ ນວຍຄວາມສະດວກ ຄວນພະຍາຍາມໃຊ້ເຕັກນິກ ທີ່ໃຫ້ຢູ່ໃນ 'IS 7b: ການອຳນວຍຄວາມສະດວກການ ສົນທະນາ'.

ຜູ້ອຳນວຍຄວາມສະດວກຄວນເລືອກ ໜຶ່ງໃນຫົວຂໍ້ດັ່ງຕໍ່ໄປນີ້ ເພື່ອສົນທະນາ:

- ຮູບເງົາທີ່ໄດ້ຮັບຄວາມນິຍົມ
- ເພງທີ່ໄດ້ຮັບຄວາມນິຍົມ
- ອາຫານຕ່າງປະເທດ
- ນັກກິລາທີ່ດັງ.

ອະທິບາຍວ່າ ແນວຄວາມຄິດ ແມ່ນເພື່ອສົນທະນາກ່ຽວກັບຫົວຂໍ້ ທີ່ບໍ່ກ່ຽວຂ້ອງກັບການຄ້າມະນຸດ, ເພື່ອວ່າ ບັນດາຜູ້ເຂົ້າຮ່ວມຈະສາມາດສຸມໃສ່ທັກສະການອຳນວຍຄວາມສະດວກ.

ອະທິບາຍວ່າ ກຸ່ມຄວນສົນທະນາ ຫົວຂໍ້ ໜຶ່ງ ຕໍ່ 5 ນາທີ. ເມື່ອພວກເຂົາສຳເລັດແລ້ວ, ແຕ່ລະບຸກຄົນ ເອົາບັດ ໃສ່ໃນຖົງ, ປົນກັນ ແລະ ເລືອກບັດໃໝ່. (ຖ້າຫາກ ຜູ້ໃດຜູ້ໜຶ່ງໄດ້ບັດ ຜູ້ອຳນວຍຄວາມສະດວກ ສອງເທື່ອ, ລາວຄວນເອົາໃສ່ຖົງຄືນ ແລະ ເລືອກເອົາບັດໃໝ່.)
ກຸ່ມຄວນ ລົ້ມຄືນກິດຈະກຳດັ່ງກ່າວນີ້ ສາມ ຫຼື ສີ່ເທື່ອ ເພື່ອເຮັດໃຫ້ຜູ້ເຂົ້າຮ່ວມມີໂອກາດໄດ້ສະແດງບົດບາດອື່ນ.

ເມື່ອພວກເຂົາສຳເລັດກິດຈະກຳ, ບອກພວກເຂົາໃຫ້ລວມເປັນກຸ່ມໃຫຍ່ກຸ່ມດຽວ. ຖາມວ່າ:

- ມີຄວາມຮູ້ສຶກແນວໃດໃນການເຮັດກິດຈະກຳດັ່ງກ່າວນີ້?
- ທັກສະໃດທີ່ງ່າຍສຳລັບການນຳໃຊ້?
- ທັກສະໃດຍາກ?
- ເປັນຫຍັງມັນຈຶ່ງຍາກ?
- ເຈົ້າຮູ້ສຶກວ່າເຈົ້າໄດ້ປັບປຸງບໍ່ ເມື່ອໄດ້ຝຶກຊ້ອມຫຼາຍຂຶ້ນ?
- ມີໃຜທີ່ໄດ້ພັດທະນາວິທີການສ່ວນຕົວຂອງຕົນບໍ່ ທີ່ເຮັດໃຫ້ມັນງ່າຍຂຶ້ນບໍ່? ເຈົ້າຢາກຈະແບ່ງປັນ ແລກ ປ່ຽນກັບກຸ່ມບໍ່?

## ສະຫຼຸບສັງລວມບົດຮຽນ

ຍຸດທະສາດ ສຳລັບ ຜູ້ອຳນວຍຄວາມສະດວກ SNYC ທີ່ດີ:

- ລວມເອົາບັນດາຜູ້ເຂົ້າຮ່ວມທີ່ມິດງຽບ
- ຈັດການກັບຜູ້ທີ່ເວົ້າຫຼາຍ
- ການຈັດລຽງຄຳເວົ້າໃໝ່.
- ຟັງ
- ຖາມຫຼາຍໆຄຳຖາມກ່ຽວກັບຄຳຄິດເຫັນຂອງໄວໜຸ່ມ
- ນຳສະເໜີຈຸດຢືນຂອງອົງການສຸພະນິມິດ  ເມື່ອບັນດາຜູ້ເຂົ້າຮ່ວມສະເໜີ  ຄຳຄິດເຫັນທີ່ກົງກັນຂ້າມກັບ ຄຸ້ນຄ່າຂອງອົງການສຸພະນິມິດ

## ການສະແດງບົດບາດສົມມຸດການສົນທະນາ

*(ຈົ່ງເອົາໃຈໃສ່ວ່າ ບາງບົດ ມີສອງເທື່ອ)*

ເຈົ້າເປັນຜູ້ອໍານວຍຄວາມສະດວກ.

ເຈົ້າເວົ້າຫຼາຍ, ຄວບຄຸມການສົນທະນາ ຈົນກະທັ້ງ ຜູ້ອໍານວຍຄວາມສະດວກບອກເຈົ້າຢ່າງສຸພາບວ່າໃຫ້ຢຸດ. ຫຼັງຈາກນັ້ນກໍ່ຢຸດ. ເຮັດສິ່ງນີ້ພຽງຄັ້ງດຽວເທົ່ານັ້ນ.

ເຈົ້າອາຍ. ບໍ່ເວົ້າ ນອກຈາກວ່າເຈົ້າຖືກຖາມ.

ເຈົ້າອາຍ. ບໍ່ເວົ້າ ນອກຈາກວ່າເຈົ້າຖືກຖາມ.

ເຈົ້າລົມກັບຄົນຢູ່ທາງຂ້າງຕະຫຼອດເວລາ

ເຈົ້າສະເໜີຄວາມເຫັນ ທີ່ຄັດກັບຄວາມເຊື່ອຂອງອົງການສຸພະນິມິດ. ເຮັດສິ່ງນີ້ພຽງຄັ້ງດຽວເທົ່ານັ້ນ.

ເຈົ້າມີສ່ວນຮ່ວມກັບການສົນທະນາແບບປົກກະຕິ.

ເຈົ້າມີສ່ວນຮ່ວມກັບການສົນທະນາແບບປົກກະຕິ

## ການອໍານວຍຄວາມສະດວກການສົນທະນາ

**ວິທີການອໍານວຍຄວາມສະດວກການສົນທະນາ**

- **ລວມເອົາບັນດາຜູ້ເຂົ້າຮ່ວມທີ່ມິດງຽບ.** ສັງເກດເບິ່ງກຸ່ມ. ຖ້າຫາກຜູ້ເຂົ້າຮ່ວມຈໍານວນໃດໜຶ່ງບໍ່ເວົ້າ, ຖາມພວກເຂົາຢ່າງສຸພາບກ່ຽວກັບຄວາມຄິດເຫັນຂອງລາວ ຕໍ່ກັບຫົວຂໍ້ດັ່ງກ່າວນີ້. ຫ້າມບັງຄັບໃຫ້ພວກເຂົາເວົ້າ, ແຕ່ວ່າເຊື້ອເຊີນໃຫ້ພວກເຂົາເວົ້າ ຖ້າພວກເຂົາຕ້ອງການ.
- **ຈໍາກັດຜູ້ທີ່ເວົ້າຫຼາຍ.** ຖ້າຫາກຜູ້ເຂົ້າຮ່ວມຜູ້ໃດຜູ້ໜຶ່ງເວົ້າຕະຫຼອດເວລາ, ສະເໜີ ແບບສຸພາບກັບລາວວ່າ ໃຫ້ໂອກາດຜູ້ອື່ນແດ່. ຍົກຕົວຢ່າງເຊັ່ນ: ຖ້າຈົນກວ່າຜູ້ເຂົ້າຮ່ວມຜູ້ດັ່ງກ່າວເວົ້າສຸດປະໂຫຍກ ແລະ ເວົ້າວ່າ, **'ຂອບໃຈ ສໍາລັບສິ່ງດັ່ງກ່າວ. ຂໍໂທດທີ່ຕ້ອງຢຸດເຈົ້າໄວ້ສໍ່ານີ້,ແຕ່ວ່າເຮົາມີເວລາຈໍາກັດ. ຂ້ອຍຂໍຖາມແດ່ ມີໃຜອີກບໍ່ທີ່ມີຄໍາຄິດເຫັນກ່ຽວກັບຫົວຂໍ້ດັ່ງກ່າວນີ້?'**
- **ຈັດລຽງຄໍາເວົ້າໃໝ່.** ເຈົ້າສາມາດເຮັດໃຫ້ການສົນທະນາ ສືບເນື່ອງ ດ້ວຍການຈັດລຽງຄໍາເວົ້າ ສິ່ງທີ່ໃຜຜູ້ໜຶ່ງຫາກໍ່ເວົ້າ ຄືນໃໝ່ ແລະ ຖາມວ່າ ມີໃຜເຫັນດີ ຫຼື ບໍ່ເຫັນດີບໍ່. ຕົວຢ່າງເຊັ່ນ: **'ລາວໄດ້ເວົ້າວ່າ _____________. ເຈົ້າເຫັນດີບໍ່?'**
- ຟັງ. ຖ້າເຈົ້າຕັ້ງໃຈຟັງສິ່ງທີ່ໄວໜຸ່ມເວົ້າແທ້ໆ, ພວກເຂົາຈະຢາກເວົ້າຫຼາຍຂຶ້ນອີກ. ເຈົ້າຍັງສາມາດຄິດຫາຄໍາຖາມທີ່ມີຄວາມກ່ຽວຂ້ອງ ທີ່ສາມາດຊ່ວຍການສົນທະນາ.
- **ຖາມຫຼາຍໆຄໍາຖາມ.** ຖາມຫຼາຍໆຄໍາຖາມ. **ຄໍາຖາມດັ່ງກ່າວເຫຼົ່ານີ້ ຄວນເປັນຄໍາຖາມກ່ຽວກັບສິ່ງທີ່ໄວໜຸ່ມຄິດ ແລະ ເຊື່ອ,** ບໍ່ແມ່ນຄໍາຖາມທີ່ພຽງເພື່ອທົດສອບຄວາມຮູ້ ກ່ຽວກັບຄວາມຈິງເທົ່ານັ້ນ. ຕົວຢ່າງຂອງບັນດາຄໍາຖາມ ກ່ຽວກັບສິ່ງທີ່ໄວໜຸ່ມຄິດ ແລະ ເຊື່ອ ປະກອບດ້ວຍ:

  » 'ເຈົ້າຄິດວ່າ ເຫດຜົນໃດແດ່ ທີ່ເຮັດໃຫ້ໄວໜຸ່ມອອກໂຮງຮຽນ?'

  » 'ເຈົ້າຄິດວ່າ ເຈົ້າສາມາດໃຊ້ບັນຊີກວດກາເຫຼົ່ານີ້ ໃນຊີວິດສ່ວນຕົວຂອງເຈົ້າບໍ່? ໃຊ້ຍ້ອນຫຍັງ ຫຼື ບໍ່ໃຊ້ຍ້ອນຫຍັງ?'

  ຄໍາຖາມກ່ຽວກັບຄວາມຮູ້ແມ່ນ:

  » 'ບອກຊື່ປະເທດໃດໜຶ່ງທີ່ເປັນປະເທດປາຍທາງຂອງການຄ້າມະນຸດ.'

# ບົດຮຽນທີ 8: ວິທີເນັ້ນໃສ່ ເນື້ອໃນດ້ານເພດສຳພັນ ຫຼື ບັນຫາທີ່ລົບກວນ

## ຈຸດປະສົງ

ບັນດາຜູ້ເຂົ້າຮ່ວມຈະຮຽນຮູ້ກ່ຽວກັບວິທີເນັ້ນໃສ່ຫົວຂໍ້ດ້ານເພດສຳພັນ ຫຼື ບັນຫາທີ່ລົບກວນ

## ເວລາ

60 ນາທີ

## ອຸປະກອນ

- ເຄື່ອງມືສຳລັບຜູ້ເຂົ້າຮ່ວມແຕ່ລະຄົນ

## ຜູ້ເຂົ້າຮ່ວມ

ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກ 2–3 ຄົນ ຈາກແຕ່ລະ SNYC

## ຜູ້ອຳນວຍຄວາມສະດວກ

ພະນັກງານພາຍໃນປະເທດຂອງອົງການສຸພະນິມິດ ທີ່ໄດ້ເຂົ້າຮ່ວມການຝຶກອົບຮົມ ETIP SNYC

## ຄຳແນະນຳ

ຊຸກຍູ້ໃຫ້ບັນດາຜູ້ເຂົ້າຮ່ວມຖາມຄຳຖາມ ກ່ຽວກັບ ບັນດາເອກະສານ ຫຼື ອຸປະກອນດັ່ງຕໍ່ໄປນີ້.

ອະທິບາຍວ່າ ການຄ້າມະນຸດແມ່ນບັນຫາທີ່ສະຫຼົດໃຈທີ່ສຸດ ແລະ ມັນກວມເອົາຫຼາຍບັນຫາຂອງການລະເມີດສິດທິມະນຸດ. ເພື່ອເຕືອນໄວໜຸ່ມໃຫ້ລະມັດລະວັງ ກ່ຽວກັບ ຄວາມອັນຕະລາຍທີ່ເປັນໄປໄດ້ ຈາກການຄ້າມະນຸດ, ເຄື່ອງມືດັ່ງກ່າວນີ້ ໄດ້ລວມເອົາ ບົດເລື່ອງ ແລະ ຫົວຂໍ້ທີ່ອາດຈະໜ້າເສົ້າໃຈ ສຳລັບບັນດາຜູ້ເຂົ້າຮ່ວມ.

ອະທິບາຍວ່າ ສິ່ງດັ່ງກ່າວນີ້ ແມ່ນບາງຍຸດທະສາດ ເພື່ອຊ່ວຍບັນດາຜູ້ອຳນວຍຄວາມສະດວກໃຫ້ມີຄວາມລະອຽດອ່ອນ ເມື່ອສົນທະນາກ່ຽວກັບບັນຫາດັ່ງກ່າວນີ້.

## ການເຮັດວຽກກັບ ພໍ່ແມ່/ຜູ້ປົກຄອງ

ອະທິບາຍວ່າ ເຄື່ອງດັ່ງກ່າວນີ້ ແນະນຳວ່າ ບັນດາຜູ້ອຳນວຍຄວາມສະດວກຂອງ SNYC ຄວນ ພົບກັບ ພໍ່ແມ່/ຜູ້ປົກຄອງ ແລະ ໄວໜຸ່ມເປັນກຸ່ມ ເພື່ອສົນທະນາກ່ຽວກັບເຄື່ອງມື ຢູ່ສະຖານທີ່ປະຊຸມກ່ອນຈະເລີ່ມປະຊຸມ. ຢູ່ໃນກອງປະຊຸມດັ່ງກ່າວນີ້ ບັນດາຜູ້ອຳນວຍຄວາມສະດວກຂອງ SNYC ຄວນແຈ້ງໃຫ້ ພໍ່ແມ່/ຜູ້ປົກຄອງຮູ້ກ່ຽວກັບຫົວຂໍ້ ທີ່ລວມຢູ່ໃນເຄື່ອງມື ແລະ ຖາມພວກເຂົາວ່າ ມີຫົວຂໍ້ໃດບໍ່ທີ່ ພໍ່ແມ່/ຜູ້ປົກຄອງ ບໍ່ຕ້ອງການໃຫ້ລູກຂອງພວກເຂົາຮຽນຮູ້. ຫົວຂໍ້ທັງໝົດນີ້ ແມ່ນຈະຊ່ວຍໄວໜຸ່ມໃນການປົກປ້ອງຕົນເອງ, ແຕ່ວ່າ SNYC ຈະບໍ່ສອນ ຫົວຂໍ້ໃດໜຶ່ງຂອງບົດຮຽນ ໃຫ້ແກ່ໄວໜຸ່ມ ຖ້າຫາກ ພໍ່ແມ່ ຫຼື ຜູ້ປົກຄອງ ຄັດຄ້ານ. SNYC ຍັງຈະຂໍການອະນຸຍາດ ຈາກພໍ່ແມ່/ຜູ້ປົກຄອງ ກ່ອນທີ່ຈະສົນທະນາ ກ່ຽວກັບບັນດາຫົວຂໍ້ເຫຼົ່ານີ້ ໂດຍບອກໃຫ້ພວກເຂົາເຊັນໃບຍິນຍອມ.

## ຄວາມເໝາະສົມ ດ້ານອາຍຸ ຫຼື ປະສົບການ

ອະທິບາຍວ່າ ເຄື່ອງມື ແມ່ນຖືກອອກແບບສຳລັບໄວໜຸ່ມອາຍຸ 12–17 ປີ. ແຕ່ເຖິງແນວໃດກໍ່ຕາມ, ບົດຮຽນທີ 7:'ການຄ້າມະນຸດເພື່ອ ການໃຊ້ແຮງງານເດັກ ແລະ ການຂູດຮີດທາງເພດ' ຢູ່ໃນເຄື່ອງມືດັ່ງກ່າວນີ້ ອາດຈະບໍ່ເໝາະສົມ ສຳລັບໄວໜຸ່ມທີ່ອາຍຸຍັງນ້ອຍ. ອົງການສຸພະນິມິດເຮັດວຽກກັບໄວໜຸ່ມ ຈາກຫຼາຍສະພາບເງື່ອນໄຂ ໂດຍສຸມໃສ່ ໄວໜຸ່ມທີ່ ຢູ່ໃນ ພາວະສ່ຽງສູງທີ່ສຸດ. ໃນບາງກໍລະນີ ອາດຈະມີໄວໜຸ່ມທີ່ເປັນຜູ້ເຂົ້າຮ່ວມ SNYC ທີ່ເຄີຍມີປະສົບການ ທີ່ຄ້າຍຄືກັບຜູ້ໃຫຍ່. ຕົວຢ່າງກ່ຽວກັບສິ່ງດັ່ງກ່າວນີ້ ອາດຈະແມ່ນ SNYC ແຫ່ງໜຶ່ງທີ່ເຮັດວຽກກັບ ເດັກນ້ອຍອາຍຸ 13 ປີ ທີ່ຂາຍບໍລິການທາງເພດ. ໃນກໍລະນີຄືດັ່ງກ່າວນີ້, ຜູ້ອຳນວຍຄວາມສະດວກຂອງ SNYC ອາດຈະຕັດສິນໃຈວ່າ ມັນມີຄວາມສຳຄັນ ທີ່ຕ້ອງກວມເອົາບົດຮຽນດັ່ງກ່າວນີ້ ເຖິງແມ່ນວ່າ ໄວໜຸ່ມຈະອາຍຸຍັງນ້ອຍກໍ່ຕາມ, ຍ້ອນວ່າມັນໄດ້ເນັ້ນໃສ່ບັນຫາ ທີ່ສຳຄັນໃນຊີວິດຂອງພວກເຂົາ. ເຖິງແນວໃດກໍ່ຕາມ, SNYC ຫຼາຍແຫ່ງທີ່ແຕກຕ່າງກັນ ທີ່ເຮັດວຽກໃນຊຸມຊົນທີ່ອະນຸລັກນິຍົມດ້ານສາດສະໜາ ອາດຈະຕັດສິນໃຈ ສອນບົດຮຽນທີ 7 ພຽງແຕ່ສຳລັບໄວໜຸ່ມທີ່ອາຍຸ ກາຍ 16 ປີ ຂຶ້ນໄປ ຫຼື ບໍ່ສອນເລີຍ. ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ຕ້ອງຕັດສິນໃຈ ຮ່ວມກັບ ພໍ່ແມ່ຂອງໄວໜຸ່ມ.

ຜູ້ອຳນວຍຄວາມສະດວກຂອງ SNYC ຍັງອາດຈະເລືອກ ທີ່ຈະແບ່ງກຸ່ມ ແບບແຍກເພດ ສຳລັບບົດຮຽນທີ 7 ເພື່ອຫຼີກລ່ຽງ ການອາຍ ແລະ ເຮັດໃຫ້ ທັງສອງກຸ່ມສາມາດເວົ້າຢ່າງຈິງໃຈ.

## ວິທີເວົ້າກ່ຽວກັບບັນຫາທີ່ລະອຽດອ່ອນ

ຫຼາຍໆ ຫົວຂໍ້ ຢູ່ໃນເຄື່ອງມື ແມ່ນມີຄວາມຫຍຸ້ງຍາກສຳລັບສົນທະນາ. ຜູ້ອຳນວຍຄວາມສະດວກຂອງ SNYC ຕ້ອງສາມາດ ເວົ້າກ່ຽວກັບຫົວຂໍ້ເຫຼົ່ານີ້ ຢ່າງສຸຂຸມ ແລະ ລະອຽດອ່ອນ. ໃນຖານະທີ່ເປັນ ຜູ້ອຳນວຍຄວາມສະດວກຂອງ SNYC, ມັນສຳຄັນ ທີ່ພວກເຂົາຕ້ອງທົດສອບຄວາມຮູ້ສຶກຂອງພວກເຂົາເອງ ກ່ຽວກັບບັນຫາເຫຼົ່ານີ້. ພວກເຂົາຕ້ອງສາມາດ ເວົ້າກ່ຽວກັບເລື່ອງເພດສຳພັນ, ການຄ້າປະເວນີເດັກ (CSEC) ແລະ ການຄ້າມະນຸດ ໂດຍປາດສະຈາກການຫົວ ແບບຕື່ນເຕັ້ນ ຫຼື ເກີດຄວາມໂສກເສົ້າໃນລະຫວ່າງບົດຮຽນ.

SNYC ຫຼາຍແຫ່ງໃນ ປະເທດຈີນ ຈະເຮັດວຽກກັບໄວໜຸ່ມ ທີ່ອາໃສຢູ່ໃນໂຮງຮຽນກິນນອນ ແລະ ອາດຈະມີຄວາມຮູ້ພຽງເລັກໜ້ອຍກ່ຽວກັບເພດສຳພັນ. ບັນດາ SNYC ເຫຼົ່ານີ້ ຄວນຈະເປັນຄູ່ຮ່ວມງານກັບອົງການຈັດຕັ້ງ NGO ອື່ນໆໃນທ້ອງຖິ່ນ ທີ່ເຮັດວຽກທາງດ້ານ ການຄຸມກຳເນີດ ຫຼື ປ້ອງກັນ HIV. ຄູ່ຮ່ວມງານ NGO ດັ່ງກ່າວນີ້ ສາມາດໄປຢ້ຽມຢາມ SNYC ເພື່ອສະໜອງ ບົດຮຽນເພີ່ມເຕີມ ເພື່ອອະທິບາຍ ຄວາມຮູ້ພື້ນຖານກ່ຽວກັບເພດສຳພັນ ໃຫ້ແກ່ໄວໜຸ່ມທີ່ອາຍຸສູງ (15–17 ປີ) ເພື່ອວ່າ ພວກເຂົາຈະສາມາດ ປ້ອງກັນ ຕົນເອງໄດ້ດີຂຶ້ນໃນອະນາຄົດ.

## ກິດຈະກຳ: ການສົນທະນາກ່ຽວກັບຫົວຂໍ້ທີ່ຍາກ

ອະທິບາຍວ່າ ກິດຈະກຳດັ່ງກ່າວນີ້ ສຸມໃສ່ ບາງຫົວຂໍ້ທີ່ຍາກ ຢູ່ໃນເຄື່ອງມື.
ອ່ານແຕ່ລະຫົວຂໍ້ຢູ່ໃນບັນຊີລາຍຊື່ລຸ່ມນີ້ ດັ່ງໆ:

- ໄວໜຸ່ມທີ່ເຮັດວຽກຢູ່ໃນສະຖານທີ່ຂາຍບໍລິການ.
- ໄວໜຸ່ມທີ່ຖືກລະເມີດທາງດ້ານເພດ ໂດຍພໍ່ແມ່.
- ໄວໜຸ່ມທີ່ຖືກຕີໂດຍພໍ່ແມ່.
- ໄວໜຸ່ມທີ່ຖືກດ່າມະນຸດໂດຍພໍ່ແມ່.
- ໄວໜຸ່ມທີ່ຕິດຢາເສບຕິດ.
- ພໍ່ແມ່ທີ່ດື່ມເຫຼົ້າຫຼາຍເກີນໄປ.
- ຊຸກຍູ້ສົ່ງເສີມແມ່ຍິງ.
- ໄວໜຸ່ມ ທີ່ບາງເທື່ອບໍ່ເຫັນດີ ກັບຜູ້ໃຫຍ່ ກ່ຽວກັບ ຄວາມປອດໄພ.
- ໄວໜຸ່ມທີ່ລະເມີດກົດໝາຍ ເມື່ອພວກເຂົາເຄື່ອນຍ້າຍແບບຜິດກົດໝາຍ.

ໃນເວລາທີ່ເຈົ້າອ່ານແຕ່ລະຫົວຂໍ້, ບອກໃຫ້ໄວໜຸ່ມ ຈັດລະດັບຂອງຕົນຢູ່ໃນແຖວ ໂດຍອີງໃສ່ມາດຕະຖານຢູ່ດ້ານລຸ່ມນີ້. ຍົກຕົວຢ່າງ: ຖ້າຜູ້ເຂົ້າຮ່ວມຮູ້ສຶກສະດວກສະບາຍຫຼາຍ ທີ່ຈະສົນທະນາກ່ຽວກັບໄວໜຸ່ມທີ່ເຮັດວຽກຢູ່ໃນສະຖານທີ່ຂາຍບໍລິການ, ບຸກຄົນດັ່ງກ່າວຄວນຢືນຢູ່ສົ້ນໜຶ່ງຂອງເສັ້ນ, ໃນຂະນະດຽວກັນ ບຸກຄົນທີ່ຮູ້ສຶກບໍ່ສະດວກສະບາຍຫຼາຍ ທີ່ຈະສົນທະນາກ່ຽວກັບຫົວຂໍ້ດັ່ງກ່າວນີ້ ຈະຢືນຢູ່ອີກສົ້ນໜຶ່ງຂອງເສັ້ນ. ສຳລັບແຕ່ລະຫົວຂໍ້ ຢູ່ໃນ IS, ພວກເຂົາຈະຈັດລະດັບຂອງຕົນຄືນໃໝ່ ສອງເທື່ອ ໂດຍອີງໃສ່ມາດຕະຖານຢູ່ດ້ານລຸ່ມນີ້, ເຊິ່ງຂຶ້ນກັບວ່າພວກເຂົາຮູ້ສຶກແນວໃດ.

ບໍ່ສະດວກສະບາຍ ທີ່ຈະສົນທະນາ ↔ ສະດວກສະບາຍ ທີ່ຈະສົນທະນາ

ເຮັດໃຫ້ມີການໂຕ້ຖຽງກັນຫຼາຍຢູ່ໃນຊຸມຊົນ ↔ ບໍ່ມີການໂຕ້ຖຽງກັນຫຼາຍຢູ່ໃນຊຸມຊົນ

ຫຼັງຈາກນັ້ນບອກກຸ່ມໃຫ້ລວມເຂົ້າກັນ ແລະ ສົນທະນາກ່ຽວກັບບັນດາຄຳຖາມດັ່ງຕໍ່ໄປນີ້:

- ລະດັບມີການປ່ຽນແປງບໍ່ ສຳລັບແຕ່ລະປະເພດ?
- ມີຫົວຂໍ້ໃດບໍ່ ທີ່ບໍ່ສະດວກສະບາຍສຳລັບໄວໜຸ່ມໃນການສົນທະນາ ແລະ ເຮັດໃຫ້ມີການໂຕ້ຖຽງກັນຫຼາຍຢູ່ໃນຊຸມຊົນ?
- ເຈົ້າຈະເຮັດແນວໃດ ໃນສະຖານະການຄືແບບດັ່ງກ່າວນີ້?
- ເຈົ້າຈະສຸມໃສ່ຄວາມຕ້ອງການທີ່ຈຳເປັນຂອງເດັກນ້ອຍ ຫຼື ຂໍ້ສະເໜີຂອງຊຸມຊົນ?
- ມັນເປັນໄປໄດ້ບໍ່ທີ່ຈະຊ່ວຍເດັກນ້ອຍ ໂດຍປາດສະຈາກການເຮັດໃຫ້ຊຸມຊົນເສຍໃຈ?
- ຖ້າເປັນໄປໄດ້, ເຮັດແນວໃດ?

## ສະຫຼຸບສັງລວມບົດຮຽນ

- ເຄື່ອງມື ໄດ້ສົນທະນາກ່ຽວກັບ ຫົວຂໍ້ ດ້ານເພດສຳພັນ ຫຼື ບັນຫາທີ່ລຶບກວນ
- SNYC ຍັງຈະຂໍອະນຸຍາດ ຈາກພໍ່ແມ່/ຜູ້ປົກຄອງ ກ່ອນທີ່ຈະສົນທະນາ ກ່ຽວກັບບັນດາ ຫົວຂໍ້ເຫຼົ່ານີ້ ໂດຍບອກໃຫ້ພວກເຂົາເຊັນໃບຍິນຍອມ.
- ຜູ້ອຳນວຍຄວາມສະດວກຂອງ SNYC ອາດຈະຕັດສິນໃຈ ສອນພຽງແຕ່ໄວໜຸ່ມທີ່ມີອາຍຸ ສູງກວ່າ ກ່ຽວກັບ ບົດຮຽນທີ 7:'ການຄ້າມະນຸດເພື່ອ ການໃຊ້ແຮງງານເດັກ ແລະ ການຂູດຮີດ ທາງເພດ' ຢູ່ໃນ SNYC
- ຜູ້ອຳນວຍຄວາມສະດວກຂອງ SNYC ອາດຈະຕັດສິນໃຈ ແບ່ງກຸ່ມບັນດາຜູ້ເຂົ້າຮ່ວມ ແບບ ແຍກເພດຍິງ - ຊາຍ ເວລາສອນ ບົດຮຽນທີ 7
- ຜູ້ອຳນວຍຄວາມສະດວກຂອງ SNYC ຕ້ອງສາມາດ ສົນທະນາ ກ່ຽວກັບຫົວຂໍ້ທີ່ຍາກ ຫຼື ກ່ຽວກັບເພດສຳພັນ ຢ່າງສຸຂຸມ ແລະ ດ້ວຍນ້ຳສຽງທີ່ບໍ່ຕື່ນເຕັ້ນກະທົບກະເທືອນດ້ານຈິດໃຈ.

# ບົດຮຽນທີ 9: ການປົກປ້ອງເດັກ ຢູ່ໃນ SNYC

## ຈຸດປະສົງ

ພາກນີ້ແມ່ນອີງໃສ່ ຄໍາແນະນໍາຂອງອົງການສຸພະນິມິດ ຢູ່ໃນ ແນວທາງຊີ້ນໍາ ສໍາລັບການປ້ອງກັນ ແລະ ຕອບຕອບໂຕ້ຕໍ່ເດັກນ້ອຍ ທີ່ຢູ່ໃນພາວະຄວາມເຈັບປວດດ້ານຈິດໃຈ . ບັນດາຜູ້ເຂົ້າຮ່ວມ ຈະໄດ້ຮຽນຮູ້ວິທີຕອບໂຕຕໍ່ໄວໜຸ່ມທີ່ມີຄວາມເຈັບປວດດ້ານຈິດໃຈ ແລະ ຈະຖືກແນະນໍາກ່ຽວກັບຄຸນລັກສະນະຕົ້ນຕໍ ຂອງນະໂຍບາຍການປົກປ້ອງເດັກຂອງອົງການສຸພະນິມິດ, ເຊິ່ງລວມຢູ່ໃນເຄື່ອງມືສະບັບນີ້. ແຕ່ເຖິງແນວໃດກໍ່ຕາມ, ບົດຮຽນພາກດັ່ງກ່າວນີ້ບໍ່ໄດ້ຖືກອອກແບບເພື່ອໃຊ້ແທນ ນະໂຍບາຍການປົກປ້ອງເດັກ, ເຊິ່ງ ຜູ້ອໍານວຍຄວາມສະດວກ ຂອງ SNYC ທັງໝົດຕ້ອງໄດ້ເຊັນ ກ່ອນຈະເລີ່ມເປັນອາສາສະໝັກ ຢູ່ໃນ SNYC.

## ເວລາ

60 ນາທີ

## ອຸປະກອນ

- ເຄື່ອງມືສໍາລັບຜູ້ເຂົ້າຮ່ວມແຕ່ລະຄົນ

## ຜູ້ເຂົ້າຮ່ວມ

ຜູ້ໃຫຍ່ທີ່ເປັນຜູ້ອໍານວຍຄວາມສະດວກ 2–3 ຄົນ ຈາກແຕ່ລະ SNYC

## ຜູ້ອໍານວຍຄວາມສະດວກ

ພະນັກງານພາຍໃນປະເທດຂອງອົງການສຸພະນິມິດ ທີ່ໄດ້ເຂົ້າຮ່ວມການຝຶກອົບຮົມ ETIP SNYC

## ຄໍາແນະນໍາ

**ການຕອບໂຕ້ຕໍ່ ໄວໜຸ່ມ ທີ່ຢູ່ໃນພາວະທີ່ເຈັບປວດດ້ານຈິດໃຈ**

ອະທິບາຍວ່າ ບັນດາຫົວຂໍ້ທີ່ມີຄວາມລະອຽດອ່ອນ ທີ່ໄດ້ສົນທະນາຢູ່ໃນເຄື່ອງມື ສະບັບນີ້ ອາດຈະເຮັດໃຫ້ ບັນດາຜູ້ເຂົ້າຮ່ວມເຈັບປວດດ້ານຈິດໃຈ. ຖ້າຫາກໄວໜຸ່ມຜູ້ໃດຜູ້ໜຶ່ງເລີ່ມໄຫ້ ໃນລະຫວ່າງບົດຮຽນດັ່ງກ່າວນີ້, ຜູ້ອໍານວຍຄວາມສະດວກຂອງ SNYC ບໍ່ຄວນເຍາະເຍີ້ຍ ຫຼື ບອກໃຫ້ລາວເຊົາໄຫ້. ຜູ້ອໍານວຍຄວາມສະດວກຂອງ SNYC ບໍ່ຄວນຖາມຜູ້ເຂົ້າຮ່ວມວ່າ ຍ້ອນຫຍັງລາວຈຶ່ງໄຫ້, ແຕ່ວ່າ

ຄວນປ່ອຍໃຫ້ລາວໄຫ້. ຖ້າຮູ້ສຶກວ່າມັນເໝາະສົມ, ຜູ້ອຳນວຍຄວາມສະດວກ ຄວນປອບໃຈເຮັດໃຫ້ໄວໜຸ່ມຮູ້ສຶກສະບາຍຂຶ້ນ ດ້ວຍການເອົາມືຈັບບ່າ ຫຼື ອະນຸຍາດໃຫ້ຜູ້ອື່ນເຮັດໃນສິ່ງດັ່ງກ່າວ. ຜູ້ອຳນວຍຄວາມສະດວກຂອງ SNYC ຄວນຕິດຕາມໄວໜຸ່ມຜູ້ດັ່ງກ່າວ ພາຍຫຼັງຈົບບົດຮຽນ.

ຖ້າຫາກໄວໜຸ່ມທີ່ເປັນຜູ້ເຂົ້າຮ່ວມຕ້ອງການອອກໄປ ໃນກາງບົດຮຽນ ຍ້ອນວ່າລາວຮູ້ສຶກໂສກເສົ້າ, ກໍ່ອະນຸຍາດໃຫ້ຜູ້ເຂົ້າຮ່ວມດັ່ງກ່າວອອກໄປ ແລະ ຕິດຕາມເບິ່ງລາວພາຍຫຼັງ.

ອະທິບາຍວ່າ ໃນລະຫວ່າງການເຮັດວຽກຂອງເຈົ້າ ໃນຖານະທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ໄວໜຸ່ມທີ່ເປັນຜູ້ເຂົ້າຮ່ວມອາດຈະເປີດເຜີຍວ່າ ພວກເຂົາເຄີຍເປັນຜູ້ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງຕໍ່ເດັກນ້ອຍ. ຖ້າສິ່ງດັ່ງກ່າວນີ້ເກີດຂຶ້ນ, ຜູ້ອຳນວຍຄວາມສະດວກຂອງ SNYC ຕ້ອງໄດ້ດຳເນີນການ.

ການໃຊ້ຄວາມຮຸນແຮງກັບເດັກ ໄດ້ຖືກອະທິບາຍໄວ້ວ່າ ແມ່ນທຸກຄັ້ງທີ່ເດັກນ້ອຍ ຖືກທາລຸນທາງດ້ານຮ່າງກາຍ ຫຼື ທາງເພດ ຈາກຜູ້ໃຫຍ່.

ຜູ້ອຳນວຍຄວາມສະດວກຂອງ SNYC ອາດຈະພົບວ່າ:

- ໄວໜຸ່ມຜູ້ໜຶ່ງເກີດຄວາມໂສກເສົ້າ ດ້ວຍຫົວຂໍ້ໃດໜຶ່ງ ຢູ່ໃນບົດຮຽນ ແລະ ຫຼັງຈາກນັ້ນກໍ່ບອກຄວາມລັບວ່າ ຜູ້ໃຫຍ່ທາລຸນລາວ.
- ໄວໜຸ່ມຜູ້ໜຶ່ງຍອມຮັບວ່າ ຜູ້ໃຫຍ່ໄດ້ທາລຸນລາວ (ສິ່ງດັ່ງກ່າວນີ້ ສາມາດເກີດຂຶ້ນໃນເວລາທີ່ໄວໜຸ່ມເລີ່ມໄວ້ໃຈຜູ້ອຳນວຍຄວາມສະດວກ)
- ຜູ້ອຳນວຍຄວາມສະດວກ SNYC ອາດຈະເຫັນໄວໜຸ່ມກຳລັງຖືກທາລຸນ ໂດຍຜູ້ໃຫຍ່ຜູ້ໜຶ່ງ.

ອະທິບາຍວ່າ ເມື່ອໃດກໍ່ຕາມ ທີ່ໄວໜຸ່ມບອກວ່າ ລາວກຳລັງຖືກທາລຸນ, ຜູ້ອຳນວຍຄວາມສະດວກຂອງ SNYC ຄວນຈິງຈັງກັບມັນ. ຫ້າມເມີນເສີຍເລື່ອງຂອງໄວໜຸ່ມດັ່ງກ່າວ ຫຼື ປະຕິບັດຄ້າຍກັບວ່າ ເຈົ້າຄິດວ່າໄວໜຸ່ມກຳລັງຕົວະເຈົ້າ. ມີໜ້ອຍທີ່ສຸດທີ່ໄວໜຸ່ມຈະຕົວະກ່ຽວກັບການຖືກທາລຸນ. ເຖິງແນວໃດກໍ່ຕາມ, ຜູ້ອຳນວຍຄວາມສະດວກຂອງ SNYC ກໍ່ບໍ່ຄວນດຳເນີນການຕາມລຳພັງ ຫຼື ດຳເນີນການດ້ວຍຄວາມໃຈຮ້ອນ. ເມື່ອໃດກໍ່ຕາມທີ່ໄວໜຸ່ມລາຍງານກ່ຽວກັບການຖືກທາລຸນ, ບັນດາຜູ້ອຳນວຍຄວາມສະດວກຂອງ SNYC ຄວນປະຕິບັດຕາມແຜນຕອບໂຕ້ຂອງອົງການສຸພະນິມິດປະຈຳປະເທດ, ເຊິ່ງມີຢູ່ໃນເຄື່ອງມື ຢູ່ໃນເອກະສານຊ້ອນທ້າຍ B.

## ຄຳຊີ້ນຳກ່ຽວກັບການປົກປ້ອງເດັກ

ພາກດັ່ງກ່າວນີ້ ແມ່ນອີງໃສ່ພື້ນຖານ ຄຳຊີ້ນຳຂອງອົງການສຸພະນິມິດ ສຳລັບການຈັດຕັ້ງປະຕິບັດມາດຕະຖານການປົກປ້ອງເດັກ, ເດືອນພະຈິກ 2012.

ອະທິບາຍວ່າ ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ຕ້ອງໄດ້ເຊັນ ນະໂຍບາຍການປົກປ້ອງເດັກຂອງອົງການສຸພະນິມິດຢູ່ໃນປະເທດຂອງພວກເຂົາ.ຜູ້ອຳນວຍຄວາມສະດວກຂອງSNYCຕ້ອງໄດ້ອ່ານນະໂຍບາຍການປົກປ້ອງເດັກ, ຢູ່ໃນເອກະສານຊ້ອນທ້າຍ A ຂອງເຄື່ອງມືສະບັບນີ້, ຢ່າງລະມັດລະວັງ ແລະຕ້ອງຮັບປະກັນວ່າພວກເຂົາເຂົ້າໃຈຄວາມຄາດຫວັງທີ່ມີຕໍ່ຜູ້ອຳນວຍຄວາມສະດວກຂອງSNYCແມ່ນຫຍັງ?

ບົດຮຽນດັ່ງກ່າວນີ້ ອະທິບາຍກ່ຽວກັບບາງບັນຫາທີ່ສຳຄັນ ຢູ່ໃນນະໂຍບາຍການປົກປ້ອງເດັກ ແລະ ມັນມີຄວາມສຳຄັນແນວໃດ ສຳລັບ SNYC.

ອະທິບາຍວ່າ ອົງການສຸພະນິມິດ ໄດ້ກຳນົດວ່າ ເດັກນ້ອຍ ແມ່ນທຸກຄົນທີ່ອາຍຸຕ່ຳກວ່າ 18 ປີ ແລະ ສະນັ້ນ, ທຸກຄົນທີ່ເປັນຜູ້ເຂົ້າຮ່ວມຂອງ SNYC ແມ່ນ 'ເດັກນ້ອຍ'.

### *ໃຫ້ມີການສຳພັດທາງຮ່າງກາຍກັບໄວໜຸ່ມໃຫ້ໜ້ອຍທີ່ສຸດ*

ອະທິບາຍວ່າ ການສຳພັດທາງຮ່າງກາຍ ໝາຍເຖິງທຸກຄັ້ງທີ່ ຜູ້ອຳນວຍຄວາມສະດວກຂອງ SNYC ແຕະຕ້ອງໄວໜຸ່ມ. ອົງການສຸພະນິມິດ ເວົ້າວ່າ ຜູ້ອຳນວຍຄວາມສະດວກຂອງ SNYC ຄວນ 'ຮັບປະກັນວ່າ ທຸກໆການສຳພັດທາງຮ່າງກາຍກັບໄວໜຸ່ມແມ່ນຢູ່ໃນສະຖານທີ່ ທີ່ເໝາະສົມ.' ບໍ່ແມ່ນວ່າ ທຸກໆການສຳພັດທາງຮ່າງກາຍເປັນສິ່ງບໍ່ດີ. ຍົກຕົວຢ່າງເຊັ່ນ: ຜູ້ອຳນວຍຄວາມສະດວກຜູ້ໜຶ່ງຂອງ SNYC ເອົາມືຂອງລາວຈັບບ່າໄວໜຸ່ມຜູ້ໜຶ່ງເພື່ອປອບໃຈໄວໜຸ່ມໃຫ້ຮູ້ສຶກສະບາຍໃຈຂຶ້ນ ແມ່ນຮູບແບບທີ່ຍອມຮັບໄດ້ ຂອງການສຳພັດທາງຮ່າງກາຍ. ແຕ່ວ່າ ຍ້ອນວ່າ ທັງການທາລຸນທາງເພດ ແລະ ທາງຮ່າງກາຍ ກ່ຽວຂ້ອງກັບການສຳພັດ ທາງຮ່າງກາຍ, ຜູ້ອຳນວຍຄວາມສະດວກ ຂອງ SNYC ຕ້ອງໄດ້ລະວັງ ທຸກຄັ້ງທີ່ສຳພັດໄວໜຸ່ມ. ໄວໜຸ່ມທີ່ເປັນຜູ້ເຂົ້າຮ່ວມ SNYC ມີ ອາຍຸລະຫວ່າງ 12–17 ປີ. ພວກເຂົາໃຫຍ່ພຽງພໍ ທີ່ບໍ່ເໝາະສົມ ສຳລັບຜູ້ອຳນວຍຄວາມສະດວກຂອງ SNYC ຈະກອດ ຫຼື ຈູບພວກເຂົາ. ອະທິບາຍວ່າ ເພື່ອປ້ອງກັນ ການເຂົ້າໃຈຜິດ ຫຼື ການກ່າວຫາກ່ຽວກັບ ການທາລຸນ, ອົງການສຸພະນິມິດ ແນະນຳ ຜູ້ອຳນວຍຄວາມສະດວກ ໃຫ້ມີການສຳພັດທາງຮ່າງກາຍກັບໄວໜຸ່ມທີ່ເປັນຜູ້ເຂົ້າຮ່ວມ ໃຫ້ໜ້ອຍທີ່ສຸດ.

ຜູ້ອຳນວຍຄວາມສະດວກ ຂອງ SNYC ຄວນ 'ໃຊ້ ວິທີ ທາງບວກ, ບໍ່ມີຄວາມຮຸນແຮງ ເພື່ອຈັດການກັບ ພຶດຕິກຳຂອງໄວໜຸ່ມ'. ມັນບໍ່ດີເລີຍ ທີ່ ຕີ ຫຼື ຍູ້ ໄວໜຸ່ມ ຢູ່ໃນ SNYC.

ຜູ້ອຳນວຍຄວາມສະດວກ ຂອງ SNYC ບໍ່ຄວນໃຊ້ 'ພາສາທີ່ເປັນເຫດໃຫ້ເກີດຄວາມລະອາຍເຊື່ອມເສຍ ຫຼື ເສຍກຽດ ຫຼື ເປັນການດູຖູກ ຫຼື ເຮັດໃຫ້ອັບອາຍ'.

ຖ້າຫາກໄວໜຸ່ມ ມີທ່າທີ ການວາງຕົວ ທາງເພດ ທີ່ບໍ່ເໝາະສົມ ຕໍ່ກັບ ຜູ້ອຳນວຍຄວາມສະດວກ ຂອງ SNYC, ຜູ້ອຳນວຍຄວາມສະດວກ ບໍ່ຄວນຕອບກັບດ້ວຍທ່າທີທາງເພດ. ຜູ້ອຳນວຍຄວາມສະດວກ ຂອງ SNYC ຄວນຫຼີກລ່ຽງ 'ການຕົກຢູ່ໃນ ສະຖານະ ທີ່ເສຍຊື່ສຽງ ຫຼື ມີພາວະສ່ຽງ ກັບໄວໜຸ່ມ'. ຜູ້ອຳນວຍຄວາມສະດວກຄວນໂທຫາ ຫົວໜ້າ ຂອງຕົນ ພາຍໃນມື້ດຽວກັນນັ້ນ ເພື່ອອະທິບາຍ ເຫດການ ແລະ ສົນທະນາ ກ່ຽວກັບວິທີຕອບໂຕ້.

ຜູ້ອຳນວຍຄວາມສະດວກ ຂອງ SNYC ບໍ່ສາມາດມີ ສາຍພົວພັນແບບບ່າວສາວ ຫຼື ທາງເພດສຳພັນ ກັບໄວໜຸ່ມ. ເພື່ອປ້ອງກັນທ່າທາງສະແດງອອກທີ່ບໍ່ເໝາະສົມ, ພວກເຂົາບໍ່ຄວນອອກໄປກິນອາຫານ ຫຼື ງານສັງສັນສັງຄົມອື່ນໆ ກັບໄວໜຸ່ມ. ກິດຈະກຳ ທາງການທີ່ສະໜັບສະໜູນໂດຍ SNYC ເຊິ່ງກ່ຽວຂ້ອງກັບ ໄວໜຸ່ມທັງໝົດທີ່ເປັນຜູ້ເຂົ້າຮ່ວມ ແລະ ຜູ້ໃຫຍ່ຜູ້ອື່ນໆ ແມ່ນກໍລະນີຍົກເວັ້ນສຳລັບລະບຽບດັ່ງກ່າວນີ້.

### *ບໍ່ຢູ່ຕາມລຳພັງຄົນດຽວ ກັບໄວໜຸ່ມ*

ຜູ້ອຳນວຍຄວາມສະດວກ ຂອງ SNYC, 'ຖ້າເປັນໄປໄດ້ ແລະ ເໝາະສົມຕາມຄວາມເປັນຈິງ', ໃນເວລາເຮັດວຽກ ຄວນປະຕິບັດຕາມ ຫຼັກການ "ຜູ້ໃຫຍ່ສອງຄົນ", ເຊິ່ງ ຜູ້ໃຫຍ່ສອງຄົນ ຫຼື ຫຼາຍກວ່ານັ້ນ ນຳພາບັນດາກິດຈະກຳ ທີ່ກ່ຽວຂ້ອງກັບໄວໜຸ່ມ ແລະ ສາມາດສັງເກດເຫັນໄດ້ ແລະ ປະກົດຕົວຢູ່ຕະຫຼອດເວລາ'. ຢູ່ໃນເຄື່ອງມື, ອົງການສຸພະນິມິດ ຊຸກຍູ້ໃຫ້ບັນດາຜູ້ອຳນວຍຄວາມສະດວກ ໃຫ້ຢູ່ລໍຖ້າສາກ່ອນ ຫຼັງຈາກສິ້ນສຸດກິດຈະກຳຂອງ SNYC ເພື່ອມີເວລາໃຫ້ ໃນກໍລະນີທີ່ຜູ້ເຂົ້າຮ່ວມຕ້ອງການລົມນຳ. ແຕ່ເຖິງແນວໃດກໍ່ຕາມ, ມັນກໍ່ຈຳເປັນທີ່ສຸດ ທີ່ຕ້ອງມີຜູ້ໃຫຍ່ຜູ້ອື່ນຢູ່ໃນຫ້ອງນຳ, ຫຼື ບໍ່ດັ່ງນັ້ນ ພວກເຂົາກໍ່ຕ້ອງນັ່ງຢູ່ນອກຫ້ອງ ບ່ອນທີ່ຄົນກາຍໄປມາ ສາມາດເຫັນໄດ້ງ່າຍ. ສິ່ງດັ່ງກ່າວນີ້ ຈະປົກປ້ອງໄວໜຸ່ມ ແລະ ປົກປ້ອງ ຜູ້ອຳນວຍຄວາມສະດວກ ຂອງ SNYC ຈາກການກ່າວຫາແບບຜິດໆ ກ່ຽວກັບພຶດຕິກຳທີ່ບໍ່ເໝາະສົມ.

ຜູ້ອຳນວຍຄວາມສະດວກຂອງSNYCບໍ່ຄວນ 'ໃຊ້ເວລາຫຼາຍເກີນໄປຫຼືແບບບໍ່ຈຳເປັນ ເພື່ອຢູ່ຕາມລຳພັງຄົນດຽວ ກັບໄວໜຸ່ມ, ໂດຍຢູ່ຫ່າງໄກຈາກຄົນອື່ນ ຫຼື ຢູ່ໃນຫ້ອງປິດປະຕູ ຫຼື ຢູ່ບ່ອນທີ່ລັບສາຍຕາ'. ຜູ້ອຳນວຍຄວາມສະດວກ ຂອງ SNYC ບໍ່ຄວນ ຢູ່ຕາມລຳພັງຄົນດຽວກັບໄວໜຸ່ມ ຢູ່ໃນລົດໃຫຍ່, ແມ່ນກະທັ້ງເພື່ອເຮັດວຽກຂອງອົງການສຸພະນິມິດ, ເວັ້ນເສຍແຕ່ວ່າ ມັນຈຳເປັນແທ້ໆ ແຕ່ຕ້ອງມີການຍິນຍອມຈາກ ພໍ່ແມ່/ຜູ້ປົກຄອງ ແລະ ມີການຍິນຍອມຈາກ ຫົວໜ້າຊີ້ນຳຂອງ SNYC.

### *ບໍ່ຍົກໂທດ ໃຫ້ ພຶດຕິກຳທີ່ຜິດກົດໝາຍ*

ຜູ້ອຳນວຍຄວາມສະດວກ ຂອງ SNYC ບໍ່ຄວນ 'ຍົກໂທດ ຫຼື ເຂົ້າຮ່ວມ ພຶດຕິກຳທີ່ຜິດກົດໝາຍ, ບໍ່ປອດໄພ ຫຼື ທຍາບຄາຍ ກັບໄວໜຸ່ມ, ເຊິ່ງປະກອບດ້ວຍ ການປະຕິບັດດ້ານຮີດຄອງປະເພນີ ທີ່ເປັນໄພອັນຕະລາຍ, ການລ່ວງລະເມີດຄວາມເຊື່ອທາງສາດສະໜາ ຫຼື ພິທີກຳຕ່າງໆ.' ຜູ້ອຳນວຍຄວາມສະດວກ ຂອງ SNYC ບໍ່ຄວນ ຍົກໂທດໃຫ້ ທຸກຮູບແບບຂອງການໃຊ້ຢາເສບຕິດ ຂອງໄວໜຸ່ມ. ຜູ້ອຳນວຍຄວາມສະດວກ ຂອງ SNYC ບໍ່ຄວນ ດື່ມເຫຼົ້າກັບໄວໜຸ່ມ.

ຜູ້ອຳນວຍຄວາມສະດວກ ຂອງ SNYC ບໍ່ຄວນ ວ່າຈ້າງໄວໜຸ່ມ ໃນທຸກຮູບແບບຂອງແຮງງານເດັກ; ໂດຍສະເພາະແມ່ນ ພວກເຂົາບໍ່ຄວນວ່າຈ້າງໄວໜຸ່ມ ໃຫ້ເປັນ 'ຜູ້ຊ່ວຍວຽກເຮືອນ'.

### *ການສົນທະນາ*

- ຖາມບັນດາຜູ້ເຂົ້າຮ່ວມວ່າ ພວກເຂົາມີຄຳຖາມກ່ຽວກັບວິທີການຮັບມືກັບ ໄວໜຸ່ມທີ່ເຈັບປວດດ້ານຈິດໃຈບໍ່.
- ຖາມບັນດາຜູ້ເຂົ້າຮ່ວມວ່າ ພວກເຂົາມີຄຳຖາມກ່ຽວກັບການປົກປ້ອງເດັກ ພາຍໃນອົງການສຸພະນິມິດບໍ່.

## ສະຫຼຸບສັງລວມບົດຮຽນ

- ຖ້າຫາກໄວໜຸ່ມຜູ້ໃດຜູ້ໜຶ່ງທີ່ເປັນຜູ້ເຂົ້າຮ່ວມ ໂສກເສົ້າເສຍໃຈ ໃນລະຫວ່າງບົດຮຽນ,ຜູ້ອຳນວຍຄວາມສະດວກຂອງ SNYC ຄວນປ່ອຍໃຫ້ລາວໂສກເສົ້າເສຍໃຈ ໂດຍບໍ່ເອົາໃຈໃສ່ລາວຫຼາຍເກີນຄວນ ແລະ ຫຼັງຈາກນັ້ນ ໃຫ້ ຕິດຕາມ ພາຍຫຼັງຈົບບົດຮຽນ.
- ຖ້າຫາກໄວໜຸ່ມທີ່ເປັນຜູ້ເຂົ້າຮ່ວມ ໂສກເສົ້າເສຍໃຈ ແລະ ຕ້ອງການອອກໄປໃນກາງບົດຮຽນ, ກໍ່ອະນຸຍາດໃຫ້ລາວອອກໄປໄດ້.
- ຖ້າຫາກໄວໜຸ່ມລາຍງານວ່າ ລາວ ກຳລັງຖືກລ່ວງລະເມີດດ້ານຮ່າງກາຍ ຫຼື ທາງເພດ, ຜູ້ອຳນວຍຄວາມສະດວກຂອງ SNYC ຄວນໂທຫາຜູ້ຊີ້ນຳ SNYC ພາຍໃນມື້ດຽວກັນນັ້ນ ແລະ ຄວນປະຕິບັດຕາມ ແຜນຕອບໂຕ້ ທີ່ຢູ່ໃນ ເຄື່ອງມື, ເອກະສານຊ້ອນທ້າຍ B.
- ຜູ້ອຳນວຍຄວາມສະດວກຂອງ SNYC ຄວນເຊັນ ແລະ ປະຕິບັດຕາມ ນະໂຍບາຍການປົກປ້ອງເດັກຂອງອົງການສຸພະນິມິດ ແລະ ຄວນ:
  - » ໃຫ້ມີການສຳພັດທາງຮ່າງກາຍກັບໄວໜຸ່ມໃຫ້ໜ້ອຍທີ່ສຸດ
  - » ບໍ່ຢູ່ຕາມລຳພັງຄົນດຽວກັບໄວໜຸ່ມ
  - » ບໍ່ຍົກໂທດ ໃຫ້ ພຶດຕິກຳທີ່ຜິດກົດໝາຍ
  - » ບໍ່ວ່າຈ້າງໄວໜຸ່ມ

# ພາກ D

# ການຝຶກອົບຮົມໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ

ພະນັກງານອົງການສຸພະນິມິດ ແລະ ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກ ຂອງ SNYC ຝຶກອົບຮົມໃຫ້ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ເພື່ອໃຫ້ຊ່ວຍເຫຼືອການອຳນວຍຄວາມສະດວກ SNYC. ຖ້າເປັນໄປໄດ້, ພະນັກງານອົງການສຸພະນິມິດ ຄວນຝຶກອົບຮົມໃຫ້ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ ໃນການນຳໃຊ້ ຄູ່ມື ພາຍໃນການຝຶກອົບຮົມນີ້ດຽວ ພາຍຫຼັງທີ່ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ ໄດ້ຖືກຮັບເຂົ້າເຮັດວຽກ ແລະ ກ່ອນທີ່ສະໂມສອນຈະເລີ່ມຕົ້ນ.



# ບົດຮຽນທີ 10: ການແນະນຳ SNYC ຕໍ່ກັບ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ

## ຈຸດປະສົງ

ເພື່ອຊ່ວຍເຫຼືອບັນດາຜູ້ເຂົ້າຮ່ວມ ໃຫ້ຜູ້ຈັກກັນແລະກັນ; ເພື່ອຮຽນຮູ້ກ່ຽວກັບ SNYC ໃຫ້ຫຼາຍຂຶ້ນ

## ເວລາ

60 ນາທີ

## ອຸປະກອນ

- ສຳເນົາເຄື່ອງມືໜຶ່ງສະບັບສຳລັບຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກ ຂອງ SNYC ແຕ່ລະຄົນ-ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ຈະບໍ່ໄດ້ຮັບເຄື່ອງມື
- ສຳເນົາເອກະສານ 'IS 10a:ເກມອຸ່ນເຄື່ອງ' ສຳລັບຜູ້ເຂົ້າຮ່ວມແຕ່ລະຄົນ
- ເອກະສານອ້າງອີງ 'IS 10b: ຄຳຖາມ ເກມໝາກບານທວນຄວາມຈຳ ຊຸດທີ 1', ໝາກບານ ໜຶ່ງໜ່ວຍ

## ຜູ້ເຂົ້າຮ່ວມ

ໄວໜຸ່ມທີ່ເປັນຜູ້ເຂົ້າຮ່ວມ

## ຜູ້ອຳນວຍຄວາມສະດວກ

ອາດຈະແມ່ນ ພະນັກງານອົງການສຸພະນິມິດ ຫຼື ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກ ທີ່ໄດ້ສຳເລັດການຝຶກອົບຮົມ ເຄື່ອງມືການນຳທາງແບບສະຫຼາດ ແລະ ການຝຶກອົບຮົມຜູ້ອຳນວຍຄວາມສະດວກ

## ຄຳແນະນຳ

ກ່າວຍິນດີຕ້ອນຮັບກຸ່ມ ແລະ ແນະນຳຕົນເອງ. ອະທິບາຍວ່າ ບົດຮຽນນີ້ ຈະຊ່ວຍໃຫ້ທຸກຄົນຮູ້ຈັກກັນ, ຮຽນຮູ້ກ່ຽວກັບສະໂມສອນໄວໜຸ່ມການນຳທາງແບບສະຫຼາດ (ຫຼື ເອີ້ນວ່າ SNYC) ແລະ ຮຽນຮູ້ວິທີ ເປັນໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC.

## ກິດຈະກຳອຸ່ນເຄື່ອງ

ກິດຈະກຳດັ່ງກ່າວນີ້ ຈະຊ່ວຍໃຫ້ບັນດາຜູ້ເຂົ້າຮ່ວມ ໄດ້ຜ່ອນຄາຍ ແລະ ຮຽນຮູ້ ຊື່ ຂອງກັນ ແລະ ກັນ.

ຢາຍເອກະສານ 'IS 10: ເກມອຸ່ນເຄື່ອງ' ໃຫ້ຜູ້ເຂົ້າຮ່ວມແຕ່ລະຄົນ ແລະ ບອກໃຫ້ພວກເຂົາ ເປີດໄປຫາໜ້າ 'ເກມໝາກບານ.' ປະຕິບັດຕາມຄຳແນະນຳ ເພື່ອຫຼິ້ນເກມຮ່ວມກັບບັນດາຜູ້ເຂົ້າຮ່ວມ.

ເມື່ອສິ້ນສຸດເກມດັ່ງກ່າວນີ້, ບອກໃຫ້ບັນດາຜູ້ເຂົ້າຮ່ວມນັ່ງເປັນວົງມົນ.

## ຄຳແນະນຳ: ສະໂມສອນໄວໜຸ່ມການນຳທາງແບບສະຫຼາດແມ່ນຫຍັງ?

ອະທິບາຍວ່າ ໃນປີຕໍ່ໜ້ານີ້, ພວກເຂົາຈະໄດ້ຊ່ວຍອຳນວຍຄວາມສະດວກ ສະໂມສອນໄວໜຸ່ມການນຳທາງແບບສະຫຼາດ. ກ່ອນທີ່ຈະອະທິບາຍວ່າສິ່ງດັ່ງກ່າວນີ້ແມ່ນຫຍັງ, ໃຫ້ອະທິບາຍວ່າ ມີບາງຄຳສັບໃໝ່ທີ່ຕ້ອງໄດ້ຮຽນຮູ້.

### SNYC

ຄຳສັບດັ່ງກ່າວນີ້ ແມ່ນຄຳຫຍໍ້ ສຳລັບ ສະໂມສອນໄວໜຸ່ມການນຳທາງແບບສະຫຼາດ.

### ຜູ້ອຳນວຍຄວາມສະດວກ

ຄຳສັບດັ່ງກ່າວນີ້ແມ່ນ ຜູ້ທີ່ຊ່ວຍນຳພາກິດຈະກຳ, ເຊິ່ງໃນກໍລະນີດັ່ງກ່າວນີ້ ແມ່ນບັນດາກິດຈະກຳ ຂອງ SNYC.

### ບົດຮຽນ

ແມ່ນບົດຮຽນຢູ່ໃນເຄື່ອງມື. ທັງໝົດ ມີ 31 ບົດຮຽນ. ສະໂມສອນສ່ວນຫຼາຍ ຈະມີການປະຊຸມພົບປະກັນທຸກໆສອງອາທິດ ແລະ ສຳເລັດ ບົດຮຽນໜຶ່ງ ໃນການປະຊຸມຄັ້ງໜຶ່ງ. ບັນດາບົດຮຽນຕ່າງໆ ຈະໃຊ້ເວລາ ປະມານ 75 ນາທີ.

### IS

IS ແມ່ນຄຳຫຍໍ້ ສຳລັບ ແຜ່ນເຈັ້ຍຂໍ້ມູນ. ແຜ່ນເຈັ້ຍຂໍ້ມູນດັ່ງກ່າວນີ້ ແມ່ນພາກສ່ວນໜຶ່ງຂອງເຄື່ອງມື. ປົກກະຕິແລ້ວ ແມ່ນໃບເຈັ້ຍ ຂໍ້ມູນກ່ຽວກັບບົດຮຽນ ຫຼື ກິດຈະກຳ ທີ່ບັນດາຜູ້ເຂົ້າຮ່ວມຕ້ອງເຮັດໃຫ້ສຳເລັດ, ເຊັ່ນ: ຄຳແນະນຳສຳລັບການສະແດງບົດບາດສົມມຸດ.

### ປຶ້ມນ້ອຍການນຳທາງແບບສະຫຼາດ

ບັນດາຜູ້ເຂົ້າຮ່ວມ ຢູ່ໃນ SNYC ແຕ່ລະຄົນຈະໄດ້ຮັບ ປຶ້ມນ້ອຍການນຳທາງແບບສະຫຼາດໜຶ່ງຫົວ ທີ່ສັງລວມກ່ຽວກັບຂໍ້ມູນທີ່ສຳຄັນເກືອບທັງໝົດທີ່ຢູ່ໃນເຄື່ອງມື.

ຫຼິ້ນເກມຄຳຖາມທົດສອບຄວາມຮູ້ ກັບບັນດາຜູ້ເຂົ້າຮ່ວມ ໂດຍຖາມວ່າ:

- SNYC ແມ່ນຫຍັງ?
- ຜູ້ອຳນວຍຄວາມສະດວກ ແມ່ນຫຍັງ?
- ເຄື່ອງມື ແມ່ນຫຍັງ?
- IS ແມ່ນຫຍັງ?
- ປຶ້ມນ້ອຍການນຳທາງແບບສະຫຼາດແມ່ນຫຍັງ?

- ບົດຮຽນ ແມ່ນຫຍັງ?
- ບົດຮຽນໜຶ່ງຍາວປານໃດ?

ອະທິບາຍວ່າ SNYC ແມ່ນສະໂມສອນໄວໜຸ່ມ ທີ່ຈະດຳເນີນຢູ່ໃນບ້ານຂອງບັນດາຜູ້ເຂົ້າຮ່ວມ ຈະມີການປະຊຸມພົບປະກັນ ທຸກໆສອງອາທິດ ສຳລັບ ປະມານ 75 ນາທີ (1 ຊົ່ວໂມງ ກັບ 15 ນາທີ) ຕໍ່ ໜຶ່ງບົດຮຽນ.

## ໄວໜຸ່ມຈະຮຽນຮູ້ຫຍັງ ຢູ່ໃນ SNYC?

ອະທິບາຍວ່າ ໃນລະຫວ່າງແຕ່ລະບົດຮຽນ ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກ ຂອງ SNYC ຈະປະຕິບັດຕາມຄຳແນະນຳ ຢູ່ໃນເຄື່ອງມື ເພື່ອສອນໄວໜຸ່ມກ່ຽວກັບ:

- ການຄ້າມະນຸດ
- ທັກສະຊີວິດ (ຍົກຕົວຢ່າງເຊັ່ນ: ວິທີການເວົ້າ ແລະ ຟັງທີ່ດີ) ທີ່ຈະຊ່ວຍໄວໜຸ່ມຕ້ານການຄ້າມະນຸດ
- ວິທີວາງແຜນ ສຳລັບການເຄື່ອນຍ້າຍແບບປອດໄພ
- ວິທີ ແບ່ງປັນແລກປ່ຽນຂໍ້ມູນ ກ່ຽວກັບ ຄວາມອັນຕະລາຍ ຂອງການຄ້າມະນຸດ ກັບຄົນອື່ນ.

ຜູ້ອຳນວຍຄວາມສະດວກ ຂອງ SNYC ຈະນຳໃຊ້ ຫຼາກຫຼາຍກິດຈະກຳ ເພື່ອ ສອນ, ເຊິ່ງລວມທັງການແຕ້ມ, ຮູບກາຕູນ, ເກມ ແລະ ການສະແດງບົດບາດສົມມຸດ. SNYC ຄວນຈະມີຄວາມມ່ວນຊື່ນ.

## ການເຄື່ອນຍ້າຍ ແມ່ນຫຍັງ?

ອະທິບາຍວ່າ ການເຄື່ອນຍ້າຍ ແມ່ນຄຳສັບ ທີ່ບັນຍາຍກ່ຽວກັບການຍົກຍ້າຍ ຈາກສະຖານທີ່ໜຶ່ງໄປຫາສະຖານທີ່ອື່ນ, ໂດຍປົກກະຕິແລ້ວແມ່ນເພື່ອຊອກວຽກເຮັດ.

## ການຄ້າມະນຸດແມ່ນຫຍັງ?

ອະທິບາຍວ່າ ເມື່ອໄວໜຸ່ມເຂົ້າຮ່ວມບັນດາບົດຮຽນ ຢູ່ໃນ SNYC, ພວກເຂົາຈະຮຽນຮູ້ກ່ຽວກັບການຄ້າມະນຸດຢ່າງເລິກເຊິ່ງ. ແຕ່ເຖິງແນວໃດກໍ່ຕາມ, ຄຳອະທິບາຍແບບງ່າຍໆ ກ່ຽວກັບການຄ້າມະນຸດ ແມ່ນດັ່ງນີ້: ***ການຄ້າມະນຸດ*** ແມ່ນການຫຼອກລວງ ຫຼື ບັງຄັບບຸກຄົນ ໄປສູ່ຮູບແບບຕ່າງໆຂອງການເຮັດວຽກແບບຖືກຂູດຮີດ ເຊິ່ງຜູ້ທີ່ຖືກເຄາະຮ້າຍມີຊີວິດການເປັນຢູ່ທີ່ຫຍຸ້ງຍາກ. ການຄ້າມະນຸດ ແມ່ນກ່ຽວຂ້ອງເລື້ອຍໆ ກັບການພາຜູ້ຖືກເຄາະຮ້າຍອອກຈາກສະຖານທີ່ຢູ່ອາໄສຂອງພວກເຂົາ ໄປສູ່ສະຖານທີ່ອື່ນ **ດ້ວຍການບັງຄັບ** ຫຼື **ກົນອຸບາຍ**, ເພື່ອ**ຂູດຮີດ**ພວກເຂົາ. ເຖິງແນວໃດກໍ່ຕາມ, ມັນກໍ່ເປັນໄປໄດ້ ທີ່ຈະຖືກຄ້າມະນຸດ ໂດຍປາດສະຈາກການຖືກຍົກຍ້າຍ.

***ການບັງຄັບ:*** ອະທິບາຍວ່າ ເມື່ອບຸກຄົນໃດໜຶ່ງ ຖືກຄ້າມະນຸດ ພວກເຂົາສາມາດຖືກບັງຄັບດ້ວຍວິທີຕ່າງໆ. ບາງຄົນ ແມ່ນຖືກຫຼອງລວງ ໂດຍບອກວ່າ ພວກເຂົາຈະມີວຽກທີ່ດີ ເມື່ອໄປຮອດສະຖານທີ່ນັ້ນ ແລະ ຫຼັງຈາກນັ້ນພວກເຂົາຈະຖືກບັງຄັບ ໃຫ້ເຮັດວຽກອື່ນທີ່ແຕກຕ່າງ. ບາງຄົນແມ່ນຖືກຂັງໄວ້ ຢູ່ໃນໂຮງງານ ຫຼື ຢູ່ເທິງເຮືອ ແລະ ບໍ່ສາມາດໜີໄດ້. ບາງຄົນ ກໍ່ຖືກບອກວ່າ ຜູ້ຄ້າມະນຸດ ຈະເຮັດບາງສິ່ງບາງຢ່າງ ທີ່ບໍ່ດີກັບພວກເຂົາ ຫຼື ຄອບຄົວຂອງພວກເຂົາ ຖ້າຫາກພວກເຂົາໜີ. ສິ່ງດັ່ງກ່າວນີ້ ແມ່ນຕົວຢ່າງຕ່າງໆ ຂອງການບັງຄັບ.

***ກົນອຸບາຍ:*** ອະທິບາຍວ່າ ກົນອຸບາຍ ບັນຍາຍກ່ຽວກັບ ການກະທຳການປົກປິດ ຫຼື ການນຳສະເໜີບິດເບືອນຄວາມຈິງ ຫຼື ບໍ່ຊື່ສັດ.

***ການຂູດຮີດ:*** ເມື່ອບຸກຄົນໃດໜຶ່ງ ໃຊ້ຄົນອື່ນ, ໂດຍປົກກະຕິແລ້ວ ແມ່ນສຳລັບຜົນກຳໄລ, ແມ່ນພວກເຂົາກຳລັງຂູດຮີດ ຄົນອື່ນ. ເມື່ອບຸກຄົນໃດໜຶ່ງ ຖືກຄ້າມະນຸດ, ພວກເຂົາອາດຈະຖືກຂູດຮີດດ້ວຍການບັງຄັບໃຫ້ເຮັດ ວຽກທີ່ພວກເຂົາບໍ່ຢາກເຮັດ, ບັງຄັບໃຫ້ເຮັດວຽກ ສຳລັບລາຍຮັບໜ້ອຍ ຫຼື ບໍ່ມີລາຍຮັບ, ບັງຄັບໃຫ້ເຮັດວຽກທີ່ກ່ຽວຂ້ອງກັບເພດສຳພັນ, ຫຼື ພວກເຂົາອາດຈະຖືກຕັດອາໄວຍະວະ ເພື່ອຂາຍ.

### ທັກສະຊີວິດແມ່ນຫຍັງ?

ອະທິບາຍວ່າ ທັກສະຊີວິດ ແມ່ນ ທັກສະສ່ວນຕົວ ທີ່ຊ່ວຍພວກເຮົາໃນການດຳລົງຊີວິດ. ຢູ່ໃນເຄື່ອງມື, ໄດ້ມີການສອນ ທັກສະການສື່ສານ; ຍົກຕົວຢ່າງເຊັ່ນ: ວິທີການຈັດການກັບຄວາມຮູ້ສຶກດ້ານຈິດໃຈ ແລະ ວິທີການຕັດສິນໃຈ ແບບມີຄວາມຮູ້. ອະທິບາຍວ່າ ບັນດາທັກສະດັ່ງກ່າວນີ້ ແມ່ນຖືກນຳໃຊ້ ເພື່ອຊ່ວຍປົກປ້ອງຜູ້ຄົນຈາກການຄ້າມະນຸດ.

### ໃຜຈະມາ SNYC?

ອະທິບາຍວ່າ SNYC ແມ່ນສຳລັບໄວໜຸ່ມ ອາຍຸ 12–17 ປີ ຢູ່ໃນຊຸມຊົນ. ມັນແມ່ນສຳລັບໄວໜຸ່ມຜູ້ທີ່ອາດຈະກຳລັງຄິດກ່ຽວກັບການເຄື່ອນຍ້າຍ ເພື່ອໄປເຮັດວຽກ. ໄວໜຸ່ມບາງຄົນ ຢູ່ໃນ SNYC ອາດຈະບໍ່ຮູ້ອ່ານໜັງສື. SNYC ຍິນດີຕ້ອນຮັບ ໄວໜຸ່ມຈາກທຸກໆ ພື້ນຖານຄວາມເຊື່ອຖື ແລະ ພ້ອມທັງໄວໜຸ່ມທີ່ບໍ່ນັບຖືສາດສະໜາ.

### ຄວາມໝາຍໝັ້ນຕໍ່ກັບ SNYC

ເຖິງແມ່ນວ່າ ບາງໂອກາດ ບັນດາຜູ້ເຂົ້າຮ່ວມ ຈະມີເຫດຜົນແທ້ຈິງ ສຳລັບທີ່ຈະບໍ່ມາເຂົ້າຮ່ວມ, ແຕ່ວ່າ ກໍ່ຄາດຫວັງ ແລະ ຊຸກຍູ້ໃຫ້ພວກເຂົາ ເຂົ້າຮ່ວມບົດຮຽນທັງໝົດ.

### ລະບົບ ໃຫ້ດາວ

ອະທິບາຍວ່າ ເພື່ອສ້າງຄວາມໝາຍໝັ້ນ ແລະ ສົ່ງເສີມການເຂົ້າຮ່ວມ, SNYC ໄດ້ມີລະບົບໃຫ້ດາວ. ຢູ່ໃນເອກະສານເຄື່ອງມື ມີທັງໝົດ 32 ບົດຮຽນ, ເຊິ່ງລວມທັງການສົ່ງເສີມ ກິດຈະກຳຂອງຊຸມຊົນ. ບັນດາຜູ້ເຂົ້າຮ່ວມຈະໄດ້ຮັບດາວ ສຳລັບແຕ່ລະບົດຮຽນ ທີ່ພວກເຂົາໄດ້ເຂົ້າຮ່ວມ. ບັນດາຜູ້ເຂົ້າຮ່ວມ ທີ່ໄດ້ຮັບ 22 ດາວ ແມ່ນມີສິດໄດ້ຮັບ 'ລາງວັນ ແຮງຈູງໃຈ ລະດັບ 1', ບັນດາຜູ້ເຂົ້າຮ່ວມ ທີ່ໄດ້ຮັບ 26 ດາວ ແມ່ນມີສິດໄດ້ຮັບ 'ລາງວັນແຮງຈູງໃຈ ລະດັບ 2' ແລະ ບັນດາຜູ້ເຂົ້າຮ່ວມທີ່ໄດ້ເຂົ້າຮ່ວມທັງໝົດ 31 ບົດຮຽນ ແມ່ນມີສິດ ໄດ້ຮັບ 'ລາງວັນ ແຮງຈູງໃຈ ລະດັບ 3'. ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກກໍ່ມີສິດໄດ້ຮັບດາວ ສຳລັບການເຂົ້າຮ່ວມເຊັ່ນກັນ.

ອະທິບາຍວ່າ ພະນັກງານອົງການສຸພະນິມິດ ແລະ ຜູ້ອຳນວຍຄວາມສະດວກ ຂອງ SNYC ສາມາດຕັດສິນໃຈຮ່ວມກັນວ່າ ລາງວັນແຮງຈູງໃຈດັ່ງກ່າວຄວນແມ່ນຫຍັງ. ຄວາມຄິດເຫັນສຳລັບລາງວັນແຮງຈູງໃຈອາດຈະປະກອບດ້ວຍດັ່ງນີ້:

- ສິ່ງຂອງທີ່ຖືກ ບໍລິຈາກໃຫ້ອົງການສຸພະນິມິດ ເຊັ່ນ: ບັດຊົມຄອນເສີດ ຫຼື ເສື້ອຍືດ
- ເສື້ອຍືດ ຫຼື ໝວກ ຂອງ SNYC
- ຄ່າໃຊ້ຈ່າຍສຳລັບ ການຝຶກອົບຮົມວິຊາຊີບ ໃນຫົວຂໍ້ທີ່ກ່ຽວຂ້ອງກັບການເຄື່ອນຍ້າຍແບບປອດໄພ
- ການເຂົ້າຮ່ວມຢູ່ໃນ ກິດຈະກຳຕ້ານການຄ້າມະນຸດ ຫຼື ກອງປະຊຸມຖອດຖອນບົດຮຽນ ຂອງອົງການສຸພະນິມິດໃນລະດັບພາກພື້ນ.

ລາງວັນເຫຼົ່ານີ້ ຈະແຕກຕ່າງ ສຳລັບແຕ່ລະ SNYC.

## ກິດຈະກຳ: ເກມໝາກບານທວນຄວາມຈຳ

ອະທິບາຍວ່າ ຕໍ່ໄປນີ້ ບັນດາຜູ້ເຂົ້າຮ່ວມ ຈະໄດ້ຫຼິ້ນເກມ ເພື່ອຊ່ວຍພວກເຂົາທົບທວນສິ່ງທີ່ພວກເຂົາໄດ້ຮຽນ. ອະທິບາຍວ່າ ໃນຕໍ່ໜ້າ ກໍ່ຈະໄດ້ຫຼິ້ນ ເກມດັ່ງກ່າວນີ້ເຊັ່ນກັນ ເມື່ອພວກເຂົາໄປຢູ່ໃນ SNYC. ເກມດັ່ງກ່າວນີ້ ເອີ້ນວ່າ 'ເກມໝາກບານທວນຄວາມຈຳ'. ໃຊ້ 'IS 10b: ຄຳຖາມ ເກມໝາກບານທວນຄວາມຈຳ ຊຸດທີ 1' ເພື່ອນຳພາກຸ່ມຫຼິ້ນເກມ ໂດຍປະຕິບັດຕາມຄຳແນະນຳ. ບັນດາຜູ້ເຂົ້າຮ່ວມ ສາມາດອີງໃສ່ ຄຳແນະນຳ ຢູ່ໃນ 'IS 10a: ເກມອຸ່ນເຄື່ອງ' ເຊັ່ນກັນ.

### ຜູ້ອຳນວຍຄວາມສະດວກ ຂອງ SNYC ແມ່ນຫຍັງ?

ຜູ້ອຳນວຍຄວາມສະດວກ ຂອງ SNYC ມີສອງປະເພດ - ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກ ແລະ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ.

ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ຈະຈັດບັນດາກິດຈະກຳຂອງ ບັນດາ SNYC ແລະ ສອນບົດຮຽນ ໂດຍອີງໃສ່ ຄຳແນະນຳຢູ່ໃນເຄື່ອງມື.

ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ ຂອງ Youth ຈະຊ່ວຍ ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກ. ອະທິບາຍວ່າ ເຈົ້າຈະສົນທະນາ ກ່ຽວກັບວຽກ ຂອງໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ, ແຕ່ວ່າກ່ອນອື່ນໝົດເຈົ້າຈະເວົ້າກ່ຽວກັບຜົນປະໂຫຍດຂອງການເປັນໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ.

### ຜົນປະໂຫຍດຂອງການເປັນໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ

ອະທິບາຍວ່າ ຜົນປະໂຫຍດຂອງການເປັນໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ ມີຫຼາຍຢ່າງ. ອ່ານລາຍການລຸ່ມນີ້ດັງໆ ໃຫ້ກຸ່ມຟັງ:

1. ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ໄດ້ຮຽນຮູ້ທັກສະ. ພວກເຂົາຈະໄດ້ຮັບການຝຶກອົບຮົມ ກ່ຽວກັບວິທີການນຳພາກຸ່ມ. ສິ່ງດັ່ງກ່າວນີ້ ປະກອບດ້ວຍ ການຝຶກອົບຮົມໃນມື້ ນີ້ ແລະ ການຝຶກອົບຮົມ ທີ່ໄວໜຸ່ມຈະໄດ້ຮັບ ໃນເວລາເປັນໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ ທີ່ແທ້ຈິງ ຂອງ SNYC.
2. ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ຈະໄດ້ປະສົບການ ທີ່ສາມາດຊ່ວຍພວກເຂົາໃນຕໍ່ໜ້າ ໃນການໄດ້ເຂົ້າໂຮງຮຽນທີ່ດີ ຫຼື ໄດ້ເຮັດວຽກທີ່ດີ. ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ສາມາດບອກ ນາຍຈ້າງ ໃນອະນາຄົດຂອງພວກເຂົາວ່າ ພວກເຂົາເຄີຍເຮັດວຽກເປັນ ຜູ້ນຳພາໄວໜຸ່ມ ແລະ ພວກເຂົາມີຄວາມຮູ້ທີ່ດີ ກ່ຽວກັບ ການຕ້ານການຄ້າມະນຸດ ແລະ ມີທັກສະ ແລະ ປະສົບການດ້ານການນຳພາ.
3. ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ສາມາດບອກ ໃຫ້ ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ຂຽນໃບຢັ້ງຢືນວຽກ ສຳລັບພວກເຂົາ ໃນເວລາທີ່ພວກເຂົາ ສະໝັກຮຽນ ຫຼື ສະໝັກວຽກ.
4. ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ແຕ່ລະຄົນ ຈະໄດ້ຮັບ ໃບຢັ້ງຢືນ ຫຼັງຈາກສິ້ນສຸດ SNYC.
5. ຖ້າຫາກ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ຮຽນຈົບເອກະສານເຄື່ອງມືນີ້ແລ້ວ, ພວກເຂົາມີສິດ ເຂົ້າຮ່ວມການຝຶກອົບຮົມກ່ຽວກັບເຄື່ອງມືແບບຄົບຖ້ວນ ໃນຮອບຕໍ່ໄປ ແລະ ພວກເຂົາຍັງມີສິດສະໝັກເປັນ ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ໃນຮອບຕໍ່ໄປ.
6. ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ສາມາດໄດ້ຮັບ ດາວ ແລະ ມີສິດ ຮັບລາງວັນແຮງຈູງໃຈ.
7. ມັນມ່ວນ!

### ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ແມ່ນໃຜ?

ອະທິບາຍວ່າ ຈະມີໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ສູງສຸດ ສີ່ຄົນ ສຳລັບແຕ່ລະສະໂມສອນ.

ອະທິບາຍວ່າໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ຄວນ:

- ອາຍຸ 15–17 ປີ

- ສາມາດອ່ານໜັງສືໄດ້
- ເປັນໄວໜຸ່ມທີ່ມີຄວາມຮັບຜິດຊອບ ເຊິ່ງເປັນຜູ້ທີ່ມາກອງປະຊຸມຂອງ SNYC ທຸກໆຄັ້ງ
- ໄວໜຸ່ມທີ່ ສຸພາບ ເຊິ່ງເປັນຜູ້ທີ່ ບໍ່ທຳຮ້າຍ, ບໍ່ຂົ່ມເຫງ ຫຼື ເຍາະເຍີ້ຍໄວໜຸ່ມຜູ້ອື່ນ
- ມາຈາກຊຸມຊົນດຽວກັນກັບ ໄວໜຸ່ມຜູ້ອື່ນໆ ທີ່ຢູ່ໃນ SNYC.

**ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ເຮັດຫຍັງແດ່?**

ບອກບັນດາຜູ້ເຂົ້າຮ່ວມວ່າ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ຈະ:

1. ອຳນວຍຄວາມສະດວກໃນການຫຼິ້ນເກມອຸ່ນເຄື່ອງ ໃນຕອນເລີ່ມຕົ້ນບົດຮຽນ
2. ຊ່ວຍໄວໜຸ່ມ ຜູ້ທີ່ມີຄວາມຫຍຸ້ງຍາກ ໃນການອ່ານ ຫຼື ຂຽນ ດ້ວຍການຂຽນແນວຄວາມຄິດຂອງພວກເຂົາໃຫ້ພວກເຂົາ
3. ຊ່ວຍອຳນວຍຄວາມສະດວກ ການສົນທະນາ ໃນເວລາທີ່ ບົດຮຽນໃຫ້ແບ່ງ ເປັນກຸ່ມນ້ອຍ
4. ຊ່ວຍສ້າງການພົວພັນລະຫວ່າງໄວໜຸ່ມ ແລະ ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກ
5. ຊ່ວຍຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ກະກຽມບົດຮຽນ.

ອະທິບາຍວ່າ ໃນບົດຮຽນຖັດໄປ ບັນດາກິດຈະກຳເຫຼົ່ານີ້ ຈະຖືກສົນທະນາ ເພື່ອລະກິດຈະກຳ, ໂດຍຈະມີການອະທິບາຍກ່ຽວກັບວ່າ ແຕ່ລະກິດຈະກຳກ່ຽວຂ້ອງກັບຫຍັງ.

## ສະຫຼຸບສັງລວມບົດຮຽນ

- SNYC ແມ່ນ ສະໂມສອນໄວໜຸ່ມການນຳທາງແບບສະຫຼາດ.
- IS ແມ່ນ ແຜ່ນເຈັ້ຍຂໍ້ມູນ.
- ການຄ້າມະນຸດ ແມ່ນການຫຼອກລວງ ຫຼື ບັງຄັບບຸກຄົນ ໄປສູ່ຮູບແບບຕ່າງໆຂອງການເຮັດວຽກແບບຖືກຂູດຮີດ ເຊິ່ງຜູ້ທີ່ຖືກເຄາະຮ້າຍມີຊີວິດການເປັນຢູ່ທີ່ຫຍຸ້ງຍາກ.
- ທັກສະຊີວິດ ແມ່ນ ທັກສະສ່ວນຕົວ ທີ່ຊ່ວຍພວກເຮົາໃນການດຳລົງຊີວິດ.
- ລະບົບການໃຫ້ດາວ ແມ່ນລະບົບທີ່ ບັນດາຜູ້ເຂົ້າຮ່ວມຈະໄດ້ຮັບດາວ ສຳລັບແຕ່ລະບົດຮຽນທີ່ພວກເຂົາໄດ້ເຂົ້າຮ່ວມ. ດາວ = ລາງວັນ.
- SNYC ມີ ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກ ແລະ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ.
- ມີຜົນປະໂຫຍດຫຼາຍຢ່າງສຳລັບການເປັນໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ.

## IS 10a: ເກມອຸ່ນເຄື່ອງ

ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ຈະນຳພາການຫຼິ້ນເກມອຸ່ນເຄື່ອງ. ຜູ້ອຳນວຍຄວາມສະດວກຕ້ອງຈື່ວ່າຕ້ອງປະຕິບັດດັ່ງນີ້:

- ເວົ້າແບບມີພະລັງ
- ຟັງໄວໜຸ່ມຜູ້ອື່ນໆ
- ເຄື່ອນເໜັງມື ໃນຂະນະທີ່ເວົ້າ
- ຍ່າງໄປທົ່ວຫ້ອງໃນຂະນະທີ່ເວົ້າ
- ເບິ່ງຕາໄວໜຸ່ມຜູ້ອື່ນໆ
- ສ້າງເລື່ອງຕະຫຼົກ (ແຕ່ວ່າບໍ່ຫົວຂວັນບັນດາຜູ້ເຂົ້າຮ່ວມ)
- ຮັບປະກັນວ່າ ບັນດາຜູ້ເຂົ້າຮ່ວມທັງໝົດໄດ້ຮັບໂອກາດ
- ເບິ່ງໂມງ ແລະ ສິ້ນສຸດເກມ ຫຼັງຈາກຄົບ ສິບນາທີ
- ບໍ່ໃຊ້ເວລາດົນເກີນໄປສຳລັບອະທິບາຍກົດລະບຽບ ຂອງເກມອຸ່ນເຄື່ອງ
- ບໍ່ບັງຄັບຜູ້ເຂົ້າຮ່ວມໃຫ້ມີສ່ວນຮ່ວມຖ້າຜູ້ເຂົ້າຮ່ວມຜູ້ດັ່ງກ່າວບໍ່ຕ້ອງການ
- ບໍ່ທຳຮ້າຍ ຫຼື ເຮັດໃຫ້ໄວໜຸ່ມຄົນອື່ນອັບອາຍ.

## 1. ຈັດແຖວ

| | |
|---|---|
| **ຈຸດປະສົງ** | ເພື່ອຊ່ວຍບັນດາຜູ້ເຂົ້າຮ່ວມ ສ້າງສາຍພົວພັນ, ມີຄວາມມ່ວນຊື່ນ ແລະ ອຸ່ນເຄື່ອງ |
| **ອຸປະກອນ** | ບໍ່ມີ |
| **ເວລາ** | 5–10 ນາທີ |

**ກິດຈະກຳ**

1. ແບ່ງບັນດາຜູ້ເຂົ້າຮ່ວມອອກເປັນ ກຸ່ມ 5–6 ຄົນ.
2. ບອກໃຫ້ແຕ່ລະກຸ່ມ ຈັດສະມາຊິກຂອງຕົນ ໂດຍອີງໃສ່ ບັນດາໝວດດັ່ງຕໍ່ໄປນີ້:
   a. ລວງສູງ (ຈາກຕ່ຳສຸດ ຫາ ສູງສຸດ)
   b. ອາຍຸ (ຈາກ ໃຫຍ່ທີ່ສຸດ ຫາ ນ້ອຍທີ່ສຸດ)
   c. ຂະໜາດຂອງ ຕີນ
   d. ໄລຍະທາງຂອງການເດີນທາງ ຫາ ສະໂມສອນ
   e. ຈຳນວນຂອງອ້າຍເອື້ອຍນ້ອງ
3. ຫຼັງຈາກໄດ້ຍິນສຽງສັນຍານ, ສະມາຊິກຂອງກຸ່ມຄວນ ຈັດພວກເຂົາເອງ ອີງຕາມໝວດໄດ້ເວົ້າອອກໄປ ແລະ ນັ່ງລົງ.
4. ເພື່ອເຮັດໃຫ້ມີຄວາມທ້າທາຍຫຼາຍຂຶ້ນ, ບອກ ບັນດາຜູ້ເຂົ້າຮ່ວມ ໃຫ້ເຮັດໜ້າທີ່ໃຫ້ສຳເລັດ ໂດຍບໍ່ໃຫ້ປາກນຳກັນ.
5. ກວດກາ ການຈັດ.
6. ກຸ່ມທີ່ສຳເລັດກ່ອນໝູ່ ແລະ ຈັດຖືກ ຈະໄດ້ຄະແນນ.
7. ຫຼັງຈາກທີ່ກຸ່ມ ໄດ້ຮຽນຮູ້ກ່ຽວກັບ ເກມແລ້ວ, ບັນດາຜູ້ເຂົ້າຮ່ວມອາດຈະສະເໜີ ໝວດ ອື່ນໆອີກ.

## 1. ເກມໝາກບານ

| | |
|---|---|
| **ຈຸດປະສົງ** | ເພື່ອຊ່ວຍບັນດາຜູ້ເຂົ້າຮ່ວມ ຮູ້ຈັກກັນ, ສ້າງສາຍພົວພັນ, ມີຄວາມມ່ວນຊື່ນ ແລະ ອຸ່ນເຄື່ອງ |
| **ອຸປະກອນ** | ໝາກບານ |
| **ເວລາ** | 5–10 ນາທີ |

### ກິດຈະກຳ

1. ຈັດວົງມົນ.
2. ຈັບໝາກບານໄວ້ໃນມືຂອງເຈົ້າ.
3. ເວົ້າຊື່ຂອງເຈົ້າໃນຂະນະທີ່ຈັບໝາກບານ, ຈາກນັ້ນເວົ້າຊື່ເຈົ້າອີກເທື່ອໜຶ່ງ ໃນຂະນະທີ່ໂຍນໝາກບານໄປໃຫ້ຜູ້ເຂົ້າຮ່ວມຜູ້ອື່ນ.
4. ສືບຕໍ່ເຮັດແນວນັ້ນຈົນກະທັ້ງທຸກຄົນຢູ່ໃນກຸ່ມໄດ້ເວົ້າຊື່ຂອງຕົນໜຶ່ງເທື່ອ.
5. ຕໍ່ໄປ, ລົ້ມຄືນການກະທຳດັ່ງກ່າວ, ແຕ່ວ່າ ໃຫ້ຜູ້ທີ່ຈັບໝາກບານເວົ້າຊື່ຂອງຕົນ ແລະ ຈາກນັ້ນ,ໃນຂະນະທີ່ໂຍນໝາກບານ, ໃຫ້ເວົ້າຊື່ຂອງຜູ້ທີ່ໝາກບານກຳລັງໄປຫາ. ລົ້ມຄືນ ຈົນກະທັ້ງ ທຸກຄົນໃນກຸ່ມ ໄດ້ຖືກຜຽນໜຶ່ງເທື່ອ.
6. ຖ້າຫາກມີເວລາ, ບັນດາຜູ້ເຂົ້າຮ່ວມສາມາດເວົ້າຊື່ຂອງຕົນ ແລະ ບາງສິ່ງທີ່ພວກເຂົາມັກ. ເກມດັ່ງກ່າວນີ້ສາມາດຫຼິ້ນໄດ້ ໂດຍອີງໃສ່ ໝວດຕ່າງໆ (ເຊັ່ນ: ໝາກໄມ້ທີ່ເຈົ້າມັກ, ເກມໝາກບານ, ເພງ ແລະ ອື່ນໆ).

## 3. ບາງສິ່ງທີ່ເຈົ້າອາດຈະບໍ່ຮູ້

| | |
|---|---|
| **ຈຸດປະສົງ** | ເພື່ອຊ່ວຍບັນດາຜູ້ເຂົ້າຮ່ວມ ສ້າງສາຍພົວພັນ, ມີຄວາມມ່ວນຊື່ນ ແລະ ອຸ່ນເຄື່ອງ |
| **ອຸປະກອນ** | ບໍ່ມີ |
| **ເວລາ** | 5–10 ນາທີ |

### ກິດຈະກຳ

1. ບອກໃຫ້ບັນດາຜູ້ເຂົ້າຮ່ວມຢືນເປັນແຖວໜຶ່ງແຖວ.
2. ບອກໃຫ້ຜູ້ເຂົ້າຮ່ວມໜຶ່ງຄົນ ຍ່າງໄປຫາອີກດ້ານໜຶ່ງຂອງຫ້ອງ ແລະ ຫຼັງຈາກນັ້ນເວົ້າສິ່ງໃດໜຶ່ງກ່ຽວກັບຕົນເອງທີ່ຜູ້ອື່ນ ອາດຈະບໍ່ຮູ້.

ຍົກຕົວຢ່າງເຊັ່ນ:

- ຂ້ອຍເຄີຍໄປຢາມເມືອງຫຼວງ ໜຶ່ງເທື່ອ.
- ຂ້ອຍມັກ ກະແລັມ.
- ຂ້ອຍສາມາດເຮັດຫູເໜັງໄດ້.
- ຂ້ອຍເປັນນັກຮັບ ໃນກິລາບານເຕະ.

3. ຜູ້ທີ່ແລກປ່ຽນກ່ຽວກັບລັກສະນະພິເສດສະເພາະ ຫຼື ປະສົບການດັ່ງກ່າວນີ້ ຄວນແລ່ນ ຂ້າມໄປອີກດ້ານໜຶ່ງຂອງຫ້ອງ ແລະ ໄປຢູ່ກັບຜູ້ທຳອິດ.
4. ຫຼັງຈາກນັ້ນ ພວກເຂົາທັງໝົດກໍ່ກັບມາແຖວເກົ່າໃນຕອນເລີ່ມຕົ້ນ.
5. ລົ້ມຄືນຫຼາຍໆເທື່ອ ເທົ່າທີ່ເຈົ້າເຮັດໄດ້ ຕາມເວລາທີ່ມີ..

## 4. ເກມໝາກບານທວນຄວາມຈໍາ

| | |
|---|---|
| **ຈຸດປະສົງ** | ເພື່ອຊ່ວຍບັນດາຜູ້ເຂົ້າຮ່ວມ ຮູ້ຈັກກັນ, ສ້າງສາຍພົວພັນ, ມີຄວາມມ່ວນຊື່ນ ແລະ ອຸ່ນເຄື່ອງ; ເກມດັ່ງກ່າວນີ້ ຍັງໃຊ້ເພື່ອ ທົບທວນ ແລະ ທວນຄືນ ບັນດາຫົວຂໍ້ ທີ່ໄດ້ສົນທະນາໃນໄລຍະຜ່ານມາ. |
| **ອຸປະກອນ** | ໝາກບານ |
| **ເວລາ** | 5–10 ນາທີ |

### ກິດຈະກໍາ

1. ແບ່ງເປັນກຸ່ມນ້ອຍ ກຸ່ມລະ ສີ່ຄົນ.
2. ກຸ່ມທັງໝົດຢືນເປັນວົງມົນ, ໂດຍໃຫ້ບັນດາສະມາຊິກຂອງກຸ່ມນ້ອຍ ຢືນຢູ່ໃກ້ກັນ.
3. ໂຍນໝາກບານໄປຫາກຸ່ມໜຶ່ງ. ຖາມກຸ່ມດັ່ງກ່າວນັ້ນ ໜຶ່ງຄໍາຖາມ ຈາກບົດຮຽນທີ່ສອດຄ່ອງ. ທັງສີ່ຄົນຢູ່ໃນກຸ່ມປຶກສາຫາລືກັນ ເພື່ອຕັດສິນໃຈກ່ຽວກັບຄໍາຕອບທີ່ຖືກຕ້ອງ.
4. ຖ້າຫາກກຸ່ມໃຫ້ ຄໍາຕອບທີ່ຖືກຕ້ອງ, ກຸ່ມຈະໄດ້ໜຶ່ງຄະແນນ. ຖ້າບໍ່ຖືກ, ໂຍນໝາກບານໄປຫາກຸ່ມອື່ນ, ເຊິ່ງຈະໄດ້ຮັບໂອກາດ ເພື່ອຕອບຄໍາຖາມ.
5. ສືບຕໍ່ແບບດັ່ງກ່າວນີ້ ຈົນກະທັ້ງ ໄດ້ຖາມຄໍາຖາມທັງໝົດ.

## 5. ເກມຄໍາຖາມທົດສອບຄວາມຮູ້

| | |
|---|---|
| **ຈຸດປະສົງ** | ເພື່ອຊ່ວຍບັນດາຜູ້ເຂົ້າຮ່ວມ ທົບທວນເນື້ອໃນບົດຮຽນຜ່ານມາ ຂອງສະໂມສອນ ດ້ວຍວິທີ ທີ່ມີຄວາມມ່ວນຊື່ນ. |
| **ອຸປະກອນ** | ຄໍາຖາມສໍາລັບຫຼິ້ນເກມ; ລາງວັນນ້ອຍໆ |
| **ເວລາ** | 5–10 ນາທີ |

ເກມດັ່ງກ່າວ ບໍ່ຈໍາເປັນຕ້ອງກວມເອົາທຸກຄໍາຖາມຂອງການທົດສອບຄວາມຮູ້. ເຈົ້າສາມາດຖາມ ຫຼາຍຄໍາຖາມເທົ່າທີ່ເວລາທີ່ເຈົ້າມີ.

ມີຫຼາຍຄໍາຖາມຢູ່ໃນລາຍການ ທີ່ຢູ່ໃນເອກະສານນີ້, ສະນັ້ນເຈົ້າສາມາດ ຫຼິ້ນເກມຫຼາຍໆເທື່ອ, ໂດຍການຖາມຄໍາຖາມທີ່ແຕກຕ່າງກັນ.

ບັນດາຄໍາຖາມໄດ້ມີໝາຍເລກ ແລະ ບັນດາຄໍາຕອບກໍ່ມີ ຂີດໜ້າ ແລະ ຂຽນເປັນ *ຕົວເນີ້ງ.*

ມີບັນດາຄໍາຖາມ ແລະ ຄໍາຕອບ ຢູ່ໃນເອກະສານນີ້ ທີ່ອາດຈະບໍ່ຈະແຈ້ງ ຈົນກວ່າເຈົ້າຈະໄດ້ອ່ານບົດຮຽນ ທີ່ກ່ຽວຂ້ອງສາກ່ອນ. ແຕ່ເຖິງແນວໃດກໍ່ຕາມ, ເມື່ອເຈົ້າໄດ້ອ່ານເຄື່ອງມືທັງໝົດແລ້ວ, ບັນຫາຕ່າງໆເຫຼົ່ານັ້ນກໍ່ຄວນຈະມີຄວາມຈະແຈ້ງ. ເພາະສະນັ້ນ, ໃຫ້ຖາມຄໍາຖາມທີ່ກ່ຽວຂ້ອງກັບບົດຮຽນທີ່ເຈົ້າໄດ້ອໍານວຍຄວາມສະດວກສອນຜ່ານບົດຮຽນດັ່ງກ່າວນັ້ນແລ້ວ (ໝາຍເລກ ຂອງບັນດາບົດຮຽນຈະມີຢູ່ທ້າຍຂອງແຕ່ລະຄໍາຖາມ).

ຄໍາຖາມທົດສອບຄວາມຮູ້ແບບຢູ່ໃນໂຮງຮຽນ. ມັນມີເຈດຕະນາເພື່ອໃຫ້ມີຄວາມມ່ວນຊື່ນເອົາລາງວັນນ້ອຍໆ ໃຫ້ ສໍາລັບຄໍາຕອບທີ່ຖືກຕ້ອງ.

## 6. ເກມຜ້າແພ ຫຼື ຜ້າພັນຄໍ

| | |
|---|---|
| **ຈຸດປະສົງ** | ເພື່ອຊ່ວຍບັນດາຜູ້ເຂົ້າຮ່ວມ ມີຄວາມມ່ວນຊື່ນ ແລະ ອຸ່ນເຄື່ອງ |
| **ອຸປະກອນ** | ຜ້າແພ ຫຼື ຜ້າພັນຄໍ |
| **ເວລາ** | 5–10 ນາທີ |

### ກິດຈະກຳ

1. ອະທິບາຍວ່າ ເກມດັ່ງກ່າວນີ້ ແມ່ນແບບສະບັບໃໝ່ ຂອງເກມເກົ່າດັ່ງເດີມ ເພື່ອເຮັດໃຫ້ທຸກຄົນຮູ້ຈັກກັນດີຂຶ້ນກວ່າເກົ່າ.
2. ໃຫ້ກຸ່ມນັ່ງເປັນວົງມົນ.
3. ໃຫ້ຜູ້ເຂົ້າຮ່ວມຜູ້ໜຶ່ງຍ່າງອ້ອມວົງມົນ ແລະ ເອົາຜ້າແພ ຫຼື ຜ້າພັນຄໍໄປວາງໃສ່ ຜູ້ເຂົ້າຮ່ວມຜູ້ໃດຜູ້ໜຶ່ງທີ່ນັ່ງຢູ່. (ເກມດັ່ງກ່າວນີ້ ສາມາດຫຼິ້ນໄດ້ດ້ວຍການສຳພັດບ່າ ແທນທີ່ການໃຊ້ ຜ້າແພ.)
4. ຫຼັງຈາກນັ້ນ ຜູ້ເຂົ້າຮ່ວມຜູ້ທີ່ສອງ ກໍ່ແລ່ນໄລ່ຜູ້ທີ່ໜຶ່ງ ອ້ອມວົງມົນດັ່ງກ່າວ.
5. ຖ້າຫາກຜູ້ເຂົ້າຮ່ວມຜູ້ທີສອງ ໄລ່ທັນຜູ້ທີ່ໜຶ່ງ, ຜູ້ເຂົ້າຮ່ວມຜູ້ທີໜຶ່ງກໍ່ ຖືກຍຽນອີກເທື່ອໜຶ່ງ.
6. ຖ້າຫາກຜູ້ເຂົ້າຮ່ວມຜູ້ທີສອງ ໄລ່ຜູ້ທີ່ໜຶ່ງບໍ່ທັນ, ຜູ້ເຂົ້າຮ່ວມຜູ້ທີສອງກໍ່ ຖືກຍຽນ.

## ຄຳຖາມຂອງ ເກມໝາກບານທວນຄວາມຈຳ ຊຸດທີ 1

- SNYC ແມ່ນຫຍັງ?
- ຜູ້ອຳນວຍຄວາມສະດວກແມ່ນຫຍັງ?
- IS ແມ່ນຫຍັງ?
- ປື້ມນ້ອຍ ການນຳທາງແບບສະຫຼາດແມ່ນຫຍັງ?
- ບົດຮຽນແມ່ນຫຍັງ?
- ບົດຮຽນໜຶ່ງຍາວປານໃດ?
- ການຄ້າມະນຸດແມ່ນຫຍັງ?
- ການເຄື່ອນຍ້າຍແມ່ນຫຍັງ?
- ເຈົ້າຈະໄດ້ຮຽນຫຍັງຢູ່ໃນ SNYC?
- ທັກສະຊີວິດແມ່ນຫຍັງ?
- ເຈົ້າຈະໄດ້ຫຍັງສຳລັບການເຂົ້າຮ່ວມບັນດາບົດຮຽນຕ່າງໆ?
- ເຈົ້າຕ້ອງເຂົ້າຮ່ວມຈັກບົດຮຽນ ເພື່ອໃຫ້ໄດ້ລາງວັນລະດັບ 3?

# ບົດຮຽນທີ 11: ວິທີນຳພາ ເກມອຸ່ນເຄື່ອງ

## ຈຸດປະສົງ

ບັນດາຜູ້ເຂົ້າຮ່ວມຈະໄດ້ຮຽນຮູ້ ບັນດາທັກສະ ສຳລັບນຳພາ ເກມອຸ່ນເຄື່ອງ

## ເວລາ

60 ນາທີ

## ອຸປະກອນ

- ສຳເນົາເອກະສານ 'IS 10a: ເກມອຸ່ນເຄື່ອງ' ສຳລັບຜູ້ເຂົ້າຮ່ວມແຕ່ລະຄົນ
- ເຈ້ຍ ໜຶ່ງໃບ ສຳລັບຜູ້ເຂົ້າຮ່ວມແຕ່ລະຄົນ
- ບິກສີ

## ຜູ້ເຂົ້າຮ່ວມ

ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC

## ຜູ້ອຳນວຍຄວາມສະດວກ

ອາດຈະແມ່ນ ພະນັກງານອົງການສຸພະນິມິດ ຫຼື ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ທີ່ໄດ້ຜ່ານ ການຝຶກອົບຮົມ ເອກະສານເຄື່ອງມືດັ່ງກ່າວນີ້ ແລະ ການຝຶກອົບຮົມຜູ້ອຳນວຍຄວາມສະດວກ

## ຄຳແນະນຳ

ອະທິບາຍວ່າ ທຸກໆ ບົດຮຽນ ເລີ່ມຕົ້ນດ້ວຍເກມອຸ່ນເຄື່ອງ. 'ເກມໝາກບານບອກຊື່' ແລະ 'ເກມໝາກບານທວນຄວາມຈຳ' ທີ່ໄດ້ຫຼິ້ນໃນບົດຮຽນທີ່ຜ່ານມາ ແມ່ນເກມອຸ່ນເຄື່ອງ. ອະທິບາຍວ່າ ມື້ນີ້ບັນດາຜູ້ເຂົ້າຮ່ວມຈະໄດ້ຮຽນຮູ້ ກ່ຽວກັບວິທີນຳພາການຫຼິ້ນເກມ.

## ເປັນຫຍັງພວກເຮົາຈຶ່ງຫຼິ້ນເກມອຸ່ນເຄື່ອງ?

ຖາມບັນດາຜູ້ເຂົ້າຮ່ວມວ່າ ເປັນຫຍັງພວກເຮົາຈຶ່ງຫຼິ້ນເກມອຸ່ນເຄື່ອງ.

ອະທິບາຍວ່າ ບັນດາເກມເຫຼົ່ານີ້ແມ່ນມີຄວາມມ່ວນຊື່ນ, ແຕ່ວ່າ ເກມເຫຼົ່ານີ້ ກໍ່ຮັບໃຊ້ຈຸດປະສົງອື່ນເຊັ່ນກັນ. ເກມເຫຼົ່ານີ້ ຊ່ວຍໃຫ້ໄວໜຸ່ມຜ່ອນຄາຍ ແລະ ຮູ້ສຶກສະດວກສະບາຍ ກ່ອນທີ່ພວກເຂົາຈະເລີ່ມການສົນທະນາ ບັນດາຫົວຂໍ້ ທີ່ອາດຈະຍາກທີ່ຈະເວົ້າກ່ຽວກັບມັນ. ເກມເຫຼົ່ານີ້ ຈະຊ່ວຍໃຫ້ກຸ່ມຮູ້ຈັກ ແລະ ໄວ້ໃຈເຊິ່ງກັນ ແລະ ກັນ. ແລະ ມັນຈະເຮັດໃຫ້ໄວໜຸ່ມມີພະລັງ ໃນຕອນເລີ່ມຕົ້ນບົດຮຽນ.

ອະທິບາຍວ່າ ມີເກມອຸ່ນເຄື່ອງ ຫົກເກມ ຢູ່ໃນເອກະສານເຄື່ອງມື ແລະ ຢູ່ໃນ 'IS 10a: ເກມອຸ່ນເຄື່ອງ.' ອະທິບາຍວ່າ ເມື່ອໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ນຳພາຫຼິ້ນເກມອຸ່ນເຄື່ອງ, ພວກເຂົາຈະປະຕິບັດຕາມຄຳແນະນຳ.

ຢາຍສຳເນົາເອກະສານ 'IS 10a: ເກມອຸ່ນເຄື່ອງ' ໃຫ້ຜູ້ເຂົ້າຮ່ວມແຕ່ລະຄົນ ແລະ ຖາມບັນດາຜູ້ເຂົ້າຮ່ວມໃຫ້ເປີດໄປຫາ ເກມອຸ່ນເຄື່ອງທີ 1 'ຈັດແຖວ'.

ປະຕິບັດຕາມຄຳແນະນຳ ເພື່ອວ່າ ໃຫ້ບັນດາຜູ້ເຂົ້າຮ່ວມ ຫຼິ້ນເກມໂດຍອີງໃສ່ສອງໝວດ ທີ່ແຕກຕ່າງກັນ. ຫຼັງຈາກນັ້ນ ຖາມຫາອາສາສະໝັກ ເພື່ອເຮັດໜ້າທີ່ ຜູ້ອຳນວຍຄວາມສະດວກ ແລະ ນຳພາຫຼິ້ນເກມ.

ລິ້ມຄືນຫຼາຍເທື່ອ ຈົນກວ່າ ບັນດາຜູ້ເຂົ້າຮ່ວມຫຼາຍໆຄົນ ມີໂອກາດເປັນຜູ້ອຳນວຍຄວາມສະດວກໃນການຫຼິ້ນເກມ.

ອະທິບາຍວ່າ ໃນມື້ ດັ່ງກ່າວ ຈະໄດ້ຫຼິ້ນໝົດທັງຫົກເກມ. ບັນດາເກມຈະຖືກສອນໃນມື້ໜຶ່ງ ຍ້ອນວ່າ ການຫຼິ້ນເກມອຸ່ນເຄື່ອງທຸກໆ ຊົ່ວໂມງ ຫຼື ປະມານໄລຍະເວລາດັ່ງກ່າວ ຈະຊ່ວຍໃຫ້ບັນດາຜູ້ເຂົ້າຮ່ວມຕື່ນຕົວຢູ່ສະເໝີ.

## ທັກສະການນຳສະເໜີ

ຖາມບັນດາຜູ້ເຂົ້າຮ່ວມວ່າ ພວກເຂົາ ຈື່ໄດ້ບໍ່ຕອນທີ່ ນັ່ງຢູ່ໃນຫ້ອງຮຽນໃນຂະນະທີ່ ຄູສອນເວົ້າ ແລະ ກໍ່ເວົ້າເປັນເວລາຫຼາຍຊົ່ວໂມງ? 'ມີໃຜໄດ້ຫຼຽວອອກນອກປ່ອງຢ້ຽມ ແລະ ຖ້າໃຫ້ແຕ່ລະນາທີຜ່ານໄປຈົນກະທັ້ງຊົ່ວໂມງຮຽນສິ້ນສຸດລົງ ບໍ່?' ມັນເປັນສິ່ງສຳຄັນທີ່ ບໍ່ໃຫ້ ໄວໜຸ່ມ ເບື່ອ ເວລາຢູ່ໃນ SNYC ຫຼື ພຽງແຕ່ຖ້າໃຫ້ເວລາໝົດໄປ.

ເຄື່ອງມືໄດ້ຖືກອອກແບບ ເພື່ອເຮັດໃຫ້ໄວໜຸ່ມບໍ່ໄດ້ຢູ່ລ້າໆ. ແຕ່ລະບົດຮຽນເລີ່ມຕົ້ນດ້ວຍ ເກມ ແລະ ປະກອບດ້ວຍກິດຈະກຳທີ່ເຮັດໃຫ້ໄວໜຸ່ມໄດ້ເຮັດບາງສິ່ງ ດ້ວຍການຫຼິ້ນ ຫຼື ການເຮັດວຽກເປັນກຸ່ມ. ແຕ່ວ່າ ອະທິບາຍວ່າ ແມ່ນແຕ່ ເກມອຸ່ນເຄື່ອງກໍ່ສາມາດເປັນສິ່ງໜ້າເບື່ອໄດ້ ຖ້າຫາກໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ເວົ້າດົນໂພດ. ອະທິບາຍວ່າ ທັກສະການນຳສະເໜີທີ່ສຳຄັນອີກອັນໜຶ່ງ ແມ່ນການຮູ້ວິທີເວົ້າສິ່ງທີ່ເຈົ້າຕ້ອງເວົ້າ ໃນເວລາສັ້ນໆ.

ບອກບັນດາຜູ້ເຂົ້າຮ່ວມວ່າ ມັນສຳຄັນຫຼາຍ ທີ່ບັນດາເກມອຸ່ນເຄື່ອງ ບໍ່ໃຊ້ເວລາຍາວກວ່າ 10 ນາທີ ແລະ ໄວໜຸ່ມທຸກຄົນສາມາດໄດ້ຮັບໂອກາດ. ມີບາງຄຳຊີ້ນຳສຳລັບ ການນຳພາຫຼິ້ນເກມອຸ່ນເຄື່ອງດັ່ງນີ້:

- ບໍ່ໃຊ້ເວລາດົນເກີນໄປສຳລັບອະທິບາຍກົດລະບຽບ ຂອງເກມອຸ່ນເຄື່ອງ.
- ບໍ່ບັງຄັບຜູ້ເຂົ້າຮ່ວມໃຫ້ມີສ່ວນຮ່ວມຖ້າຜູ້ເຂົ້າຮ່ວມຜູ້ດັ່ງກ່າວບໍ່ຕ້ອງການ.
- ຕ້ອງຮັບປະກັນວ່າ ບັນດາຜູ້ເຂົ້າຮ່ວມທັງໝົດໄດ້ຮັບໂອກາດ.
- ເບິ່ງໂມງ ແລະ ສິ້ນສຸດເກມ ພາຍໃນ 10 ນາທີ.

ອະທິບາຍວ່າ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ຍັງສາມາດ ເຮັດໃຫ້ເກມອຸ່ນເຄື່ອງມີຄວາມມ່ວນຊື່ນຫຼາຍຂຶ້ນ ດ້ວຍການໃຊ້ພະລັງໃນການເວົ້າ. ຜູ້ອຳນວຍຄວາມສະດວກຂອງ SNYC ຄວນພະຍາຍາມໃຫ້ມີຄວາມສົນໃຈ. ອະທິບາຍວ່າ ໃນບາງວິທີ ທີ່ຜູ້ອຳນວຍຄວາມສະດວກສາມາດເຮັດໄດ້ປະກອບມີຄື:

- ເຄື່ອນເໜັງມື ໃນຂະນະທີ່ເວົ້າ
- ຍ່າງໄປທົ່ວຫ້ອງໃນຂະນະທີ່ເວົ້າ
- ເບິ່ງຕາບັນດາຜູ້ເຂົ້າຮ່ວມ
- ສ້າງເລື່ອງຕະຫຼົກ (ແຕ່ວ່າບໍ່ຫົວຂວັນບັນດາຜູ້ເຂົ້າຮ່ວມ)
- ມີຄວາມມ່ວນຊື່ນ.

## ກິດຈະກຳ: ຝຶກແອບທັກສະການນຳສະເໜີ

ບອກໃຫ້ບັນດາຜູ້ເຂົ້າຮ່ວມຊອກຄູ່. ບອກໃຫ້ພວກເຂົາເບິ່ງເອກະສານ 'IS 10: ເກມອຸ່ນເຄື່ອງ.' ບອກໃຫ້ພວກເຂົາອ່ານຄຳແນະນຳ ສຳລັບເກມ 'ຈັດແຖວ' ເພື່ອຕົນເອງ. ຫຼັງຈາກນັ້ນ ບອກພວກເຂົາໃຫ້ປ່ຽນຜຽນກັນອ່ານ ຄຳແນະນຳໃຫ້ກັນແລະກັນຟັງ.

ອະທິບາຍວ່າ ເທື່ອທຳອິດທີ່ພວກເຂົາອ່ານມັນອອກສຽງ ດັ່ງໆ ພວກເຂົາຄວນພະຍາຍາມໃຊ້ພາສາມື ເພື່ອເຮັດໃຫ້ຄວາມໝາຍ ຂອງມັນແຈ້ງຂຶ້ນ.

ເທື່ອທີສອງພວກເຂົາຄວນຍ່າງໄປທົ່ວຫ້ອງໃນຂະນະທີ່ພວກເຂົາອ່ານມັນ.

ເທື່ອທີສາມ ພວກເຂົາຄວນເບິ່ງຕາຂອງຄູ່ຂອງພວກເຂົາໃນຂະນະທີ່ອ່ານມັນ.

ສຸດທ້າຍ, ພວກເຂົາຄວນອ່ານມັນ ຄ້າຍໆກັບວ່າພວກເຂົາມີຄວາມມ່ວນຊື່ນ.

ຕໍ່ໄປ, ບອກໃຫ້ບັນດາຄູ່ຕ່າງໆ ປ່ຽນບົດບາດ ແລະ ລົ້ມຄືນການຝຶກຫັດ.

## ສົນທະນາ

ຫຼັງຈາກທີ່ ທຸກຄົນ ຢູ່ໃນກຸ່ມໄດ້ປ່ຽນຜຽນກັນຢ່າງໜ້ອຍ ສອງເທື່ອແລ້ວ, ບອກໃຫ້ບັນດາຜູ້ເຂົ້າຮ່ວມ ຮວມເຂົ້າກັນເປັນກຸ່ມດຽວ, ແລະ ຖາມ:

- ມີຄວາມຮູ້ສຶກແນວໃດໃນການເຮັດກິດຈະກຳດັ່ງກ່າວນີ້?
- ທັກສະໃດທີ່ງ່າຍສຳລັບການນຳໃຊ້?
- ທັກສະໃດຍາກ?
- ເປັນຫຍັງມັນຈຶ່ງຍາກ?
- ເຈົ້າຮູ້ສຶກວ່າເຈົ້າໄດ້ປັບປຸງບໍ່ ເມື່ອໄດ້ຝຶກຊ້ອມຫຼາຍຂຶ້ນ?
- ເຈົ້າໄດ້ພັດທະນາວິທີການສ່ວນຕົວຂອງຕົນບໍ່ ທີ່ເຮັດໃຫ້ມັນງ່າຍຂຶ້ນ ເຊິ່ງເຈົ້າຢາກຈະແບ່ງປັນແລກປ່ຽນກັບກຸ່ມ?

## ຄຳແນະນຳ: ບໍ່ໃຊ້ຄວາມຮຸນແຮງ ຫຼື ການເຮັດໃຫ້ເສຍກຽດ

ບອກບັນດາຜູ້ເຂົ້າຮ່ວມຫຼັບຕາ ແລະ ໃຫ້ຄິດຄືນໄປຫາເວລາຢູ່ໃນໂຮງຮຽນ ໃນຕອນທີ່ຄູສອນ ຕີພວກເຂົາ ຫຼື ເຮັດໃຫ້ພວກເຂົາເສຍກຽດ. ບອກພວກເຂົາໃຫ້ຄິດຄືນວ່າ ພວກເຂົາຄິດຫຍັງ ຫຼື ຮູ້ສຶກແນວໃດໃນຕອນນັ້ນ. ຖາມວ່າ 'ເຈົ້າກຳລັງຄິດກ່ຽວກັບຫົວຂໍ້ທີ່ຄູກຳລັງສົນທະນາຢູ່ບໍ່ ຫຼືວ່າ ເຈົ້າຖືກທຳລາຍດ້ວຍຄວາມຮູ້ສຶກ ໂສກເສົ້າ ຫຼື ໃຈຮ້າຍ ທີ່ເປັນຜົນມາຈາກວິທີທີ່ຄູ ເຮັດໃຫ້ເຈົ້າເຈັບປວດ?'

ອະທິບາຍວ່າ ບາງຄົນເຊື່ອວ່າ ການຕີ, ການເຮັດໃຫ້ເສຍກຽດ ຫຼື ການຫົວຂວັນ ໄວໜຸ່ມຈະບັງຄັບໃຫ້ພວກເຂົາຮຽນຮູ້. ສິ່ງດັ່ງກ່າວນີ້ບໍ່ແມ່ນຄວາມຈິງ. ການສຶກສາຄົ້ນຄວ້າ ໄດ້ສະແດງໃຫ້ເຫັນວ່າ ຮູບແບບການທຳຮ້າຍດ້ານຮ່າງກາຍ ຫຼື ຈິດໃຈຂອງໄວໜຸ່ມ ແບບດັ່ງກ່າວນີ້ ມີຜົນກະທົບດ້ານກົງກັນຂ້າມ: ມັນເຮັດໃຫ້ໄວໜຸ່ມຮູ້ສຶກດ້ານຈິດໃຈ ແບບຖືກບັງຄັບໃຫ້ຮຽນ. ອະທິບາຍວ່າ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ SNYC ທີ່ດີ:

- ບໍ່ຕີ ຫຼື ທຳຮ້າຍຮ່າງກາຍ ໄວໜຸ່ມຜູ້ອື່ນໆ ບໍ່ວ່າດ້ວຍວິທີໃດກໍ່ຕາມ
- ບໍ່ຫົວເຍາະເຍີ້ຍໄວໜຸ່ມຜູ້ອື່ນໆ
- ບໍ່ເຮັດໃຫ້ໄວໜຸ່ມຜູ້ອື່ນໆ ເສຍກຽດ ບໍ່ວ່າດ້ວຍວິທີໃດກໍ່ຕາມ
- ບໍ່ປຽບທຽບບັນດາຜູ້ເຂົ້າຮ່ວມແບບເປີດເຜີຍຕໍ່ສາທາລະນາ (ຕົວຢ່າງເຊັ່ນ: ຜູ້ອຳນວຍຄວາມສະດວກບໍ່ຄວນເວົ້າວ່າ ນັກຮຽນຜູ້ນີ້ 'ດີຫຼາຍ' ແລະ ນັກຮຽນຜູ້ນັ້ນ 'ຂີ້ລ້າຍຫຼາຍ'. ຖ້າເຈົ້າເຮັດແນວນັ້ນ ຜູ້ເຂົ້າຮ່ວມທີ່ 'ຂີ້ລ້າຍ' ອາດຈະບໍ່ມາ SNYC ອີກ).

## ການແຕ້ມຮູບ

ຢາຍເຈ້ຍ ແລະ ບິກ. ບອກໄວໜຸ່ມໃຫ້ແຕ້ມຮູບ ຂອງໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກທີ່ດີ ຂອງ SNYC ທີ່ນຳພາຫຼີ້ນເກມອຸ່ນເຄື່ອງ. ໃນເວລາທີ່ພວກເຂົາແຕ້ມ, ຍ່າງທົ່ວຫ້ອງ ແລະ ບອກໃຫ້ພວກເຂົາລວມ ເອົາບັນດາລາຍລະອຽດຕ່າງໆເຂົ້າຢູ່ໃນຮູບແຕ້ມຂອງພວກເຂົາ ເຊິ່ງສະແດງໃຫ້ເຫັນໄວໜຸ່ມທີ່ເປັນຜູ້ອຳ ນວຍຄວາມສະດວກເຮັດສິ່ງດັ່ງລຸ່ມນີ້:

- ເບິ່ງໂມງ
- ເວົ້າດ້ວຍພະລັງ
- ຍ່າງໄປທົ່ວຫ້ອງ
- ໃຊ້ມື ເພື່ອເຮັດໃຫ້ຄວາມໝາຍແຈ້ງຂຶ້ນ
- ລວມເອົາໄວໜຸ່ມທັງໝົດເຂົ້າໃນກຸ່ມ.

## ສະຫຼຸບສັງລວມບົດຮຽນ

- ເກມອຸ່ນເຄື່ອງ ແມ່ນນຳພາໂດຍໄວໜຸ່ມ ທີ່ເປັນຜູ້ອຳນວຍຄວາມສະດວກ SNYC
- ສອນເກມອຸ່ນເຄື່ອງທັງໝົດ ທີກເກມ
- ໄວໜຸ່ມ ທີ່ເປັນຜູ້ອຳນວຍຄວາມສະດວກທີ່ດີຂອງ SNYC ແມ່ນ:
  - » ເວົ້າດ້ວຍພະລັງ
  - » ຟັງໄວໜຸ່ມຜູ້ອື່ນ
  - » ໃຊ້ພາສາມື ໃນຂະນະທີ່ເວົ້າ
  - » ຍ່າງໄປທົ່ວຫ້ອງໃນຂະນະທີ່ເວົ້າ
  - » ເບິ່ງຕາບັນດາຜູ້ເຂົ້າຮ່ວມ
  - » ສ້າງເລື່ອງຕະຫຼົກ (ແຕ່ວ່າບໍ່ຫົວຂວັນບັນດາຜູ້ເຂົ້າຮ່ວມ)
  - » ຮັບປະກັນວ່າ ບັນດາຜູ້ເຂົ້າຮ່ວມທັງໝົດໄດ້ຮັບໂອກາດ
  - » ເບິ່ງໂມງ ແລະ ສິ້ນສຸດເກມ ພາຍໃນ 10 ນາທີ
  - » ບໍ່ໃຊ້ເວລາດົນເກີນໄປສຳລັບອະທິບາຍກົດລະບຽບ ຂອງເກມອຸ່ນເຄື່ອງ
  - » ບໍ່ບັງຄັບຜູ້ເຂົ້າຮ່ວມໃຫ້ມີສ່ວນຮ່ວມຖ້າຜູ້ເຂົ້າຮ່ວມຜູ້ດັ່ງກ່າວບໍ່ຕ້ອງການ
  - » ບໍ່ທຳຮ້າຍ ຫຼື ເຮັດໃຫ້ໄວໜຸ່ມຜູ້ອື່ນໆ ເສຍກຽດ

# ບົດຮຽນທີ 12: ວິທີຊ່ວຍໄວໜຸ່ມ ຜູ້ທີ່ມີຄວາມຫຍຸ້ງຍາກໃນການອ່ານ

## ຈຸດປະສົງ

ບັນດາຜູ້ເຂົ້າຮ່ວມຈະຮຽນຮູ້ວິທີຊ່ວຍໄວໜຸ່ມຜູ້ທີ່ມີຄວາມຫຍຸ້ງຍາກໃນການອ່ານ

## ເວລາ

60 ນາທີ

## ເອກະສານ

- ສຳເນົາເອກະສານ 'IS 10a: ເກມອຸ່ນເຄື່ອງ' ສຳລັບຜູ້ເຂົ້າຮ່ວມແຕ່ລະຄົນ
- ສຳເນົາເອກະສານ 'IS 12a: ການອ່ານ' ສຳລັບຈຳນວນເຄິ່ງໜຶ່ງຂອງໄວໜຸ່ມຢູ່ໃນກຸ່ມ (ພວກເຂົາຈະອ່ານເອກະສານດັ່ງກ່າວນີ້ ເປັນຄູ່)

## ຜູ້ເຂົ້າຮ່ວມ

ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC

## ຜູ້ອຳນວຍຄວາມສະດວກ

ອາດຈະແມ່ນ ພະນັກງານອົງການສຸພະນິມິດ ຫຼື ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ທີ່ໄດ້ຜ່ານ ການຝຶກອົບຮົມ ເອກະສານເຄື່ອງມືດັ່ງກ່າວນີ້ ແລະ ການຝຶກອົບຮົມຜູ້ອຳນວຍຄວາມສະດວກ

## ກິດຈະກຳອຸ່ນເຄື່ອງ

ອະທິບາຍວ່າ ບົດຮຽນນີ້ ຈະເລີ່ມຕົ້ນດ້ວຍເກມອຸ່ນເຄື່ອງອີກເກມໜຶ່ງ. ເກມດັ່ງກ່າວນີ້ ເອີ້ນວ່າ 'ບາງສິ່ງທີ່ເຈົ້າອາດຈະບໍ່ຮູ້'. ມັນເປັນເກມທີ່ມ່ວນ ທີ່ສ້າງຄວາມເປັນເອກະພາບຂອງກຸ່ມ ແລະ ຊ່ວຍທຸກຄົນມີພະລັງ.

ບອກໃຫ້ບັນດາຜູ້ເຂົ້າຮ່ວມເອົາເອກະສານ 'IS 10a: ເກມອຸ່ນເຄື່ອງ' ອອກມາ ແລະ ເປີດໄປຫາເກມທີ່ຊື່ວ່າ 'ບາງສິ່ງທີ່ເຈົ້າອາດຈະບໍ່ຮູ້'.

ປະຕິບັດຕາມຄຳແນະນຳ ເພື່ອຫຼິ້ນເກມ 'ບາງສິ່ງທີ່ເຈົ້າອາດຈະບໍ່ຮູ້' ໜຶ່ງຮອບຮ່ວມກັບບັນດາຜູ້ເຂົ້າຮ່ວມ. ຫຼັງຈາກນັ້ນບອກບັນດາຜູ້ເຂົ້າຮ່ວມໃຫ້ອາສາສະໝັກ ອຳນວຍຄວາມສະດວກເກມດັ່ງກ່າວ. ພະຍາຍາມເລືອກເອົາອາສາສະໝັກ ຜູ້ທີ່ບໍ່ເຄີຍຖືກຍຽນ ອຳນວຍຄວາມສະດວກ ເກມອຸ່ນເຄື່ອງ ໃນບົດຮຽນທີ່ຜ່ານມາ.

## ຄຳແນະນຳ: ການຊ່ວຍໄວໜຸ່ມຜູ້ທີ່ມີຄວາມຫຍຸ້ງຍາກໃນການອ່ານ

ອະທິບາຍວ່າ ວຽກທີສອງຂອງ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ແມ່ນເພື່ອຊ່ວຍເຫຼືອ ໄວໜຸ່ມທີ່ເປັນຜູ້ເຂົ້າຮ່ວມ ທີ່ມີຄວາມຫຍຸ້ງຍາກໃນການອ່ານ. ອາດຈະມີໄວໜຸ່ມບາງຄົນຢູ່ໃນສະໂມສອນ ທີ່ບໍ່ຮູ້ອ່ານໜັງສື ຫຼື ສາມາດອ່ານໄດ້ພຽງໜ້ອຍດຽວ.

ອະທິບາຍວ່າ ໄວໜຸ່ມທີ່ບໍ່ສາມາດອ່ານໜັງສືໄດ້ ກໍ່ມີຄວາມສະຫຼາດຄືກັບຄົນອື່ນ. ພວກເຂົາສາມາດມີແນວ ຄວາມຄິດທີ່ດີ ແລະ ມີຄຳຄິດເຫັນທີ່ມີຄຸນຄ່າ. ມັນສຳຄັນ ທີ່ພວກເຂົາມີສ່ວນຮ່ວມ ຢູ່ໃນ SNYC ເພື່ອຮຽນຮູ້ ແລະ ແລກປ່ຽນແນວຄວາມຄິດ.

**ພວກເຮົາຈະສາມາດລວມເອົາໄວໜຸ່ມທີ່ບໍ່ສາມາດອ່ານໄດ້ ເຂົ້າໃນ SNYC ແນວໃດ?**

ອະທິບາຍວ່າ ມີຫຼາຍສິ່ງ ທີ່ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ ຂອງ SNYC ສາມາດເຮັດໄດ້ ເພື່ອໃຫ້ ໄວໜຸ່ມທີ່ບໍ່ສາມາດອ່ານໄດ້ ມີສ່ວນຮ່ວມ.

### 1. ອ່ານເອກະສານທີ່ຂຽນ, ສັນຍາລັກ ແລະ ເຈັ້ຍແຜນໃຫຍ່ ອອກສຽງດັງໆ.

ບອກບັນດາຜູ້ເຂົ້າຮ່ວມວ່າ ອີກວຽກໜຶ່ງຂອງ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ແມ່ນ ເພື່ອ ອ່ານອອກສຽງດັງໃຫ້ໄວໜຸ່ມຜູ້ອື່ນໆ ຟັງ. ຖ້າຫາກ ບົດຮຽນລວມເອົາແຜນເຈັ້ຍຂໍ້ມູນ, ສັນຍາລັກ ຫຼື ເຈັ້ຍ ແຜນໃຫຍ່, ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ຄວນອ່ານບັນດາຂໍ້ມູນດັ່ງກ່າວນີ້ ໃຫ້ໄວໜຸ່ມ ທີ່ບໍ່ສາມາດອ່ານໄດ້ ຟັງ. ບາງເທື່ອ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ SNYC ຈະຖືກບອກໃຫ້ອ່ານ ແຜ່ນເຈັ້ຍຂໍ້ມູນດັ່ງໆ ໃຫ້ທັງໝົດກຸ່ມ ຟັງ. ບາງເທື່ອໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ SNYC ສາມາດນັ່ງ ໃກ້ກັບ ໄວໜຸ່ມທີ່ບໍ່ສາມາດອ່ານໄດ້ ແລະ ອ່ານ ຄ່ອຍໆ ໃຫ້ພວກເຂົາຟັງ.

### 2. ຈັບຄູ່ກັບໄວໜຸ່ມທີ່ມີຄວາມຫຍຸ້ງຍາກໃນການອ່ານ.

ອະທິບາຍວ່າ ໃນລະຫວ່າງກິດຈະກຳ ຂອງ SNYC ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ SNYC ຈະຈັບ ຄູ່ກັບໄວໜຸ່ມທີ່ບໍ່ສາມາດອ່ານໄດ້ ຢູ່ເລື້ອຍໆ. ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ SNYC ຄວນອ່ານເອ ກະສານ ໃຫ້ຄູ່ຂອງລາວຟັງ ແລະ ຫຼັງຈາກນັ້ນ ຖາມວ່າຄູ່ຂອງພວກເຂົາຄິດວ່າຄຳຕອບແມ່ນຫຍັງ? ຫຼັງຈາກ ນັ້ນ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ SNYC ສາມາດປະສົມປະສານ ແນວຄວາມຄິດຂອງຄູ່ຂອງ ພວກເຂົາ ກັບ ແນວຄວາມຄິດຂອງພວກເຂົາເອງ ແລະ ຂຽນມັນລົງ. ມັນສຳຄັນ ທີ່ຕ້ອງໃຫ້ໄວໜຸ່ມຜູ້ທີ່ບໍ່ສາມາດ ອ່ານໄດ້ ຄິດກ່ຽວກັບແນວຄວາມຄິດ ແລະ ຄຳຕອບ ຂອງພວກເຂົາເອງ, ບໍ່ແມ່ນຈະຕອບແທນພວກເຂົາ.

### 3. ເຂົ້າຮ່ວມການເຮັດວຽກເປັນກຸ່ມນ້ອຍ ກັບໄວໜຸ່ມ ທີ່ມີຄວາມຫຍຸ້ງຍາກໃນການອ່ານ.

ບອກບັນດາຜູ້ເຂົ້າຮ່ວມວ່າ ຖ້າຫາກ SNYC ແບ່ງເປັນກຸ່ມນ້ອຍ, ໄວໜຸ່ມຜູ້ທີ່ບໍ່ສາມາດອ່ານໄດ້ ຄວນເຂົ້າຢູ່ ໃນກຸ່ມ ທີ່ມີໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ໜຶ່ງຄົນ ຫຼື ຫຼາຍກວ່ານັ້ນ. ສິ່ງດັ່ງກ່າວນີ້ ໝາຍຄວາມວ່າ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ສາມາດຊ່ວຍອຳນວຍຄວາມສະ ດວກການສົນທະນາໃຫ້ແກ່ກຸ່ມ ແລະ ສາມາດຊ່ວຍໄວໜຸ່ມຜູ້ທີ່ບໍ່ສາມາດອ່ານໄດ້ ໃນການເຮັດວຽກເປັນກຸ່ມ.

ວິທີປະຕິບັດຕໍ່ ໄວໜຸ່ມທີ່ມີຄວາມຫຍຸ້ງຍາກໃນການອ່ານ

ອະທິບາຍວ່າ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ຄວນປະຕິບັດຕໍ່ ໄວໜຸ່ມຜູ້ທີ່ມີຄວາມຫຍຸ້ງ ຍາກໃນການອ່ານດ້ວຍຄວາມເຄົາລົບນັບຖື. ອະທິບາຍວ່າ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ຄວນປະຕິບັດຕາມບັນດາຄຳຊີ້ນຳລຸ່ມນີ້:

- ພະຍາຍາມ ລະບຸໄວໜຸ່ມ ຜູ້ທີ່ຕ້ອງການຄວາມຊ່ວຍເຫຼືອໃນການອ່ານ ໂດຍປາດສະຈາກການໃຫ້ ຄວາມສົນໃຈຕໍ່ພວກເຂົາ.
- ບໍ່ເຍາະເຍີ້ຍ ຫຼື ຫົວຂວັນ ໄວໜຸ່ມຜູ້ທີ່ມີຄວາມຫຍຸ້ງຍາກໃນການອ່ານ.
- ບໍ່ບອກຜູ້ອື່ນ ວ່າຜູ້ໃດທີ່ຢູ່ໃນຫ້ອງຮຽນບໍ່ສາມາດອ່ານໄດ້.

- ບໍ່ໃຫ້ຄວາມສົນໃຈຕໍ່ຜູ້ອ່ານບໍ່ໄດ້ ບໍ່ວ່າໃນວິທີໃດກໍ່ຕາມ.
- ມີຄວາມອົດທົນ.

## ກິດຈະກຳ

ບອກໃຫ້ບັນດາຜູ້ເຂົ້າຮ່ວມຈັບຄູ່ ແລະ ຢາຍເອກະສານ 'IS 12a: ການອ່ານ'. ບອກໃຫ້ບັນດາຜູ້ເຂົ້າຮ່ວມອ່ານເລື່ອງສົມມຸດດັ່ງກ່າວ ແລະ ຕອບຄຳຖາມທີ່ຢູ່ດ້ານລຸ່ມ.

ເມື່ອພວກເຂົາເຮັດສຳເລັດ, ບອກໃຫ້ບັນດາຄູ່ຕ່າງໆ ແລກປ່ຽນແບ່ງປັນຄຳຕອບຂອງພວກເຂົາ. ອະນຸຍາດໃຫ້ບັນດາ ຜູ້ເຂົ້າຮ່ວມ ສົນທະນາກ່ຽວກັບຄຳຕອບຂອງພວກເຂົາ ແລະ ຫຼັງຈາກນັ້ນ ໃຫ້ຕື່ມບັນດາຄຳຕອບຕ່າງໆ ຈາກເອກະສານ 'IS 12b: ຄຳຕອບຂອງ ການອ່ານ' ທີ່ພວກເຂົາຍັງບໍ່ທັນໄດ້ກ່າວເຖິງນັ້ນ ໃສ່ຕື່ມອີກ.

## ສະຫຼຸບສັງລວມບົດຮຽນ

- ອ່ານເອກະສານ, ສັນຍາລັກ ແລະ ເຈັ້ຍແຜນໃຫຍ່ ດັງໆໃຫ້ໄວໜຸ່ມທີ່ບໍ່ສາມາດອ່ານ ຟັງ.
- ຈັບຄູ່ກັບໄວໜຸ່ມຜູ້ທີ່ບໍ່ສາມາດອ່ານ
- ຊ່ວຍໄວໜຸ່ມທີ່ບໍ່ສາມາດອ່ານ ໃນເວລາທີ່ແບ່ງເປັນກຸ່ມນ້ອຍ
- ມີຄວາມເຄົາລົບນັບຖືຕໍ່ໄວໜຸ່ມທີ່ມີຄວາມຫຍຸ້ງຍາກໃນການອ່ານ
- ບໍ່ບອກໄວໜຸ່ມຜູ້ອື່ນໆ ໃນສະໂມສອນ ຖ້າເຈົ້າຮູ້ໄວໜຸ່ມທີ່ບໍ່ສາມາດອ່ານ

## IS 12a: ການອ່ານ

K ແມ່ນເດັກຊາຍ ອາຍຸ 14 ປີທີ່ມີຄວາມສະຫຼາດ ເຊິ່ງມາຈາກຄອບຄົວທີ່ທຸກຍາກ. ລາວອອກໂຮງຮຽນຕັ້ງແຕ່ອາຍຸໄດ້ 9 ປີ ຍ້ອນວ່າຄອບຄົວຂອງລາວບໍ່ມີເງິນຈ່າຍຄ່າຮຽນ. K ຂາຍປຶ້ມ ແລະ ໂປດສະກາດຢູ່ຕາມແຄມທາງໃນຕອນກາງຄືນ ເພື່ອຊ່ວຍຄອບຄົວຂອງລາວ. K ກຳລັງຄິດກ່ຽວກັບການເຄື່ອນຍ້າຍເພື່ອໄປຊອກເຮັດວຽກທີ່ດີກວ່າ ໃນຕອນທີ່ລາວໄດ້ພົບກັບພະນັກງານຂອງອົງການສຸພະນິມິດ ຜູ້ທີ່ໄດ້ບອກລາວໃຫ້ເຂົ້າຮ່ວມ SNYC.

K ມາຮ່ວມກອງປະຊຸມສະໂມສອນເປັນເທື່ອທຳອິດຂອງລາວ. ເມື່ອລາວນັ່ງລົງຮ່ວມກັບຜູ້ອື່ນໃນສະໂມສອນ ເປັນເທື່ອທຳອິດ ລາວຮູ້ສຶກຕື່ນເຕັ້ນ ຍ້ອນວ່າລາວສາມາດອ່ານໄດ້ພຽງແຕ່ບາງຄຳສັບເທົ່ານັ້ນ.

ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກ ເວົ້າກ່ຽວກັບລະບົບການໃຫ້ດາວ ແລະ ຂຽນກ່ຽວກັບລາງວັນ ລະດັບ 1, 2 ແລະ 3 ໃສ່ໃນເຈ້ຍແຜ່ນໃຫຍ່ ເພື່ອໃຫ້ທຸກຄົນເບິ່ງ. K ບໍ່ສາມາດອ່ານວ່າຜູ້ອຳນວຍຄວາມສະດວກຂຽນຫຍັງ.

ຫຼັງຈາກນັ້ນ ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກ ບອກໃຫ້ແບ່ງເປັນກຸ່ມນ້ອຍ 4–6 ຄົນ ເພື່ອສົນທະນາກ່ຽວກັບລະບຽບຂອງສະໂມສອນ. K ຢ້ານວ່າ ໄວໜຸ່ມຜູ້ອື່ນອາດຈະບອກລາວໃຫ້ຂຽນບັນດາຄຳຕອບຕ່າງໆ.

ຫຼັງຈາກນັ້ນ ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກ ຢາຍແຜ່ນເຈ້ຍຂໍ້ມູນ (IS) ເຊິ່ງ K ບໍ່ສາມາດອ່ານໄດ້.

ຖ້າຫາກເຈົ້າເປັນໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ ຢູ່ໃນ SNYC, ເຈົ້າຈະຊ່ວຍ K ແນວໃດ?

## IS 12b: ຄຳຕອບຂອງການອ່ານ

*ຜູ້ອຳນວຍຄວາມສະດວກ ຄວນຮັກສາເອກະສານນີ້ໄວ້ ແລະ ບໍ່ຢາຍມັນ*

ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC:

- ບໍ່ຄວນສົນໃຈກັບຄວາມຈິງທີ່ວ່າ K ບໍ່ສາມາດອ່ານ
- ນັ່ງໃກ້ກັບ K
- ອ່ານເອກະສານ ເຈ້ຍແຜ່ນໃຫຍ່ອອກສຽງໃຫ້ K ຟັງ ຄ່ອຍໆ, ໃນຂະນະທີ່ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກຂຽນ
- ເຂົ້າຮ່ວມໃນການສົນທະນາກຸ່ມນ້ອຍກຸ່ມດຽວກັບ K ແລະ ອາສາສະໝັກຂຽນຄຳສະເໜີຂອງທຸກຄົນ
- ນັ່ງໃກ້ກັບ K ແລະ ອ່ານ IS ດັງໆ.

# ບົດຮຽນທີ 13: ວິທີຊ່ວຍເຫຼືອ ອຳນວຍຄວາມສະດວກ ການສົນທະນາກຸ່ມນ້ອຍ

## ຈຸດປະສົງ

ບັນດາຜູ້ເຂົ້າຮ່ວມຈະໄດ້ຮຽນຮູ້ກ່ຽວກັບ ວິທີອຳນວຍຄວາມສະດວກ ການສົນທະນາກຸ່ມນ້ອຍ

## ເວລາ

60 ນາທີ

## ອຸປະກອນ

- ສຳເນົາເອກະສານ IS 10a: ເກມອຸ່ນເຄື່ອງ ສຳລັບຜູ້ເຂົ້າຮ່ວມແຕ່ລະຄົນ
- ສຳເນົາ ປະມານ 5 ຊຸດຂອງເອກະສານລຸ່ມນີ້:
  - » 'IS 13a: ການສະແດງບົດບາດສົມມຸດ ໃນການສົນທະນາ' ຕັດເປັນບັດນ້ອຍ ສຳລັບແຕ່ລະບຸກຄົນ
  - » IS13b: ການອຳນວຍຄວາມສະດວກ ການສົນທະນາ' (ໜຶ່ງຊຸດ ສຳລັບແຕ່ລະກຸ່ມ)
- ປະໂຫຍກຄຳເວົ້າ ຈາກ IS 13a: ການສະແດງບົດບາດສົມມຸດ ໃນການສົນທະນາ ຄວນຕັດເປັນແຕ່ລະປະໂຫຍກຄຳເວົ້າ ກ່ອນເລີ່ມບົດຮຽນ.

## ຜູ້ເຂົ້າຮ່ວມ

ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC

## ຜູ້ອຳນວຍຄວາມສະດວກ

ອາດຈະແມ່ນ ພະນັກງານອົງການສຸພະນິມິດ ຫຼື ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ທີ່ໄດ້ຜ່ານ ການຝຶກອົບຮົມ ເອກະສານເຄື່ອງມືດັ່ງກ່າວນີ້ ແລະ ການຝຶກອົບຮົມຜູ້ອຳນວຍຄວາມສະດວກ

## ກິດຈະກຳອຸ່ນເຄື່ອງ

ອະທິບາຍວ່າ ພວກເຮົາຈະເລີ່ມຕົ້ນບົດຮຽນນີ້ດ້ວຍເກມອຸ່ນເຄື່ອງທີ່ເອີ້ນວ່າ 'ເກມໝາກບານບອກຊື່' - ແລະ ແມ່ນເກມທີ່ໄດ້ຫຼິ້ນແລ້ວໃນຕອນເລີ່ມຕົ້ນປະຊຸມໃນມື້ນີ້. ບອກໃຫ້ບັນດາຜູ້ເຂົ້າຮ່ວມ ເອົາສຳເນົາເອກະສານ 'IS 10a: ເກມອຸ່ນເຄື່ອງ' ອອກມາ

ເປີດໄປຫາເກມທີ່ຊື່ວ່າ 'ເກມໝາກບານບອກຊື່'.

ປະຕິບັດຕາມຄຳແນະນຳ ເພື່ອຫຼິ້ນ 'ເກມໝາກບານບອກຊື່' ໜຶ່ງຮອບ ກັບບັນດາຜູ້ເຂົ້າຮ່ວມ. ຫຼັງຈາກນັ້ນ ບອກໃຫ້ ບັນດາຜູ້ເຂົ້າຮ່ວມໃຫ້ ອາສາສະໝັກ ອຳນວຍຄວາມສະດວກການຫຼິ້ນເກມ. ເຕືອນພວກເຂົາໃຫ້ນຳໃຊ້ ທັກສະການນຳສະເໜີ ທີ່ພວກເຂົາໄດ້ຮຽນກ່ອນໜ້ານີ້. ພະຍາຍາມເລືອກເອົາອາສາສະໝັກ ຜູ້ທີ່ບໍ່ເຄີຍຖືກຝຶກອົບຮົມ ອຳນວຍຄວາມສະດວກ ເກມອຸ່ນເຄື່ອງ ໃນບົດຮຽນໃດເລີຍ.

## ຄຳແນະນຳ: ທັກສະການອຳນວຍຄວາມສະດວກ

ບາດນີ້ ອະທິບາຍວ່າ ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ຈະບອກໃຫ້ບັນດາຜູ້ເຂົ້າຮ່ວມ ແບ່ງເປັນກຸ່ມນ້ອຍເພື່ອສົນທະນາ ຫຼື ຕອບຄຳຖາມກ່ຽວກັບບັນຫາພິເສດສະເພາະຢູ່ເລື້ອຍໆ. ເມື່ອສິ່ງດັ່ງກ່າວນີ້ເກີດຂຶ້ນ, ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ຈະຊ່ວຍອຳນວຍຄວາມສະດວກການສົນທະນາ. ບອກບັນດາຜູ້ເຂົ້າຮ່ວມວ່າ ການອຳນວຍຄວາມສະດວກ ການສົນທະນາ ແມ່ນແຕກຕ່າງຈາກການນຳພາຫຼິ້ນເກມຫຼາຍ. ເວລາທີ່ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ນຳພາກິດຈະກຳອຸ່ນເຄື່ອງ, ພວກເຂົາໃຫ້ຄຳແນະນຳ ແລະ ບອກຜູ້ອື່ນກ່ຽວກັບສິ່ງທີ່ຕ້ອງເຮັດ. ແຕ່ວ່າ ເວລາພວກເຂົາອຳນວຍຄວາມສະດວກ ການສົນທະນາ, ພວກເຂົາຈະຊ່ວຍເຫຼືອບັນດາຜູ້ເຂົ້າຮ່ວມ ແລກປ່ຽນແນວຄວາມຄິດຂອງພວກເຂົາ ແລະ ຈະຮັບປະກັນວ່າ ຜູ້ເຂົ້າຮ່ວມທຸກຄົນ ມີໂອກາດ ມີໂອກາດໄດ້ເວົ້າ. ເວລາພວກເຂົາອຳນວຍຄວາມສະດວກການສົນທະນາ, ພວກເຂົາຄວນຖາມ ຫຼາຍໆ ຄຳຖາມ.

ອະທິບາຍວ່າ ມັນມີຫຼາຍເຕັກນິກ ທີ່ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ສາມາດນຳໃຊ້ເພື່ອເຮັດໃຫ້ຜູ້ອື່ນເວົ້າ. ອ່ານບັນດາ ເຕັກນິກເຫຼົ່ານີ້ ດັງໆ ໃຫ້ບັນດາຜູ້ເຂົ້າຮ່ວມຟັງ ແລະ ຖາມວ່າ ພວກເຂົາມີຄຳຖາມຫຼືບໍ່:

**ວິທີອຳນວຍຄວາມສະດວກການສົນທະນາ**

- ລວມເອົາບັນດາຜູ້ເຂົ້າຮ່ວມທີ່ມິດງຽບ. ສັງເກດເບິ່ງກຸ່ມ. ຖ້າຫາກຜູ້ເຂົ້າຮ່ວມຈຳນວນໃດໜຶ່ງບໍ່ເວົ້າ, ຖາມພວກເຂົາຢ່າງສຸພາບກ່ຽວກັບຄວາມຄິດເຫັນຂອງລາວ ຕໍ່ກັບຫົວຂໍ້ດັ່ງກ່າວນີ້ຫ້າມບັງຄັບ ໃຫ້ພວກເຂົາເວົ້າ, ແຕ່ວ່າເຊື້ອເຊີນໃຫ້ພວກເຂົາເວົ້າ ຖ້າພວກເຂົາຕ້ອງການ.
- ຈຳກັດຜູ້ທີ່ເວົ້າຫຼາຍ. ຖ້າຫາກຜູ້ເຂົ້າຮ່ວມຜູ້ໃດຜູ້ໜຶ່ງເວົ້າຕະຫຼອດເວລາ, ສະເໜີ ແບບສຸພາບກັບລາວວ່າ ໃຫ້ໂອກາດຜູ້ອື່ນແດ່. ຍົກຕົວຢ່າງເຊັ່ນ: ຖ້າຈົບກວ່າຜູ້ເຂົ້າຮ່ວມຜູ້ດັ່ງກ່າວເວົ້າສຸດປະໂຫຍກ ແລະ ເວົ້າວ່າ, 'ຂອບໃຈ ສຳລັບສິ່ງດັ່ງກ່າວ. ຂໍໂທດທີ່ຕ້ອງຢຸດເຈົ້າໄວ້ສ່ຳນີ້, ແຕ່ວ່າເຮົາມີເວລາຈຳກັດ. ຂ້ອຍຂໍຖາມແດ່ ມີໃຜອີກບໍ່ທີ່ມີຄຳຄິດເຫັນກ່ຽວກັບຫົວຂໍ້ດັ່ງກ່າວນີ້?'
- ຈັດລຽງຄຳເວົ້າໃໝ່. ເຈົ້າສາມາດເຮັດໃຫ້ການສົນທະນາ ສືບເນື່ອງ ດ້ວຍການຈັດລຽງຄຳເວົ້າ ສິ່ງທີ່ໃຜຜູ້ໜຶ່ງຫາກໍ່ເວົ້າ ຄືນໃໝ່ ແລະ ຖາມວ່າ ມີໃຜເຫັນດີ ຫຼື ບໍ່ເຫັນດີບໍ່. ຕົວຢ່າງເຊັ່ນ: 'ລາວໄດ້ເວົ້າວ່າ ____________. ເຈົ້າເຫັນດີບໍ່?'
- ຟັງ. ຖ້າເຈົ້າຕັ້ງໃຈຟັງສິ່ງທີ່ໄວໜຸ່ມເວົ້າແທ້ໆ, ພວກເຂົາຈະຢາກເວົ້າຫຼາຍຂຶ້ນອີກ. ເຈົ້າຍັງສາມາດຄິດຫາຄຳຖາມທີ່ມີຄວາມກ່ຽວຂ້ອງ ທີ່ສາມາດຊ່ວຍການສົນທະນາ.
- ຖາມຫຼາຍໆຄຳຖາມ. ຄຳຖາມດັ່ງກ່າວເຫຼົ່ານີ້ ຄວນເປັນຄຳຖາມກ່ຽວກັບສິ່ງທີ່ໄວໜຸ່ມຄິດ ແລະ ເຊື່ອ, ບໍ່ແມ່ນຄຳຖາມທີ່ພຽງເພື່ອທົດສອບຄວາມຮູ້ ກ່ຽວກັບຄວາມຈິງເທົ່ານັ້ນ. ຕົວຢ່າງຂອງບັນດາຄຳຖາມກ່ຽວກັບສິ່ງທີ່ໄວໜຸ່ມຄິດ ແລະ ເຊື່ອ ປະກອບດ້ວຍ:
  - » 'ເຈົ້າຄິດວ່າ ເຫດຜົນໃດແດ່ ທີ່ເຮັດໃຫ້ໄວໜຸ່ມອອກໂຮງຮຽນ?'
  - » 'ເຈົ້າຄິດວ່າ ເຈົ້າສາມາດໃຊ້ບັນຊີກວດກາເຫຼົ່ານີ້ ໃນຊີວິດສ່ວນຕົວຂອງເຈົ້າບໍ່? ໃຊ້ຍ້ອນຫຍັງ ຫຼື ບໍ່ໃຊ້ຍ້ອນຫຍັງ?'
- ຄຳຖາມກ່ຽວກັບຄວາມຮູ້ແມ່ນ:

» 'ບອກຊື່ປະເທດໃດໜຶ່ງທີ່ເປັນປະເທດປາຍທາງຂອງການຄ້າມະນຸດ.'

- ຢູ່ໃນເຄື່ອງມື ການນຳທາງແບບສະຫຼາດ (SNT) ພວກເຮົາໃຊ້ຫຼາຍຄຳຖາມ ກ່ຽວກັບຄວາມຄິດ ແລະ ຄວາມຄິດເຫັນ.

## ກິດຈະກຳ: ການອຳນວຍຄວາມສະດວກການສົນທະນາ

ແບ່ງບັນດາຜູ້ເຂົ້າຮ່ວມເປັນກຸ່ມລະ 8 ຄົນ. ຢາຍບັດຈາກ 'IS 13a: ການສະແດງບົດບາດສົມມຸດ ໃນການສົນທະນາ' ໃຫ້ຜູ້ເຂົ້າຮ່ວມແຕ່ລະຄົນ. ຫຼັງຈາກນັ້ນ ຢາຍສຳເນົາເອກະສານ 'IS 13b: ການອຳນວຍຄວາມສະດວກການສົນທະນາ' ໃຫ້ແຕ່ລະກຸ່ມ. ອະທິບາຍວ່າ ພວກເຈົ້າຈະໄດ້ ສະແດງບົດບາດສົມມຸດ ກ່ຽວກັບການສົນທະນາ ແລະ ຜູ້ເຂົ້າຮ່ວມແຕ່ລະຄົນຄວນສະແດງຕາມ ຄຳແນະນຳ ຢູ່ໃນບັດ ທີ່ຕົນເອງໄດ້ຮັບ. ອະທິບາຍໃຫ້ກຸ່ມຟັງວ່າ ບາງຄົນ ອາດຈະຖືກແນະນຳໃຫ້ບໍ່ສຸພາບແດ່ໜ້ອຍໜຶ່ງ ແລະ ທຸກຄົນຕ້ອງຈື່ໄວ້ວ່າພວກເຂົາພຽງແຕ່ສະແດງເທົ່ານັ້ນ. ຜູ້ທີ່ໄດ້ຮັບບັດ ບົດບາດຜູ້ອຳນວຍຄວາມສະດວກ ຄວນພະຍາຍາມໃຊ້ເຕັກນິກທີ່ໃຫ້ຢູ່ໃນ 'IS 13b: ການອຳນວຍຄວາມສະດວກການສົນທະນາ'.

ຜູ້ອຳນວຍຄວາມສະດວກຄວນເລືອກ ໜຶ່ງໃນຫົວຂໍ້ດັ່ງຕໍ່ໄປນີ້ ເພື່ອສົນທະນາ:

- ຮູບເງົາທີ່ໄດ້ຮັບຄວາມນິຍົມ
- ເພງທີ່ໄດ້ຮັບຄວາມນິຍົມ
- ອາຫານຕ່າງປະເທດ
- ນັກກິລາທີ່ດັງ.

ອະທິບາຍວ່າ ແນວຄວາມຄິດ ແມ່ນເພື່ອສົນທະນາກ່ຽວກັບຫົວຂໍ້ ທີ່ບໍ່ກ່ຽວຂ້ອງກັບການຄ້າມະນຸດ, ເພື່ອວ່າບັນດາຜູ້ເຂົ້າຮ່ວມຈະສາມາດສຸມໃສ່ທັກສະການອຳນວຍຄວາມສະດວກ.

ອະທິບາຍວ່າ ກຸ່ມຄວນສົນທະນາ ຫົວຂໍ້ ໜຶ່ງ ຕໍ່ 5 ນາທີ. ເມື່ອພວກເຂົາສຳເລັດແລ້ວ, ແຕ່ລະບຸກຄົນ ເອົາບັດໃສ່ໃນຖົງ, ປົນກັນ ແລະ ເລືອກບັດໃໝ່. (ຖ້າຫາກ ຜູ້ໃດຜູ້ໜຶ່ງໄດ້ບັດ ຜູ້ອຳນວຍຄວາມສະດວກ ສອງເທື່ອ, ລາວຄວນເອົາໃສ່ຖົງຄືນ ແລະ ເລືອກເອົາບັດໃໝ່.)
ກຸ່ມຄວນ ລິ້ມຄືນກິດຈະກຳດັ່ງກ່າວນີ້ ສາມ ຫຼື ສີ່ເທື່ອ ເພື່ອເຮັດໃຫ້ຜູ້ເຂົ້າຮ່ວມ ມີໂອກາດໄດ້ສະແດງບົດບາດອື່ນ.

ເມື່ອພວກເຂົາສຳເລັດກິດຈະກຳ, ບອກພວກເຂົາໃຫ້ລວມເປັນກຸ່ມໃຫຍ່ກຸ່ມດຽວ. ຖາມວ່າ:

- ມີຄວາມຮູ້ສຶກແນວໃດໃນການເຮັດກິດຈະກຳດັ່ງກ່າວນີ້?
- ທັກສະໃດທີ່ງ່າຍສຳລັບການນຳໃຊ້?
- ທັກສະໃດຍາກ?
- ເປັນຫຍັງມັນຈຶ່ງຍາກ?
- ເຈົ້າຮູ້ສຶກວ່າເຈົ້າໄດ້ປັບປຸງບໍ່ ເມື່ອໄດ້ຝຶກຊ້ອມຫຼາຍຂຶ້ນ?
- ມີໃຜທີ່ໄດ້ພັດທະນາວິທີການສ່ວນຕົວຂອງຕົນບໍ່ ທີ່ເຮັດໃຫ້ມັນງ່າຍຂຶ້ນບໍ່? ເຈົ້າຢາກຈະແບ່ງປັນແລກປ່ຽນກັບກຸ່ມບໍ່?

## ສະຫຼຸບສັງລວມບົດຮຽນ

- ການອຳນວຍຄວາມສະດວກ ການສົນທະນາ ແມ່ນ ແຕກຕ່າງຈາກການນຳພາການຫຼິ້ນເກມອຸ່ນເຄື່ອງ. ຢູ່ໃນການສົນທະນາ ຜູ້ອຳນວຍຄວາມສະດວກ ຖາມຫຼາຍ ແລະ ຟັງຫຼາຍ.
- ເພື່ອອຳນວຍຄວາມສະດວກ ການສົນທະນາ ຕ້ອງ:
  - » ລວມເອົາບັນດາຜູ້ເຂົ້າຮ່ວມທີ່ມິດງຽບ
  - » ຈຳກັດຜູ້ທີ່ເວົ້າຫຼາຍ
  - » ການຈັດລຽງຄຳເວົ້າໃໝ່.
  - » ຟັງ
  - » ຖາມຫຼາຍໆຄຳຖາມກ່ຽວກັບຄຳຄິດເຫັນຂອງໄວໜຸ່ມ

## IS 13a: ການສະແດງບົດບາດສົມມຸດການສົນທະນາ

*(ຈົ່ງເອົາໃຈໃສ່ວ່າ ບາງບັດ ມີສອງເທື່ອ)*

ເຈົ້າເປັນຜູ້ອຳນວຍຄວາມສະດວກ.

ເຈົ້າເວົ້າຫຼາຍ, ຄວບຄຸມການສົນທະນາ ຈົນກະທັ້ງ ຜູ້ອຳນວຍຄວາມສະດວກບອກເຈົ້າຢ່າງສຸພາບວ່າໃຫ້ຢຸດ. ຫຼັງຈາກນັ້ນກໍ່ຢຸດ. ເຮັດສິ່ງນີ້ພຽງຄັ້ງດຽວເທົ່ານັ້ນ.

ເຈົ້າອາຍ. ບໍ່ເວົ້າ ນອກຈາກວ່າເຈົ້າຖືກຖາມ.

ເຈົ້າອາຍ. ບໍ່ເວົ້າ ນອກຈາກວ່າເຈົ້າຖືກຖາມ.

ເຈົ້າລົມກັບຄົນຢູ່ທາງຂ້າງຕະຫຼອດເວລາ

ເຈົ້າສະເໜີຄວາມເຫັນ ທີ່ຄັດກັບຄວາມເຊື່ອຂອງອົງການສຸພະນິມິດ. ເຮັດສິ່ງນີ້ພຽງຄັ້ງດຽວເທົ່ານັ້ນ.

ເຈົ້າມີສ່ວນຮ່ວມກັບການສົນທະນາແບບປົກກະຕິ.

ເຈົ້າມີສ່ວນຮ່ວມກັບການສົນທະນາແບບປົກກະຕິ.

## IS 13b: ການອຳນວຍຄວາມສະດວກການສົນທະນາ

**ວິທີອຳນວຍຄວາມສະດວກການສົນທະນາ**

- **ລວມເອົາບັນດາຜູ້ເຂົ້າຮ່ວມທີ່ມິດງຽບ.** ສັງເກດເບິ່ງກຸ່ມ. ຖ້າຫາກຜູ້ເຂົ້າຮ່ວມຈຳນວນໃດໜຶ່ງບໍ່ເວົ້າ, ຖາມພວກເຂົາຢ່າງສຸພາບກ່ຽວກັບຄວາມຄິດເຫັນຂອງລາວ ຕໍ່ກັບຫົວຂໍ້ດັ່ງກ່າວນີ້ຫ້າມບັງຄັບໃຫ້ພວກເຂົາເວົ້າ, ແຕ່ວ່າເຊື້ອເຊີນໃຫ້ພວກເຂົາເວົ້າ ຖ້າພວກເຂົາຕ້ອງການ.
- **ຈຳກັດຜູ້ທີ່ເວົ້າຫຼາຍ**. ຖ້າຫາກຜູ້ເຂົ້າຮ່ວມຜູ້ໃດຜູ້ໜຶ່ງເວົ້າຕະຫຼອດເວລາ, ສະເໜີ ແບບສຸພາບກັບລາວວ່າ ໃຫ້ໂອກາດຜູ້ອື່ນແດ່. ຍົກຕົວຢ່າງເຊັ່ນ: ຖ້າຈົນກວ່າຜູ້ເຂົ້າຮ່ວມຜູ້ດັ່ງກ່າວເວົ້າສຸດປະໂຫຍກ ແລະ ເວົ້າວ່າ, **'ຂອບໃຈ ສຳລັບສິ່ງດັ່ງກ່າວ. ຂໍໂທດທີ່ຕ້ອງຢຸດເຈົ້າໄວ້ສ່ຳນີ້, ແຕ່ວ່າເຮົາມີເວລາຈຳກັດ. ຂ້ອຍຂໍຖາມແດ່ ມີໃຜອີກບໍ່ທີ່ມີຄຳຄິດເຫັນກ່ຽວກັບຫົວຂໍ້ດັ່ງກ່າວນີ້?'**
- **ຈັດລຽງຄຳເວົ້າໃໝ່.** ເຈົ້າສາມາດເຮັດໃຫ້ການສົນທະນາ ສືບເນື່ອງ ດ້ວຍການຈັດລຽງຄຳເວົ້າ ສິ່ງທີ່ໃຜຜູ້ໜຶ່ງຫາກໍ່ເວົ້າ ຄືນໃໝ່ ແລະ ຖາມວ່າ ມີໃຜເຫັນດີ ຫຼື ບໍ່ເຫັນດີບໍ່. ຕົວຢ່າງເຊັ່ນ: **'ລາວໄດ້ເວົ້າວ່າ ______________. ເຈົ້າເຫັນດີບໍ່?'**
- **ຟັງ.** ຖ້າເຈົ້າຕັ້ງໃຈຟັງສິ່ງທີ່ໄວໜຸ່ມເວົ້າແທ້ໆ, ພວກເຂົາຈະຢາກເວົ້າຫຼາຍຂຶ້ນອີກ. ເຈົ້າຍັງສາມາດຄິດຫາຄຳຖາມທີ່ມີຄວາມກ່ຽວຂ້ອງ ທີ່ສາມາດຊ່ວຍການສົນທະນາ.
- **ຖາມຫຼາຍໆຄຳຖາມ**. ຄຳຖາມດັ່ງກ່າວເຫຼົ່ານີ້ ຄວນເປັນ**ຄຳຖາມກ່ຽວກັບສິ່ງທີ່ໄວໜຸ່ມຄິດ ແລະ ເຊື່ອ,** ບໍ່ແມ່ນຄຳຖາມທີ່ພຽງເພື່ອທົດສອບຄວາມຮູ້ ກ່ຽວກັບຄວາມຈິງເທົ່ານັ້ນ. ຕົວຢ່າງຂອງບັນດາຄຳຖາມກ່ຽວກັບສິ່ງທີ່ໄວໜຸ່ມຄິດ ແລະ ເຊື່ອ ປະກອບດ້ວຍ:

» 'ເຈົ້າຄິດວ່າ ເຫດຜົນໃດແດ່ ທີ່ເຮັດໃຫ້ໄວໜຸ່ມອອກໂຮງຮຽນ?'

» 'ເຈົ້າຄິດວ່າ ເຈົ້າສາມາດໃຊ້ບັນຊີກວດກາເຫຼົ່ານີ້ ໃນຊີວິດສ່ວນຕົວຂອງເຈົ້າບໍ່? ໃຊ້ຍ້ອນຫຍັງ ຫຼື ບໍ່ໃຊ້ຍ້ອນຫຍັງ?'

ຄຳຖາມກ່ຽວກັບຄວາມຮູ້ແມ່ນ:

- » 'ບອກຊື່ປະເທດໃດໜຶ່ງທີ່ເປັນປະເທດປາຍທາງຂອງການຄ້າມະນຸດ.'

  »

# ບົດຮຽນທີ 14: ວິທີສ້າງສາຍພົວພັນ ລະຫວ່າງຜູ້ເຂົ້າຮ່ວມສະໂມສອນ ແລະ SNYC

## ຈຸດປະສົງ

ບັນດາຜູ້ເຂົ້າຮ່ວມຈະຮຽນຮູ້ກ່ຽວກັບວິທີສົ່ງເສີມສາຍພົວພັນລະຫວ່າງຜູ້ເຂົ້າຮ່ວມສະໂມສອນ ແລະ SNYC

## ເວລາ

60 ນາທີ

## ອຸປະກອນ

- ຜ້າແພ ໜຶ່ງຜືນ
- ໃບຢັ້ງຢືນການຝຶກອົບຮົມ ຜູ້ອຳນວຍຄວາມສະດວກຂອງ SNYC ສຳລັບຜູ້ເຂົ້າຮ່ວມແຕ່ລະຄົນ
- ໝາກບານ ໜຶ່ງໜ່ວຍ
- ສຳເນົາເອກະສານ 'IS 10a: ເກມອຸ່ນເຄື່ອງ'
- ສຳເນົາເອກະສານ 'IS 14a: ຄຳຖາມ ເກມໝາກບານທວນຄວາມຈຳ ຊຸດທີ 2'

## ຜູ້ເຂົ້າຮ່ວມ

ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC

## ຜູ້ອຳນວຍຄວາມສະດວກ

ອາດຈະແມ່ນ ພະນັກງານອົງການສຸພະນິມິດ ຫຼື ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ທີ່ໄດ້ຜ່ານ ການຝຶກອົບຮົມ ເອກະສານເຄື່ອງມືດັ່ງກ່າວນີ້ ແລະ ການຝຶກອົບຮົມຜູ້ອຳນວຍຄວາມສະດວກ

## ກິດຈະກຳອຸ່ນເຄື່ອງ

ອະທິບາຍວ່າ ບົດຮຽນນີ້ ຈະເລີ່ມຕົ້ນດ້ວຍເກມອຸ່ນເຄື່ອງອີກເກມໜຶ່ງ. ເກມດັ່ງກ່າວນີ້ ເອີ້ນວ່າ 'ເກມຜ້າແພ ຫຼື ຜ້າພັນຄໍ'. ມັນເປັນເກມທີ່ມ່ວນ ທີ່ສ້າງຄວາມເປັນເອກະພາບຂອງກຸ່ມ ແລະ ຊ່ວຍໃຫ້ຜູ້ຄົນຮຽນຮູ້ເຊິ່ງກັນ ແລະ ກັນຫຼາຍຂຶ້ນ.

ບອກໃຫ້ບັນດາຜູ້ເຂົ້າຮ່ວມ ເອົາເອກະສານ 'IS 10a: ເກມອຸ່ນເຄື່ອງ' ອອກມາ.

ປະຕິບັດຕາມຄຳແນະນຳເພື່ອຫຼິ້ນ 'ເກມຜ້າແພ ຫຼື ຜ້າພັນຄໍ' ໜຶ່ງຮອບ ກັບບັນດາຜູ້ເຂົ້າຮ່ວມ. ຫຼັງຈາກນັ້ນ ບອກໃຫ້ ບັນດາຜູ້ເຂົ້າຮ່ວມໃຫ້ ອາສາສະໝັກ ອຳນວຍຄວາມສະດວກການຫຼິ້ນເກມ. ພະຍາຍາມເລືອກເອົາອາສາສະໝັກ ຜູ້ທີ່ບໍ່ເຄີຍຖືກຢຽບ ອຳນວຍຄວາມສະດວກ ເກມອຸ່ນເຄື່ອງ ໃນບົດຮຽນໃດເລີຍ.

## ຄຳແນະນຳ: ການສ້າງສາຍພົວພັນ

### ການສ້າງສາຍພົວພັນ

ບອກໃຫ້ບັນດາຜູ້ເຂົ້າຮ່ວມ ຫຼັບຕາປະມານ ໜຶ່ງນາທີ ແລະ ຄິດຫາຄູສອນທີ່ພວກເຂົາມັກທີ່ສຸດ. ບອກພວກເຂົາໃຫ້ຄິດກ່ຽວກັບ ລັກສະນະພິເສດສ່ວນຕົວຂອງຄູຜູ້ນັ້ນ ແລະ ສິ່ງໃດທີ່ເຮັດໃຫ້ ພວກເຂົາມັກຄູສອນຜູ້ດັ່ງກ່າວນັ້ນ. ບາດນີ້ ຖາມວ່າ ບັນດາຜູ້ເຂົ້າຮ່ວມມີສາຍພົວພັນທີ່ດີກັບຄູສອນຜູ້ດັ່ງກ່າວນັ້ນບໍ່ ແລະ ແມ່ນຫຍັງທີ່ຊ່ວຍພວກເຂົາໃຫ້ຮຽນຮູ້ຈາກຄູສອນຄົນນັ້ນ. ອະທິບາຍວ່າ ການສອນທີ່ດີ ແມ່ນກ່ຽວຂ້ອງ ຫຼາຍກວ່າການຮູ້ພຽງແຕ່ຫົວຂໍ້ເທົ່ານັ້ນ; ມັນກ່ຽວຂ້ອງກັບການສ້າງສາຍພົວພັນ. ສິ່ງດັ່ງກ່າວນີ້ ໝາຍຄວາມວ່າ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ຄວນພະຍາຍາມສ້າງສາຍພົວພັນ ກັບບັນດາຜູ້ເຂົ້າຮ່ວມ. ພວກເຂົາຄວນພະຍາຍາມ ຄົ້ນຫາບາງສິ່ງບາງຢ່າງທີ່ພວກເຂົາມັກ ກ່ຽວກັບສະມາຊິກແຕ່ລະຄົນ ຂອງ SNYC. ບັນດາຜູ້ອຳນວຍຄວາມສະດວກ ຄວນພະຍາຍາມ ຮຽນຮູ້ກ່ຽວກັບຄອບຄົວຂອງໄວໜຸ່ມຜູ້ອື່ນໆ, ຈື່ຊື່ຂອງໝູ່ຂອງໄວໜຸ່ມ ແລະ ຖາມກ່ຽວກັບກິດຈະກຳຍາມຫວ່າງຂອງພວກເຂົາ.

### *ຕິດຕາມ ບັນດາຜູ້ເຂົ້າຮ່ວມຂອງ SNYC*

ອະທິບາຍວ່າວຽກໜຶ່ງອີກຂອງ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ແມ່ນຕິດຕາມກ່ຽວກັບໄວໜຸ່ມຜູ້ອື່ນໆ. ຍົກຕົວຢ່າງ, ຖ້າຫາກ ສະມາຊິກຜູ້ໃດຜູ້ໜຶ່ງ ຂອງ SNYC ຢຸດມາສະໂມສອນ, ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ຄວນຖາມ ໝູ່ຂອງໄວໜຸ່ມຜູ້ດັ່ງກ່າວນັ້ນ ວ່າ ລາວເປັນຫຍັງ ຫຼື ບໍ່.

ບອກບັນດາຜູ້ເຂົ້າຮ່ວມວ່າ ຖ້າຫາກສະມາຊິກຜູ້ໃດຜູ້ໜຶ່ງ ຂອງ SNYC ມີບັນຫາ ຢູ່ທາງບ້ານ, ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ຄວນບອກ ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ກ່ຽວກັບເລື່ອງດັ່ງກ່າວນີ້.

ອະທິບາຍວ່າ ຖ້າຫາກ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ຮູ້ວ່າ ສະມາຊິກຜູ້ໃດຜູ້ໜຶ່ງຂອງ SNYC ກຳລັງຄິດກ່ຽວກັບການເຄື່ອນຍ້າຍ ຫຼື ເລີ່ມເຮັດວຽກໃດໜຶ່ງ, ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ຄວນບອກ ຜູ້ໃຫຍ່ ທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ກ່ຽວກັບເລື່ອງດັ່ງກ່າວ.

### *ເຮັດໃຫ້ປອດໄພ*

ອະທິບາຍວ່າ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ຄວນຕິດຕາມ ບັນດາຜູ້ເຂົ້າຮ່ວມ SNYC ຜູ້ອື່ນໆ ແລະ ພະຍາຍາມເປັນໝູ່ທີ່ດີກັບພວກເຂົາ. ແຕ່ວ່າ ມັນກໍ່ມີຄວາມສຳຄັນທີ່ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ຕ້ອງຄິດກ່ຽວກັບ ຄວາມປອດໄພຂອງຕົນເອງກ່ອນ. ບອກບັນດາຜູ້ເຂົ້າຮ່ວມວ່າ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ ບໍ່ຄວນໄປຢາມເຮືອນຂອງ ຜູ້ເຂົ້າຮ່ວມ SNYC ຜູ້ອື່ນໆ (ນອກຈາກວ່າພວກເຂົາເປັນໝູ່ກັນ ກ່ອນທີ່ຈະເລີ່ມ SNYC ແລະ ພວກເຂົາຮູ້ວ່າ ເຮືອນດັ່ງກ່າວເປັນສະຖານທີ່ ທີ່ປອດໄພ). ຍົກຕົວຢ່າງ, ຖ້າຫາກ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ໄດ້ຍິນວ່າ ໄວໜຸ່ມຜູ້ອື່ນ ຖືກຕີໂດຍພໍ່ຂອງລາວ, ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ບໍ່ຄວນໄປຢ້ຽມຢາມເຮືອນຂອງບຸກຄົນດັ່ງກ່າວ ແຕ່ວ່າຄວນບອກ ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC.

### *ຮູ້ຈັກຄວາມຈຳກັດຂອງເຈົ້າ*

ອະທິບາຍວ່າ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ຄວນຮູ້ຄວາມຈຳກັດຂອງພວກເຂົາເອງ. ສິ່ງດັ່ງກ່າວນີ້ ໝາຍຄວາມວ່າ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ຄວນຮັບຮູ້ສະພາບ ທີ່ພວກເຂົາບໍ່ສາມາດແກ້ໄຂ. ບອກບັນດາຜູ້ເຂົ້າຮ່ວມວ່າ ມັນມີສະຖານະການທີ່ວ່າ ວິທີທີ່ດີທີ່ສຸດສຳລັບ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກ ຂອງ SNYC ທີ່ຈະຊ່ວຍສະມາຊິກສະໂມສອນ ຜູ້ອື່ນ ແມ່ນດ້ວຍການບອກຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກ ຂອງ SNYC. ບອກບັນດາຜູ້ເຂົ້າຮ່ວມວ່າ ຕໍ່ໄປນີ້ແມ່ນລາຍການສະຖານະການທີ່ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ຄວນລາຍງານ ຜູ້ໃຫຍ່ ທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ທັນທີ. ອ່ານ ລາຍການດັ່ງລຸ່ມນີ້ ດັ່ງໆ:

- ຖ້າຫາກສະມາຊິກຂອງ SNYC ເປັນໄຂ້
- ຖ້າຫາກສະມາຊິກຂອງ SNYC ບໍ່ມີເຮືອນຢູ່
- ຖ້າຫາກສະມາຊິກຂອງ SNYC ຖືກຕີ ຫຼື ກຳລັງຖືກຕີ ໂດຍພໍ່ ຫຼື ແມ່.
- ຖ້າຫາກສະມາຊິກຂອງ SNYC ກຳລັງພິຈາລະນາວ່າ ຈະເຮັດວຽກ ຫຼື ເຄື່ອນຍ້າຍ
- ຖ້າຫາກສະມາຊິກຂອງ SNYC ໃຊ້ຢາເສບຕິດ.

ອະທິບາຍວ່າ ວຽກອີກອັນໜຶ່ງຂອງ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ແມ່ນເພື່ອ ຊ່ວຍຜູ້ໃຫຍ່ ທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ໃນການກະກຽມບົດຮຽນ. ຜູ້ໃຫຍ່ ທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ອາດຈະບອກ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ໃຫ້ຊ່ວຍບາງວຽກ ເຊັ່ນ ຕັດອຸປະກອນອອກ ຫຼື ກະກຽມ ຫ້ອງຂອງ SNYC ສຳລັບບົດຮຽນ. ແຕ່ເຖິງແນວໃດກໍ່ຕາມ, ໃຫ້ອະທິບາຍວ່າ ຜູ້ໃຫຍ່ ບໍ່ຄວນ ຮຽກຮ້ອງຫຼາຍເກີນໄປ ຈາກໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC. ບອກບັນດາຜູ້ເຂົ້າຮ່ວມວ່າ:

- ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ບໍ່ຄວນຖືກຮຽກຮ້ອງ ໃຫ້ເຮັດວຽກທີ່ ລົບກວນການຮຽນຂອງພວກເຂົາ.
- ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ບໍ່ຄວນຖືກຮຽກຮ້ອງໃຫ້ເຮັດວຽກທີ່ ອາດຈະເຮັດໃຫ້ພວກເຂົາຢູ່ໃນສະຖານທີ່ ທີ່ອັນຕະລາຍ, ຍົກຕົວຢ່າງ, ໄປເຮືອນໃກ້ຄຽງ ທີ່ພວກເຂົາບໍ່ຮູ້ຈັກ ເພື່ອອັດເອກະສານ.

ອະທິບາຍວ່າ ອີງການສຸພະນິມິດ ມີນະໂຍບາຍການປົກປ້ອງເດັກ ເຊິ່ງກ່າວໄວ້ວ່າ ໄວໜຸ່ມ ບໍ່ຄວນຢູ່ຄົນດຽວຕາມລຳພັງກັບຜູ້ໃຫຍ່ທີ່ຍັງໂສດ. ສິ່ງດັ່ງກ່າວນີ້ ໝາຍຄວາມວ່າ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ບໍ່ຄວນຖືກຮຽກຮ້ອງໃຫ້ ກະກຽມ ບົດຮຽນຂອງ SNYC ຕາມລຳພັງກັບ ຄູສອນ.

## ກິດຈະກຳ: ເກມໝາກບານທວນຄວາມຈຳ

ອະທິບາຍວ່າ ຕໍ່ໄປນີ້ ກຸ່ມຈະໄດ້ຫຼິ້ນ 'ເກມໝາກບານທວນຄວາມຈຳ'. ບອກໃຫ້ບັນດາຜູ້ເຂົ້າຮ່ວມ ເອົາສຳເນົາເອກະສານ 'IS 10a: ເກມອຸ່ນເຄື່ອງ' ອອກມາ ແລະ ເປີດໄປຫາໜ້າທີ່ຊື່ວ່າ, 'ເກມໝາກບານທວນຄວາມຈຳ' ອີກ ເພື່ອຊ່ວຍໃຫ້ພວກເຂົາຈື່ໄດ້ສິ່ງທີ່ ພວກເຂົາໄດ້ຮຽນ. ນຳພາກຸ່ມຫຼິ້ນເກມ ໂດຍປະຕິບັດຕາມຄຳແນະນຳ. ໃຊ້ຄຳຖາມຈາກ 'IS 14a: ຄຳຖາມ ເກມໝາກບານທວນຄວາມຈຳ ຊຸດທີ 2', ຢູ່ດ້ານລຸ່ມ.

ພາຍຫຼັງທີ່ ບັນດາຜູ້ເຂົ້າຮ່ວມຕອບໄດ້ປະມານ 5 ຄຳຖາມ, ຖາມຫາ ອາສາສະໝັກໜຶ່ງຄົນ ເພື່ອເຮັດໜ້າທີ່ຜູ້ອຳນວຍຄວາມສະດວກ. ໃຫ້ອາສາສະໝັກ ນຳພາ ປະມານ ສອງ ສາມ ຄຳຖາມ ຫຼັງຈາກນັ້ນໃຫ້ປ່ຽນ ເພື່ອໃຫ້ຜູ້ອື່ນ ນຳພາ. ລື້ມຄືນ ຈົນກະທັ້ງ ໄດ້ຕອບໝົດທຸກຄຳຖາມ.

### ສະຫຼຸບສັງລວມບົດຮຽນ

- ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ຄວນຕິດຕາມ ບັນດາຜູ້ເຂົ້າຮ່ວມ SNYC ຜູ້ອື່ນໆ
- ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ຄວນມີຄວາມປອດໄພ ແລະ ບໍ່ຄວນໄປຢາມເຮືອນຂອງ ຜູ້ເຂົ້າຮ່ວມຜູ້ອື່ນໆ
- ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ຄວນບອກ ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກ ຖ້າຫາກຜູ້ເຂົ້າຮ່ວມ SNYC ຜູ້ອື່ນໆ ຢູ່ໃນອັນຕະລາຍ, ເຈັບປ່ວຍ ຫຼື ຄິດຈະເຄື່ອນຍ້າຍ
- ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ສາມາດຊ່ວຍ ຜູ້ໃຫຍ່ ທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ໃນການກະກຽມບົດຮຽນ ຖ້າຫາກວ່າມັນລົບກວນການຮຽນຂອງພວກເຂົາ ຫຼື ເຮັດໃຫ້ພວກເຂົາຢູ່ໃນອັນຕະລາຍ
- ອີງຕາມນະໂຍບາຍການປົກປ້ອງເດັກ, ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ບໍ່ຄວນຢູ່ຄົນດຽວຕາມລຳພັງໃນຫ້ອງ ກັບຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC.

## ສະຫຼຸບ

ອະທິບາຍວ່າ ການເປັນ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ມີຜົນປະໂຫຍດຫຼາຍຢ່າງ. ມັນສາມາດຊ່ວຍສ້າງທັກສະ ແລະ ໃຫ້ປະສົບການ ທີ່ຈະຊ່ວຍພວກເຂົາໃນອະນາຄົດ.

ອະທິບາຍວ່າ ຖ້າ ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ເຂົ້າຮ່ວມທຸກບົດຮຽນ ພວກເຂົາຈະໄດ້ຮັບ ລາງວັນແຮງຈູງໃຈລະດັບ 3 ແລະ ມີສິດສະໝັກເປັນ ຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ໃນອະນາຄົດ.

ເຕືອນໄວໜຸ່ມວ່າ SNYC ແມ່ນສະຖານທີ່ ທີ່ດີ ສຳລັບການພົບປະກັບໝູ່ຄູ່ ແລະ ສຳລັບຮຽນຮູ້ທັກສະ ທີ່ສາມາດຊ່ວຍພວກເຂົາໃນການປົກປ້ອງຕົນເອງ.

ແລະ ສຸດທ້າຍ, ບອກໄວໜຸ່ມວ່າ ພວກເຂົາໄດ້ຮັບໂອກາດ ໃນການເປັນຜູ້ນຳໃນຊຸມຊົນຂອງພວກເຂົາ ແລະ ອົງການສຸພະນິມິດ ແລະ ຜູ້ອຳນວຍຄວາມສະດວກຂອງ SNYC ຫວັງວ່າຈະໄດ້ຍິນ ສິ່ງທີ່ດີໆທີ່ພວກເຂົາຈະດຳເນີນ. ຂອບໃຈບັນດາຜູ້ເຂົ້າຮ່ວມທັງໝົດສຳລັບ ການເຂົ້າຮ່ວມ. ມອບໃບຢັ້ງຢືນ.

# IS 14a: ຄຳຖາມ ເກມໝາກບານທວນຄວາມຈຳ ຊຸດທີ 2

1. SNYC ແມ່ນຫຍັງ?
2. ຜູ້ອຳນວຍຄວາມສະດວກແມ່ນຫຍັງ?
3. ເຄື່ອງມືການນຳທາງແບບສະຫຼາດ ແມ່ນຫຍັງ?
4. IS ແມ່ນຫຍັງ?
5. ປຶ້ມນ້ອຍການນຳທາງແບບສະຫຼາດແມ່ນຫຍັງ?
6. ບົດຮຽນແມ່ນຫຍັງ?
7. ບົດຮຽນໜຶ່ງ ຍາວປານໃດ?
8. ການຄ້າມະນຸດແມ່ນຫຍັງ?
9. ການເຄື່ອນຍ້າຍແມ່ນຫຍັງ?
10. ໄວໜຸ່ມຈະໄດ້ຮຽນຫຍັງ ຢູ່ໃນ SNYC?
11. ທັກສະຊີວິດແມ່ນຫຍັງ?
12. ເຈົ້າໄດ້ຫຍັງສຳລັບການເຂົ້າຮ່ວມບົດຮຽນ?
13. ເຈົ້າຕ້ອງເຂົ້າຮ່ວມຈັກບົດຮຽນເພື່ອໃຫ້ໄດ້ລາງວັນລະດັບ 3?

***ຄຳຕອບສຳລັບຄຳຖາມ 1–13 ແມ່ນຢູ່ໃນບົດຮຽນທີ 1.***

14. ທັກສະໃດແດ່ ທີ່ເຈົ້າສາມາດນຳໃຊ້ ເພື່ອອຳນວຍຄວາມສະດວກການສົນທະນາ?

***ຄຳຕອບ:***

- ການລວມເອົາໄວໜຸ່ມຜູ້ທີ່ມິດງຽບ.
- ການຈັດຄຳເວົ້າຄືນ.
- ການຈຳກັດຜູ້ທີ່ເວົ້າຫຼາຍ.
- ການຟັງ.
- ການຖາມຫຼາຍໆຄຳຖາມ.

15. ໄວໜຸ່ມທີ່ເປັນຜູ້ອຳນວຍຄວາມສະດວກຂອງ SNYC ຈະສາມາດຊ່ວຍຜູ້ເຂົ້າຮ່ວມທີ່ບໍ່ສາມາດອ່ານ ແນວໃດ?

***ຄຳຕອບ:***

- ນັ່ງໃກ້ພວກເຂົາ ແລະ ອ່ານ ເຈັ້ຍແຜ່ນໃຫຍ່ອອກສຽງໃຫ້ຟັງ.
- ຈັບຄູ່ກັບພວກເຂົາ ເມື່ອແບ່ງກຸ່ມເປັນຄູ່.
- ຮ່ວມກັບພວກເຂົາໃນການສົນທະນາກຸ່ມນ້ອຍ.
- ປະຕິບັດຕໍ່ພວກເຂົາດ້ວຍຄວາມເຄົາລົບນັບຖື.
- ບໍ່ບອກ ໄວ້ໜຸ່ມຜູ້ເຂົ້າຮ່ວມຜູ້ອື່ນໆ ວ່າພວກເຂົາບໍ່ສາມາດອ່ານໄດ້.

16. ຖ້າຫາກ ສະມາຊິກ ຂອງ SNYC ເຊົາມາຮຽນບົດຮຽນ, ເຈົ້າຄວນເຮັດແນວໃດ?

***ຄຳຕອບ:***

- ຖາມໝູ່ຂອງໄວໜຸ່ມຜູ້ດັ່ງກ່າວນັ້ນ ວ່າຍ້ອນຫຍັງ ລາວຈຶ່ງເຊົາມາ ແລະ ບອກຜູ້ໃຫຍ່ທີ່ເປັນຜູ້ອຳນວຍຄວາມສະດວກ.

ຖ້າຫາກ ສະມາຊິກ ຂອງ SNYC ເຊີນມາ ຍ້ອນວ່າພໍ່ ຫຼື ແມ່ ຂອງລາວຕີ, ເຈົ້າຄວນໄປບ້ານລາວບໍ່?

***ຄໍາຕອບ:***

- ບໍ່, ເຈົ້າຄວນ ບອກ ຜູ້ໃຫຍ່ທີ່ເປັນຜູ້ອໍານວຍຄວາມສະດວກ ກ່ຽວກັບບັນຫາດັ່ງກ່າວ.

17. ຖ້າເຈົ້າໄດ້ຍິນວ່າສະມາຊິກ ຂອງ SNYC ເປັນໄຂ້, ເຈົ້າຄວນເຮັດແນວໃດ?

***ຄໍາຕອບ:***

- ບອກ ຜູ້ໃຫຍ່ທີ່ເປັນຜູ້ອໍານວຍຄວາມສະດວກ.

18.ຖ້າ ໝູ່ຜູ້ໜຶ່ງ ທີ່ຢູ່ໃນ SNYC ບອກເຈົ້າວ່າ ລາວກໍາລັງວາງແຜນ ຈະເຄື່ອນຍ້າຍ, ເຈົ້າຄວນ ເຮັດແນວໃດ?

***ຄໍາຕອບ:***

- ບອກ ຜູ້ໃຫຍ່ທີ່ເປັນຜູ້ອໍານວຍຄວາມສະດວກ.

ອົງການສຸພະນິມິດສາກົນ
ຫ້ອງການພາກພື້ນອາຊີ ຕາເວັນອອກ
ທີ່ຢູ່: ອາຄານສູນທຸລະກິດ ບາງກອກ, ຊັ້ນ 13
29 ສຸຂຸມວິດ 63 (ຖະໜົນ ເອກະໄມ) ຄອງທົນ ເໜືອ,
ວັດທະນະ, ບາງກອກ 10110 ປະເທດໄທ
ໂທ: +66-2-3916155; +66-2-3818861
ແຟັກ: +66-2-3811976
http://www.wvi.org/asiapacific